ໂຄງການສົ່ງເສີມ
ການຮຽນຮູ້ກ່ຽວກັບທີ່ດິນ
LIFE




# ການສ້າງວັງສະຫງວນຢ່າງມີສ່ວນ ຮ່ວມກັບຊຸມຊົນ






## ກໍລະນີສຶກສາ:

ບ້ານນ້ຳເອ້ອນ ເມືອງ ໄຊຈຳພອນ ແຂວງ ບໍລິຄຳໄຊ

ບ້ານສົມສະໜຸກ ເມືອງ ມະຫາໄຊ ແຂວງ ຄຳມ່ວນ



ຂຽນໂດຍ: ເລໂນ່ນ ບຸນເພັງ
ມຸດສະຫວັນ ເຟື່ອງສະຫວັນ

ກວດແກ້ໂດຍ: ເລນາ ວີໄລເພັດ

ທັນວາ 2024

Village Focus International
Brot für die Welt
UNDEF The United Nations Democracy Fund
FNUD Fonds des Nations Unies pour la démocratie




# ກໍລະນີສຶກສາ: ການສ້າງວັງສະຫງວນຢ່າງມີສ່ວນຮ່ວມກັບຊຸມຊົນ ຢູ່ ບ້ານນໍ້າອ້ອມ ເມືອງ ໄຊຈໍາພອນ ແຂວງ ບໍລິຄໍາໄຊ ແລະ ບ້ານສົມສະໜຸກ ເມືອງ ມະຫາໄຊ ແຂວງ ຄໍາມ່ວນ

ຂຽນໂດຍ: ເລໂນ່ນ ບຸນເພັງ ແລະ ນຸດສະຫວັນ ເພື່ອງສະຫວັນ

ກວດແກ້ໂດຍ: ເລນາ ວີໄລເພັດ

ສະໜັບສະໜູນເກັບກໍາຂໍ້ມູນຢູ່ໃນພາກສະໜາມໂດຍ:

ກຸ່ມອາສາສະໝັກ ບ້ານສົມສະໜຸກ:

ພຣະ ສົມປອງ ພົງອຸດົມ, ນາງ ພອນທິບ ສີສົມບຸນ, ທ້າວ ໂຈຕະນະວົງ ທໍາມະວົງ ແລະ ທ້າວ ເຢັ່ງຈື ລໍ່ຢ່າງ

ກຸ່ມອາສາສະໝັກ ບ້ານນໍ້າອ້ອມ:

ທ້າວ ບຸນມີ ປ່າແຈ້ງຢ່າງ, ທ້າວ ມົວວື່ຊົ່ງ ເລົ່າປໍລີ, ນາງ ທັດສະພອນ ເຂັມຄໍາ ແລະ ນາງ ວິພາລັກ ເລືອງຈັນ

ຮູບພາຍໜ້າປົກ (ຮູບປ້າຍຫ້າມຫາປາ ເຂດວັງສະຫງວນ) ແລະ ຫຼັງປົກ ໂດຍ: ພຣະ ສົມປອງ ພົງອຸດົມ

ວີດີໂອກ່ຽວກັບການສ້າງວັງສະຫງວນຢູ່ສອງບ້ານ

ບ້ານນໍ້າອ້ອມ — ບ້ານສົມສະໜຸກ

ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ ເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ (ໂຄງການໄລຟ໌)

The Land Learning Initiative for Food Security Enhancement (LIFE) project

https://vfi.villagefocus.org/the-life-project/

LIFE project/ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ

021 312 519

LIFE project

# ສາລະບານ


ການຮ່ວມມືລະຫວ່າງ ຄະນະນິຕິສາດ ແລະ ລັດຖະສາດ ແລະ ໂຄງການໄລຟ໌ 1

ຄວາມສຳຄັນຂອງການສ້າງວັງສະຫງວນ ແລະ ການອະນຸລັກສັດນ້ຳ 2

ວິທີການສຶກສາ 3

ຜົນໄດ້ຮັບຈາກການສຶກສາ 5

1. ຂໍ້ມູນໂດຍສັງເຂບຂອງພື້ນທີ່ຂອງກໍລະນີສຶກສາ 5

    1.1. ບ້ານສົມສະໜຸກ, ເມືອງມະຫາໄຊ ແຂວງຄຳມ່ວນ 5

    1.2. ບ້ານນ້ຳອ້ອນ ເມືອງໄຊຈຳພອນ ແຂວງບໍລິຄຳໄຊ 6

2. ກິດຈະກຳການເກັບກຳຂໍ້ມູນ ແລະ ການເຜີຍແຜ່ຂໍ້ມູນທາງດ້ານກົດໝາຍຢູ່ຂັ້ນບ້ານ 7

    2.1 ການເກັບກຳຂໍ້ມູນກ່ຽວກັບການປ່ຽນແປງທາງດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 7

    2.2. ກິດຈະກຳການປູກຈິດສຳນຶກທາງດ້ານກົດໝາຍກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 9

3. ກິດຈະກຳການສ້າງວັງສະຫງວນແບບມີສ່ວນຮ່ວມກັບຂັ້ນບ້ານ 11

    3.1. ກົດລະບຽບຄຸ້ມຄອງວັງສະຫງວນບ້ານສົມສະໜຸກ-ບ້ານດ້າງ ເມືອງມະຫາໄຊ ແຂວງຄຳມ່ວນ 12

    3.2. ກົດລະບຽບຄຸ້ມຄອງວັງສະຫງວນບ້ານນ້ຳອ້ອນ ເມືອງໄຊຈຳພອນ ແຂວງ ບໍລິຄຳໄຊ 14

4. ບັນດານິຕິກຳ, ນະໂຍບາຍ ແລະ ແຜນຍຸດທະສາດທີ່ກ່ຽວຂ້ອງກັບການສ້າງວັງສະຫງວນ ແລະ ບາງບົດຮຽນທີ່ດີຈາກການວັງສະຫງວນຢູ່ໃນປະເທດລາວ 17

    4.1. ນິຕິກຳ ແລະ ນະໂຍບາຍທີ່ກ່ຽວຂ້ອງ 17

    4.2. ບົດຮຽນທີ່ດີຈາກການສ້າງຕັ້ງວັງສະຫງວນ 18

5. ບົດຮຽນຈາກການເກັບກຳກໍລະນີສຶກສາຈາກສອງພື້ນທີ່ 19

    5.1. ການປ່ຽນແປງທາງດ້ານຄວາມຮູ້ ແລະ ທັກສະຂອງນັກສຶກສາ ທີ່ເປັນອາສາສະໝັກ 19

    5.2. ຜົນໄດ້ຮັບທີ່ດີຕໍ່ກັບຂັ້ນບ້ານ ຈາກການສ້າງຕັ້ງວັງສະຫງວນ 21

    5.3. ສິ່ງເສີມການເຮັດວຽກຮ່ວມກັນລະຫວ່າງຂັ້ນເມືອງ ແລະ ໂຄງການ 22

    5.4. ການສະໜັບສະໜູນທີ່ດີຂອງ ຄະນະນິຕິສາດ ແລະ ລັດຖະສາດ 23

    5.5. ການສະໜັບສະໜູນທາງດ້ານຂໍ້ມູນຈາກຄູ່ຮ່ວມງານ ພາກລັດ ແລະ ອົງການຈັດຕັ້ງສາກົນ 24

6. ຂໍ້ສະເໜີແນະ ແລະ ຄຳແນະນຳ 25

    6.1. ຕໍ່ກັບອຳນາດການປົກຄອງເມືອງ 25

    6.2. ຕໍ່ກັບຂັ້ນບ້ານ 25

ເອກະສານຊ້ອນທ້າຍ 26

## ການຮ່ວມມືລະຫວ່າງ ຄະນະນິຕິສາດ ແລະ ລັດຖະສາດ ແລະ ໂຄງການໄລຟ໌

ນັບແຕ່ຕົ້ນປີ 2019 ເປັນຕົ້ນມາ ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ ຫຼື ເອີ້ນຊື່ຫຍໍ້ວ່າ ໂຄງການໄລຟ໌ ໄດ້ມີການດຳເນີນກິດຈະກຳໃນການສ້າງຄວາມອາດສາມາດໃຫ້ໄວໜຸ່ມ ຈາກຄະນະນິຕິສາດ ແລະ ລັດຖະສາດ (ຄນລ), ມະຫາວິທະຍາໄລແຫ່ງຊາດ ໂດຍເນັ້ນການພັດທະນາທັກສະ, ຄວາມຮູ້ກ່ຽວກັບສິດທິໃນການນຳໃຊ້ທີ່ດິນ ແລະ ການເຂົ້າເຖິງລະບົບຍຸຕິທຳ ໃຫ້ແກ່ໄວໜຸ່ມທີ່ເຂົ້າຮ່ວມໂຄງການ ເພື່ອໃຫ້ພວກເຂົາເຈົ້າສາມາດເປັນຕົວແທນໃນການປົກປ້ອງສິດຂອງຊຸມຊົນເຂົາເຈົ້າເອງ ຜ່ານວິທີການທີ່ມີຄວາມຫຼາກຫຼາຍທີ່ແທດເໝາະກັບໄວໜຸ່ມ ແລະ ຊຸມຊົນທີ່ເປັນບ້ານເກີດຂອງອາສາສະໝັກ.

ໃນປັດຈຸບັນ ພາຍໃຕ້ການສະໜັບສະໜູນຂອງ ອົງການເຂົ້າຈີ່ໂລກ (Bread for the World ຫຼື BftW) ແລະ UN Democracy Fund (UNDEF) ໃນໄລຍະປີ 2022-2024 ອາສາສະໝັກໂຄງການໄລຟ໌ປະກອບມີ 57 ຄົນ ທີ່ເປັນນັກສຶກສາຈາກ ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ ເຊິ່ງມີບ້ານເປົ້າໝາຍຈຳນວນ 20 ບ້ານ. ກິດຈະກຳໄລຍະດັ່ງກ່າວນີ້ ແມ່ນສືບເນື່ອງມາຈາກຜົນໄດ້ຮັບທີ່ດີຂອງໂຄງການໄລຍະຜ່ານມາໃນການສ້າງຄວາມເຂັ້ມແຂງໃຫ້ກັບນັກສຶກສາ ເພື່ອສ້າງການປ່ຽນແປງທີ່ດີໃນຊຸມຊົນ ທີ່ເປັນບ້ານເກີດຂອງອາສາສະໝັກ ໂດຍແນໃສ່ການໃຊ້ຄວາມຮູ້ທາງດ້ານກົດໝາຍໃນການປົກປັກຮັກສາຊັບພະຍາກອນທຳມະຊາດ, ແກ້ໄຂບັນຫາທີ່ຕິດພັນກັບທີ່ດິນ ແລະ ສິ່ງແວດລ້ອມ ແລະ ການສົ່ງເສີມຊຸມຊົນໃຫ້ເຂົ້າເຖິງຄວາມຍຸຕິທຳ.

ໃນໂຄງການໄລຍະປັດຈຸບັນ ພາຍໃຕ້ຫົວຂໍ້ **"ການເສີມສ້າງຄວາມເຂັ້ມແຂງໃຫ້ນັກສຶກສາກົດໝາຍ ເພື່ອສົ່ງ ເສີມຊຸມຊົນໃນການເຂົ້າເຖິງຄວາມຍຸຕິທຳ"** ເປັນໝາກຜົນຈາກການຮ່ວມມືເປັນຢ່າງດີ ລະຫວ່າງ ຄນລ ແລະ ໂຄງການໄລຟ໌. ຈາກບົດຮຽນທີ່ດີຂອງການຈັດຕັ້ງປະຕິບັດກິດຈະກຳໂຄງການໃນໄລຍະທີ່ຜ່ານມາ ໂດຍສະເພາະການສ້າງປ່າປ້ອງກັນຂັ້ນບ້ານຢ່າງມີສ່ວນຮ່ວມ ແລະ ການສະເໜີຂໍ້ຝຶກອົບຮົມເພີ່ມເຕີມຈາກຂັ້ນເມືອງ ແລະ ຂັ້ນບ້ານ ໄດ້ສົ່ງຜົນໃຫ້ມີການຂະຫຍາຍກຸ່ມອາສາສະໝັກໃຫ້ກວ້າງຂວາງຂຶ້ນກວ່າເກົ່າ ແລະ ໄດ້ມີການພົບພັນກັບເຄືອຂ່າຍອື່ນໆເພີ່ມຫຼາຍຂຶ້ນ. ໃນປີນີ້ ຫຼັງຈາກຈັດຕັ້ງປະຕິບັດກິດຈະກຳຄັ້ງທີ 1 (ການເກັບກຳຂໍ້ມູນ) ແລະ ຄັ້ງທີ 2 (ການເຜີຍແຜ່ຂໍ້ມູນທາງດ້ານກົດໝາຍ) ໃນ 20 ບ້ານເປົ້າໝາຍ ແມ່ນໄດ້ຂະຫຍາຍຕໍ່ກິດຈະກຳ ຕາມຄຳສະເໜີຂອງຂັ້ນບ້ານ ແລະ ຂັ້ນເມືອງ ເຊິ່ງໃນນັ້ນມີຈຳນວນ 12 ບ້ານ ທີ່ສືບຕໍ່ການເຜີຍແຜ່ກົດໝາຍກ່ຽວກັບທີ່ດິນ ແລະ ສິ່ງແວດລ້ອມ ໂດຍໄດ້ເນັ້ນໃສ່ບັນຫາຫຼັກໆຂອງບ້ານ ແລະ ການນຳໃຊ້ຂໍ້ມູນດັ່ງກ່າວໃນການສະໜັບສະໜູນຕໍ່ກັບການແກ້ໄຂບັນຫາ, ໃນຈຳນວນ 5 ບ້ານແມ່ນໄດ້ຮ່ວມກັບຂັ້ນບ້ານ ໃນການກຳນົດເຂດ ແລະ ສ້າງລະບຽບຄຸ້ມປ່າປ້ອງກັນ ແລະ ປ່າສະຫງວນຂັ້ນບ້ານ ແລະ ອີກ 2 ບ້ານແມ່ນ ໄດ້ຮ່ວມກັບທາງບ້ານໃນການກຳນົດເຂດ ແລະ ສ້າງລະບຽບຄຸ້ມຄອງວັງສະຫງວນຂັ້ນບ້ານ. ເຊິ່ງກິດຈະກຳດັ່ງກ່າວແມ່ນເກີດຂຶ້ນມາຈາກການສະເໜີຂອງຂັ້ນບ້ານໃນຊ່ວງຂອງການດຳເນີນກິດຈະກຳຄັ້ງທີ 2 ຂອງກຸ່ມອາສາສະໝັກໂຄງການໄລຟ໌ລຸ້ນທີ 3.

## ຄວາມສຳຄັນຂອງການສ້າງວັງສະຫງວນ ແລະ ການອະນຸລັກສັດນ້ຳ

ປະເທດລາວເປັນປະເທດທີ່ປະຊາກອນສ່ວນໃຫຍ່ຍັງອາໄສຊັບພະຍາກອນທຳມະຊາດ ໃນການດຳລົງຊີວິດ ໂດຍສະເພາະປະຊາຊົນບັນດາເຜົ່າໃນເຂດຊົນນະບົດ ທັງຈາກແຫຼ່ງປ່າໄມ້ ແລະ ແມ່ນ້ຳ. ເວົ້າສະເພາະຄືການດຳລົງຊີວິດທີ່ຂອງປະຊາຊົນທີ່ຢູ່ລ້ອງຕາມແມ່ນ້ຳຈະເຫັນວ່າເຂົາເຈົ້າຍັງອາໄສການຫາປາ ແລະ ສັດນ້ຳຈາກບັນດາຫ້ວຍນ້ຳຕ່າງໆ ເປັນຫຼັກໃນການດຳລົງຊີວິດ ໂດຍສະເພາະແຫຼ່ງອາຫານ ແລະ ບາງຄອບຄົວແມ່ນແຫຼ່ງລາຍໄດ້ດ້ວຍ.

ດ້ວຍທີ່ຕັ້ງ ແລະ ພູມສັນຖານ ປະເທດລາວມີທ່າແຮງຫຼາຍຢ່າງຈາກຄວາມອຸດົມສົມບູນທາງທຳມະຊາດໃນຫຼາຍປີທີ່ຜ່ານມາ. ຕົວຢ່າງ ປາຫຼາຍກວ່າ 481 ສາຍພັນ ແມ່ນຖືກຄົ້ນພົບຢູ່ໃນ ສປປ ລາວ ໃນແຫຼ່ງແມ່ນ້ຳຕ່າງໆພາຍໃນປະເທດ. ເຖິງຢ່າງໃດກໍ່ຕາມ ຫຼາຍປີທີ່ຜ່ານມາ ປະກົດເຫັນວ່າແນວພັນປາແມ່ນມີຈຳນວນຫຼຸດລົງ ອັນເນື່ອງມາຈາກຫຼາຍປັດໄຈເຊັ່ນ: ການປ່ຽນແປງຂອງແມ່ນ້ຳ, ການຫາປາຈຳນວນຫຼາຍຂຶ້ນເກີນຂອບເຂດ ໂດຍສະເພາະແມ່ນເພື່ອການຄ້າຂາຍ ໂດຍມີການນຳໃຊ້ເຄື່ອງມືທີ່ຫາປາແບບດັບສູນເຊັ່ນ: ການໃຊ້ລະເບີດ, ໃສ່ຢາເບື່ອ, ໃຊ້ໄຟຟ້າຊ໋ອດ ແລະ ວິທີການອື່ນໆທີ່ບໍ່ມີຄວາມຍືນຍົງ. ນອກຈາກນັ້ນຍັງມີການຫາປາ ໃນເຂດທີ່ເປັນເຂດວາງໄຂ່ (ໃນລະດູການວາງໄຂ່), ນ້ຳມີການປົນເປື້ອນມົນລະພິດຈາກການນຳໃຊ້ສານເຄມີ (ເຊັ່ນ ຢາຂ້າຫຍ້າ ແລະ ປາບສັດຕູພືດ) ເຂົ້າໃນການກະສິກຳປູກຝັງ, ມີການຂຸດຄົ້ນແຮ່ທາດໃນຂອບເຂດແຫຼ່ງນ້ຳ ແລະ ມີການບຸກລຸກທຳລາຍແຫຼ່ງທີ່ຢູ່ອາໄສຂອງສັດນ້ຳຕ່າງໆ.[1] ຕໍ່ກັບສິ່ງທີ່ເກີດຂຶ້ນນັ້ນໄດ້ສົ່ງຜົນກະທົບໂດຍກົງທີ່ເຮັດໃຫ້ປະຊາກອນປາຫຼຸດລົງ ແລະ ມີປາຫຼາຍຊະນິດໄດ້ສູນ ພັນເຊິ່ງກໍໄດ້ສົ່ງຜົນກະທົບເຊັ່ນດຽວກັນຕໍ່ກັບການປະມົງຂະໜາດນ້ອຍ ທີ່ມີຄວາມສຳຄັນຂອງປະຊາຊົນທີ່ອາໄສແຫຼ່ງນ້ຳໃນການດຳລົງຊີວິດໃນແຫຼ່ງນ້ຳ ຫຼື ຫ້ວຍນ້ຳຕ່າງໆ. ບັນຫາທີ່ເກີດຂຶ້ນຈຶ່ງໄດ້ນຳໄປສູ່ການຊອກຫາຊ່ອງທາງຕ່າງໆໃນການປ້ອງກັນ ແລະ ປົກປ້ອງແຫຼ່ງຊັບພະຍາກອນນ້ຳເພື່ອບໍ່ໃຫ້ສັດນ້ຳ ໂດຍສະເພາະປາສູນພັນໄປ ເຊິ່ງ ການພັດທະນາ ຫຼື ການສ້າງ “ວັງສະຫງວນ” ໄດ້ເປັນຍຸດທະສາດໜຶ່ງ ທີ່ມີຄວາມຊັດເຈນຫຼາຍຂຶ້ນ ຂອງລັດຖະບານ ແລະ ບັນດາອົງການຈັດຕັ້ງທາງສັງຄົມ ເພື່ອອະນຸລັກພັນປາ ໃນທົ່ວປະເທດຂອງລາວ.

ຕາມການບອກເລົ່າຂອງປະຊາຊົນໃນທ້ອງຖິ່ນບອກວ່າ ທີ່ຈິງແລ້ວການສ້າງວັງສະຫງວນປາ ແມ່ນແນວປະຕິ ບັດມາແຕ່ດົນນານແລ້ວ ເຊິ່ງມີເປົ້າໝາຍສຳຄັນເພື່ອອະນຸລັກພັນປາ ແລະ ພື້ນທີ່ບໍ່ໃຫ້ຖືກທຳລາຍ ເຊິ່ງໃນແຕ່ກ່ອນປະ ຊາຊົນຈະມີການຮັບຮູ້ວ່າເປັນເຂດຫວງຫ້າມ ຫຼື ເຂດສັກສິດ ທີ່ບໍ່ໃຫ້ຜູ້ໃດເຂົ້າໄປຢ່າງເດັດຂາດ.

ໃນປັດຈຸບັນ ເນື່ອງຈາກມີການປ່ຽນແປງທາງດ້ານຊັບພະຍາກອນທຳມະຊາດ ການສ້າງວັງສະຫງວນ ເພື່ອຮັກ ສາແນວພັນປາ ແລະ ສັດນ້ຳ ຈຶ່ງເປັນຍຸດທະສາດໜຶ່ງຂອງລັດຖະບານ ສປປລາວ ໃນການກຳນົດ ຫຼື ຄຸ້ມຄອງແຫຼ່ງນ້ຳສາຍສຳຄັນຕ່າງໆ ຂອງ ສປປ ລາວ ເພື່ອອະນຸລັກແນວພັນສັດນ້ຳທີ່ໃກ້ຈະສູນພັນ ແລະ ສັດນ້ຳຊະນິດຕ່າງໆໄວ້ໃຫ້ເກີດຄວາມຍືນຍົງນັ້ນເອງ. ວັງສະຫງວນແມ່ນແຫຼ່ງນ້ຳໃດໜຶ່ງ ທີ່ກຳນົດຂຶ້ນຢູ່ຕາມແມ່ນ້ຳ, ອ່າງເກັບນ້ຳ, ອ່າງຮັບນ້ຳ ທີ່ມີນ້ຳຕະຫຼອດປີ ເພື່ອເປັນແຫຼ່ງທີ່ຢູ່ອາໄສ ແລະ ແຜ່ພັນຢ່າງປອດໄພຂອງສັດນ້ຳ.[2]

ອີງຕາມຂໍ້ມູນຈາກກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ໄດ້ໃຫ້ຮູ້ວ່າ ທົ່ວປະເທດລາວ ມີວັງສະຫງວນ ປະມານ 1,000 ວັງ ແລະ ໃນນັ້ນມີປະມານ 300 ກວ່າວັງ ທີ່ໄດ້ຮັບການສະໜັບສະໜູນ ໂດຍອົງການ WWF Laos ຕໍ່ການສ້າງ ແລະ ສົ່ງເສີມການບໍລິການຄຸ້ມຄອງທີ່ຊຸມຊົນເປັນເຈົ້າການ ເພື່ອຄວາມຍືນຍົງທາງດ້ານຊັບພະຍາກອນທຳມະຊາດ ແລະ ຊີວິດການເປັນຢູ່ຂອງຊຸມຊົນ ທີ່ໝັ້ນຄົງ.[3]

ເນື່ອງຈາກວ່າ ປະເທດລາວ ຍັງບໍ່ທັນໄດ້ມີນິຕິກຳສະເພາະກ່ຽວກັບຂັ້ນຕອນໃນການສ້າງວັງສະຫງວນ ສະນັ້ນ ເຂດວັງສະຫງວນທີ່ກຳນົດຂຶ້ນມາ ແມ່ນຈະມີຂໍ້ຫ້າມ ຫຼື ກົດລະບຽບໃນການຄຸ້ມຄອງທີ່ແຕກຕ່າງກັນໄປຕາມແຕ່ລະພື້ນທີ່, ແຕ່ລະໆດັບ (ລະ

[1]“ຜະລິດຕະພັນຊີວະນາໆພັນກະສິກຳຂອງລາວ ສິບຫົກຊະນິດທີ່ມີທ່າແຮງສູງຕໍ່ການຄ້ຳປະກັນສະບຽງອາຫານ ແລະ ເສີມສ້າງລາຍຮັບໃຫ້ແກ່ປະຊາຊົນ (ໜ້າ 41 ປາຈາກເຂດວັງສະຫງວນ)”, ຂຽນໂດຍ ທ່ານ ອານົງ ຄຳຮຸ່ງ ແລະ ທ່ານ Dirk Van GANSBERGHE, ອົງການສະວິດ ເພື່ອພັດທະນາ ແລະ ການຮ່ວມມືປະຈຳ ສປປ ລາວ: https://lad.nafri.org.la/fulltext/4474-0.pdf

[2] ອີງຕາມ ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ ສະບັບເລກທີ 42/ສພຊ, ລົງວັນທີ 17 ກໍລະກົດ 2023, ມາດຕາ 31 ວັກໜຶ່ງ

[3] WWF Laos: https://tinyurl.com/yzmx39fb ,ເຂົ້າເຖິງວັນທີ 4 ພະຈິກ 2024

ດັບບ້ານ, ເມືອງ ຫຼື ແຂວງ) ໂດຍລວມກໍຄື ເປັນເຂດທີ່ຫ້າມໃຫ້ທຸກຄົນເຂົ້າໄປບຸກລຸກເພື່ອຫາສັດນ້ຳຢ່າງເດັດຂາດ ຫາກລະເມີດແມ່ນຈະຖືກປັບໃໝ່ຕາມລະບຽບການຂອງເຈົ້າໜ້າທີ່ວັງສະຫງວນເຂດນັ້ນໆທີ່ໄດ້ວາງອອກ.

ການສ້າງວັງສະຫງວນ ແລະ ລະບຽບຄຸ້ມຄອງ ແມ່ນແນໃສ່ເພື່ອເພີ່ມຄວາມອຸດົມສົມບູນ ໂດຍສະເພາະຊີວະນາ ໆພັນສັດນ້ຳ ໃນເຂດແມ່ນ້ຳຕ່າງໆ. ພ້ອມນັ້ນກໍ່ເພື່ອຮັກສາຄຸນນະພາບນ້ຳ, ລະບົບນິເວດໃນນ້ຳ ແລະ ຮັກສາຈຳນວນແນວພັດສັດນ້ຳທີ່ອາໄສຢູ່ໃນນ້ຳເຂດນັ້ນໆເອົາໄວ້ໃຫ້ໄດ້ຫຼາຍທີ່ສຸດ ເພື່ອຈະສາມາດຄໍ້າປະກັນໄດ້ວ່າພືດ ແລະ ສັດຈະບໍ່ສູນ ພັນ, ສາມາດແຜ່ພັນໄດ້ຕະຫຼອດປີ.

ຈາກການຈັດຕັ້ງປະຕິບັດກິດຈະກຳຂອງອາສາສະໝັກໂຄງການໄລຟ໌ ຮ່ວມກັບອາສາສະໝັກ ທີ່ເປັນນັກສຶກສາຈາກ ຄະນະນິຕິສາດ ແລະ ລັດຖະສາດ ໃນຊ່ວງປີ 2023-2024 ນີ້ ຕັ້ງແຕ່ກິດຈະກຳຄັ້ງທີ 1 ທີ່ເປັນການເກັບກຳຂໍ້ມູນການປ່ຽນແປງດ້ານທາງຊັບພະຍາກອນຂອງຊຸມຊົນ ແລະ ກິດຈະກຳ ການເຜີຍແຜ່ນິຕິກຳທີ່ຕິດພັນກັບຊັບ ພະຍາກອນປ່າໄມ້, ທີ່ດິນ ແລະ ແມ່ນ້ຳ ພ້ອມກັບການປຶກສາຫາລືເຖິງຄວາມຈຳເປັນ ແລະ ຄວາມຕ້ອງການຂອງຊຸມຊົນ ຈຶ່ງໄດ້ກ້າວໄປສູ່ການສະໜັບສະໜູນຊຸມຊົນ ທີ່ຕ້ອງການປົກປັກຮັກສາແຫຼ່ງນ້ຳ ແລະ ສັດນ້ຳ ເພື່ອຄວາມໝັ້ນຄົງທາງດ້ານສະບຽງອາຫານ ຜ່ານການກຳນົດເຂດ ແລະ ສ້າງແຜນຄຸ້ມຄອງວັງສະຫງວນແບບມີສ່ວນຮ່ວມກັບຊຸມຊົນຢູ່ສອງບ້ານ ທີ່ເປັນບ້ານເກີດຂອງອາສາສະໝັກຂອງໂຄງການໄລຟ໌ຄື: ບ້ານສົມສະໜຸກ-ບ້ານດ້າງ, ເມືອງມະຫາໄຊ, ແຂວງ ຄຳມ່ວນ ແລະ ບ້ານນ້ຳອ້ອນ, ເມືອງໄຊຈຳພອນ, ແຂວງ ບໍລິຄຳໄຊ. ກິດຈະກຳການສ້າງວັງສະຫງວນແບບມີສ່ວນຮ່ວມຂັ້ນບ້ານນີ້ ແມ່ນເປັນກິດຈະກຳທີ່ຕໍ່ຍອດຈາກຜົນໄດ້ຮັບກິດຈະກຳຂອງໄວໜຸ່ມ ຢູ່ໃນຂັ້ນບ້ານທັງສອງຄັ້ງທີ່ຜ່ານມາ. ພ້ອມນັ້ນ ການສ້າງວັງສະຫງວນແມ່ນຍັງໄດ້ສອດຄ້ອງກັບເປົ້າໝາຍຂອງຂັ້ນເມືອງ ທີ່ຢາກໃຫ້ມີການກຳນົດເຂດວັງສະຫງວນໃຫ້ມີໃນທຸກໆບ້ານໃນຂອບເຂດທົ່ວເມືອງໄຊຈຳພອນ.

## ວິທີການສຶກສາ

ການເກັບກຳກໍລະນີສຶກສາຄັ້ງນີ້ ແມ່ນໄດ້ດຳເນີນຢູ່ສອງພື້ນທີ່ຄື: ບ້ານສົມສະໜຸກ-ບ້ານດ້າງ, ເມືອງມະຫາໄຊ, ແຂວງຄຳມ່ວນ ແລະ ບ້ານນ້ຳອ້ອນ, ເມືອງໄຊຈຳພອນ, ແຂວງບໍລິຄຳໄຊ ເຊິ່ງເປັນພື້ນທີ່ການດຳເນີນກິດຈະກຳຂອງອາສາສະໝັກໂຄງການໄລຟ໌ລຸ້ນທີ 3. ສະນັ້ນການເກັບກຳຂໍ້ມູນແມ່ນໄດ້ມີການດຳເນີນມາຢ່າງຕໍ່ເນື່ອງ ຄວບຄູ່ກັບການຈັດຕັ້ງປະຕິບັດກິດຈະກຳຂອງອາສາສະໝັກ ໂດຍສະເພາະການສຳຫຼວດພື້ນທີ່ ເພື່ອເກັບກຳຂໍ້ມູນການປ່ຽນແປງຂອງຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນປ່າໄມ້ ແລະ ແຫຼ່ງນ້ຳ, ຜ່ານການເຮັດກິດຈະກຳຕົວຈິງ ແລະ ການສັງເກດການໂດຍສະເພາະໃນເວລາການເຜີຍແຜ່ຂໍ້ມູນ ແລະ ດຳເນີນກິດຈະກຳປູກຈິດສຳນຶກກ່ຽວກັບຄວາມສຳຄັນຂອງການອະນຸລັກພັນປາ. ການເກັບກຳຂໍ້ມູນຄັ້ງນີ້ ໄດ້ນຳໃຊ້ຫຼາຍຮູບແບບ ເພື່ອຮັບປະກັນການມີສ່ວນຮ່ວມຂອງແຕ່ລະພາກສ່ວນ. ວິທີການຕ່າງໆປະກອບມີ: ການສຳພາດດ່ຽວ, ການສຳພາດເປັນກຸ່ມ, ການເລົ່າເລື່ອງ, ການໃຊ້ແຜນວາດສາຍນ້ຳ ເພື່ອເກັບກຳຂໍ້ມູນກ່ຽວກັບການປ່ຽນແປງ ໂດຍສະເພາະການບົກແຫ້ງຂອງແນວພັນປາ ແລະ ການສຳຫຼວດພື້ນທີ່ຕົວຈິງເຂດທີ່ກຳນົດເປັນວັງສະຫງວນຂອງບ້ານ ແລະ ການທົດລອງຫາປາເພື່ອນຳເອົາຂໍ້ມູນມາປຽບທຽບຄວາມອຸດົມສົມບູນຂອງຊະນິດພັນປາ ກ່ອນ ແລະ ຫຼັງ ການກຳນົດເປັນເຂດວັງສະຫງວນ.

ໃນການສຳພາດແມ່ນພວກເຮົາໄດ້ສຳພາດທັງສະເພາະບຸກຄົນ ແລະ ສຳພາດເປັນກຸ່ມຈາກ ຂັ້ນເມືອງ, ຄະນະບ້ານ ແລະ ປະຊາຊົນພາຍໃນບ້ານ. ໃນການສຳພາດເປັນກຸ່ມ ແມ່ນທີມງານໄດ້ມີການສຳພາດຜ່ານການເຮັດກິດຈະກຳແຜນວາດສາຍນ້ຳ ໂດຍມີການແບ່ງອອກເປັນກຸ່ມຄື: ກຸ່ມຍິງ, ຊາຍ, ຄະນະບ້ານ ແລະ ຂັ້ນເມືອງ (ເຊິ່ງປະກອບດ້ວຍ ຫ້ອງການກະສິກຳ ແລະ ປ່າໄມ້, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການຍຸຕິທຳ ແລະ ຫ້ອງວ່າການເມືອງ). ລາຍລະອຽດຂອງຜູ້ຈຳນວນຜູ້ທີ່ສຳພາດມີດັ່ງນີ້:

| ວິທີການສຳພາດ | ຂໍ້ມູນຈຳນວນຂອງຜູ້ທີ່ສຳພາດ | |
|---|---|---|
| | ເມືອງໄຊຈຳພອນ, ແຂວງບໍລິຄຳໄຊ | ເມືອງ ມະຫາໄຊ, ແຂວງຄຳມ່ວນ |
| ການສຳພາດດ່ຽວ | ຂັ້ນເມືອງ: 3 ຄົນ (ຍິງ 1 ຄົນ)<br>ຄະນະບ້ານ: 2 ຄົນ ( ຍິງ 0 ຄົນ)<br>ຄະນະບ້ານ ບ້ານອື່ນ: 1 ຄົນ (ຍິງ 0 ຄົນ)<br>ຊາວບ້ານ: 4 ຄົນ (ຍິງ 1 ຄົນ)<br>ອາຈານ ຄມລ: 1 ຄົນ | ຂັ້ນເມືອງ: 2 ຄົນ (ຍິງ 0 ຄົນ)<br>ຄະນະບ້ານ 2 ບ້ານ: 6 ຄົນ (ຍິງ 1 ຄົນ)<br>ຊາວບ້ານ: 6 ຄົນ (ຍິງ 5 ຄົນ)<br>ອາຈານ ຄມລ: 1 ຄົນ |
| ການສຳພາດ ຜ່ານການແຕ້ມແຜນອາດສາຍນ້ຳ (ແບບກຸ່ມ) | ຂັ້ນເມືອງ: 4 ຄົນ ( ຍິງ 1 ຄົນ)<br>ຄະນະບ້ານ: 3 ຄົນ (ຍິງ 0 ຄົນ)<br>ຊາວບ້ານ: 20 ຄົນ (ຍິງ 6 ຄົນ) | ຂັ້ນເມືອງ: 0 ຄົນ<br>ຄະນະບ້ານ: 8 ຄົນ (ຍິງ 0 ຄົນ)<br>ຊາວບ້ານ: 35 ຄົນ (ຍິງ 25 ຄົນ) |
| ການສຳພາດກຸ່ມນັກສຶກສາ | ອາສາສະໝັກ: 4 ຄົນ (ຍິງ 1 ຄົນ) | ອາສາສະໝັກ: 4 ຄົນ (ຍິງ 2 ຄົນ) |
| ຈຳນວນທີ່ຖືກສຳພາດແຕ່ລະເມືອງ | 42 ຄົນ (ຍິງ 10 ຄົນ) | 62 ຄົນ (ຍິງ 31 ຄົນ) |
| **ຈຳນວນລວມທັງໝົດ** | **104 ຄົນ (ຍິງ 41 ຄົນ)** | |

ນອກຈາກນັ້ນ ພວກເຮົາໄດ້ມີການສຶກສາຂໍ້ມູນຂອງບາງເຂດວັງສະຫງວນໃນປະເທດລາວ ເພື່ອເປັນຂໍ້ມູນອ້າງອີງ ສຳລັບຜົນໄດ້ຮັບທີ່ຜ່ານມາຂອງການສ້າງວັງສະຫງວນແບບມີສ່ວນຮ່ວມກັບຊຸມຊົນ ຜ່ານແຫຼ່ງຂ່າວ ແລະ ບົດລາຍງານຂອງອົງການຈັດຕັ້ງທາງສັງຄົມ ແລະ ພາກລັດກ່ຽວກັບການອະນຸລັກພັນປາ ແລະ ການສ້າງວັງສະຫງວນຢູ່ພາຍໃນປະເທດລາວ.




ຮູບທີ 1: ການເກັບກຳຂໍ້ມູນ ຢູ່ບ້ານສົມສະໜຸກ




ຮູບທີ 2: ການເກັບກຳຂໍ້ມູນ ຢູ່ບ້ານນ້ຳອ້ອນ

# ຜົນໄດ້ຮັບຈາກການສຶກສາ

## 1. ຂໍ້ມູນໂດຍສັງເຂບຂອງພື້ນທີ່ຂອງກໍລະນີສຶກສາ

### 1.1. ບ້ານສົມສະໜຸກ, ເມືອງມະຫາໄຊ ແຂວງຄຳມ່ວນ

ບ້ານ ສົມສະໜຸກ ເປັນບ້ານໜຶ່ງທີ່ນອນຢູ່ໃນ 67 ບ້ານຂອງເມືອງມະຫາໄຊ ເຊິ່ງບ້ານແມ່ນຕັ້ງຢູ່ຫວ່າງກາງ ລະ ຫວ່າງ ບ້ານດ້າງ ແລະ ບ້ານ ນາກຽວ ໂດຍທິດເໜືອຕິດກັບ ບ້ານ ນາກຽວ, ທິດໃຕ້ ຕິດກັບບ້ານໂພວາ, ທິດຕາເວັນອອກຕິດກັບ ບ້ານດ້າງ, ທິດຕາເວັນຕົກ ຕິດກັບ ບ້ານແກ້ງສະຫວ່າງ. ບ້ານ ສົມສະໜຸກ ມີສອງຊົນເຜົ່າຄື: ຊົນເຜົ່າລາວລຸ່ມ ແລະ ຊົນເຜົ່າມະກອງ. ຈຳນວນຄອບຄົວທັງໝົດມີ 78 ຄອບຄົວ, ມີ 98 ຫຼັງຄາເຮືອນ ຈຳນວນພົນລະເມືອງທັງໝົດມີ 500 ຄົນ, ຍິງ 196 ຄົນ. ອາຊີບຫຼັກຂອງປະຊາຊົນແມ່ນການເຮັດນາ ແລະ ການຫາປາເປັນຫຼັກ ໂດຍສະເພາະແມ່ນແມ່ຍິງ; ພ້ອມນັ້ນຜູ້ຊາຍທີ່ເປັນໄວໜຸ່ມຫຼາຍຄົນແມ່ນໄດ້ເປັນແຮງງານຢູ່ໂຮງງານທັງພາຍໃນ ແລະ ຕ່າງປະເທດ. ເນື່ອງຈາກບ້ານສົມສະໜຸກ ຕິດກັບແມ່ນ້ຳເປັນສ່ວນໃຫຍ່ ເຊັ່ນ ເຊບັ້ງໄຟ ທີ່ເປັນແມ່ນ້ຳສຳຄັນທີ່ໄຫຼຜ່ານບ້ານ ສະນັ້ນການດຳລົງຊີວິດຂອງປະຊາຊົນຈຶ່ງໄດ້ອາໄສແມ່ນ້ຳດັ່ງກ່າວ ພ້ອມນັ້ນ ກໍ່ຍັງມີຫ້ວຍນ້ຳຕ່າງໆທີ່ເປັນແຫຼ່ງອາຫານທີ່ສຳຄັນຂອງປະຊາຊົນຢູ່ໃນເຂດບ້ານສົມສະໜຸກ ໂດຍສະເພາະແມ່ນຫ້ວຍເຈົ່າ. ໃນຫຼາຍປີມານີ້ເນື່ອງຈາກສະພາບຂອງແມ່ນ້ຳເຊບັ້ງໄຟ ມີການປ່ຽນແປງຫຼາຍ ແລະ ບໍ່ອຸດົມສົມບູນຄືແຕ່ກ່ອນແລ້ວ ປະຊາຊົນພາຍໃນບ້ານຈຶ່ງໄດ້ອາໄສບັນດາຫ້ວຍນ້ຳຕ່າງໆ ໂດຍສະເພາະແມ່ນ ຫ້ວຍເຈົ່າ ໃນການຊອກຫາປູປາ ແລະ ສັດນ້ຳອື່ນໆເພື່ອເປັນແຫຼ່ງອາຫານ ຫຼື ສິນຄ້າຂາຍໃນທ້ອງຕະຫຼາດ.

ອີງຕາມການສົນທະນາກັບປະຊາຊົນ ການຫາປາໃນເມື່ອກ່ອນບໍ່ວ່າຈະຢູ່ຕາມສາຍເຊໃຫຍ່ ຫຼື ຫ້ວຍນ້ຳຕ່າງໆ ທີ່ຢູ່ອ້ອມແອ້ມບໍລິເວນເຂດບ້ານ ຫຼັກໆແມ່ນໄດ້ນຳມາເປັນແຫຼ່ງອາຫານ ແລະ ແປຮູບອາຫານໄວ້ບໍລິໂພກຍາວນານ ເຊັ່ນ: ການເຮັດປາແດກ, ປາແຫ້ງເປັນຕົ້ນ. ແຕ່ໃນປັດຈຸບັນ ນອກຈາກນຳມາເປັນອາຫານພາຍໃນຄົວເຮືອນແລ້ວ ກໍ່ຍັງນຳໄປເປັນສິນຄ້າທັງພາຍໃນບ້ານ ແລະ ນອກບ້ານ ຜ່ານແມ່ຄ້າຄົນກາງ ຈຶ່ງເຮັດໃຫ້ມີການຫາປາຫຼາຍຂຶ້ນໃນທຸກໆປີ ຈົນນຳໄປສູ່ການຫາປາແບບສູນພັນ ໂດຍບໍ່ໄດ້ຄຳນຶງເຖິງຊ່ວງເວລາທີ່ເໝາະສົມ, ມີການນຳໃຊ້ເຄື່ອງມືຫາປາທີ່ຜິດກົດໝາຍຈົນເຮັດໃຫ້ມີການທຳລາຍບ່ອນລີ້ຊ້ອນຂອງປາ ແລະ ສັດ ນ້ຳອື່ນເຊິ່ງເປັນສາເຫດນຳໄປສູ່ ການຫຼຸດລົງ ແລະ ການສູນພັນຂອງປະຊາກອນປາ ເຊິ່ງບັນຫາດັ່ງກ່າວ ໄດ້ກາຍເປັນບັນຫາໜຶ່ງທີ່ປະຊາຊົນມີຄວາມກັງວົນ ແລະ ມີຜົນສະທ້ອນຕໍ່ຄວາມໝັ້ນຄົງທາງດ້ານສະບຽງອາຫານຂອງປະຊາຊົນພາຍໃນບ້ານ ແລະ ບ້ານອ້ອມຂ້າງ. ພ້ອມນັ້ນກໍ່ກາຍໄປສູ່ການສູນເສຍຄວາມສົມດູນທາງດ້ານລະບົບນິເວດ.




ຮູບທີ 3: ແຜນທີ່ບ້ານສົມສະໜຸກ-ບ້ານດ້າງ, ເມືອງມະຫາໄຊ, ແຂວງຄຳມ່ວນ

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງມະຫາໄຊ ໃຫ້ຮູ້ວ່າ ທາງເມືອງແມ່ນມີຄວາມທ້າທາຍ ເນື່ອງຈາກວິຊາການສະເພາະດ້ານແມ່ນມີໜ້ອຍ ແຕ່ບັນຫາທີ່ເກີດຂຶ້ນກ່ຽວກັບການຄຸ້ມຄອງແຫຼ່ງນ້ຳ ໂດຍສະເພາະກໍ່ຄືການຫາປາແບບຜິດກົດໝາຍ ແມ່ນພັດມີເພີ່ມຫຼາຍຂຶ້ນ ອັນເນື່ອງມາຈາກຄວາມຕ້ອງການທີ່ມີເພີ່ມຂຶ້ນ ແລະ ໃນປັດຈຸບັນກໍ່ມີເຄື່ອງມືຫາປາທີ່ດັບສູນທີ່ເຂົາເຈົ້າສາມາດຫາໄດ້ໃນທ້ອງຕະຫຼາດ; ພ້ອມນັ້ນທາງຂັ້ນເມືອງກໍ່ມີງົບປະມານຈຳກັດ ເຮັດໃຫ້ການແກ້ໄຂນັ້ນຍັງບໍ່ທົ່ວເຖິງທຸກໆບ້ານ ເຊິ່ງຈະຕ້ອງໄດ້ອີງໃສ່ການຈັດຕັ້ງຂອງບ້ານເປັນຫຼັກ. ສະນັ້ນຈຶ່ງເຫັນວ່າ ກິດຈະກຳການສ້າງວັງສະຫງວນ ທີ່ຈັດຕັ້ງປະຕິບັດຢູ່ບ້ານສົມສະໜຸກ ແມ່ນສອດຄ່ອງກັບທາງຂັ້ນເມືອງມະຫາໄຊໂດຍກົງ ເພື່ອເປັນການອະນຸລັກສັດນ້ຳໃຫ້ມີຄວາມຍືນຍົງ ແລະ ມີຄວາມອຸດົມສົມບູນຍິ່ງຂຶ້ນ.

## 1.2. ບ້ານນ້ຳອ້ອນ ເມືອງໄຊຈຳພອນ ແຂວງບໍລິຄຳໄຊ

ບ້ານນ້ຳອ້ອນ ເປັນບ້ານທີ່ໄດ້ສ້າງຂຶ້ນມາ ແຕ່ສະໄໝປະເທດໄດ້ຮັບການປົດປ່ອຍ;[4] ຕາມການເກັບກຳຂໍ້ມູນຈາກປະຊາຊົນພາຍໃນບ້ານແມ່ນບໍ່ຈື່ວ່າ ບ້ານເລີ່ມຕົ້ນສ້າງຕັ້ງຂຶ້ນມາແຕ່ປີໃດແທ້ ເນື່ອງຈາກບໍ່ໄດ້ມີເອກະສານໃດໆລະບຸຂໍ້ມູນຂອງໄວ້. ໃນອະດີດບ້ານນ້ຳອ້ອນເປັນບ້ານນ້ອຍ ແລະ ມີປະຊາກອນບໍ່ຫຼາຍ ແລະ ອ້ອມຮອບດ້ວຍປ່າໄມ້ຕຶບໜາ. ໃນປັດຈຸບັນ ບ້ານນ້ຳອ້ອນໄດ້ກາຍເປັນບ້ານ ທີ່ຕັ້ງຢູ່ເທດສະບານເມືອງໄຊຈຳພອນ (ບ້ານເທດສະບານໃໝ່) ເຊິ່ງແຕ່ກ່ອນເທດສະບານຂອງເມືອງໄຊຈຳພອນ ແມ່ນຕັ້ງຢູ່ບ້ານໂພນສີ; ແຕ່ເນື່ອງຈາກເຫັນວ່າ ສະພາບພູມສັນຖານຂອງບ້ານນ້ຳອ້ອນ ແມ່ນມີຄວາມເໝາະສົມກວ່າ ສະນັ້ນຈຶ່ງໄດ້ຍ້າຍເທດສະບານຂອງເມືອງມາຕັ້ງຢູ່ ບ້ານນ້ຳອ້ອນຈົນເຖິງປັດຈຸບັນ. ບ້ານນ້ຳອ້ອນ ມີຂອບເຂດຊາຍແດນຄື ທິດເໜືອ ຕິດກັບ ພູຕຶ່ງຫຶງ, ບ້ານສີບຄີ ແລະ ບ້ານໂພນຄຳ; ທິດຕາເວັນອອກ ຕິດກັບ ບ້ານວັງບານ; ທິດໃຕ້ ຕິດກັບ ບ້ານໂພນໝັ້ນ ແລະ ທິດຕາເວັນຕົກ ຕິດກັບ ບ້ານນ້ຳສັກ.




ຮູບທີ 4: ແຜນທີ່ ບ້ານນ້ຳອ້ອນ, ເມືອງໄຊຈຳພອນ, ແຂວງບໍລິຄຳໄຊ

[4] ຂໍ້ມູນເພີ່ມເຕີມ: https://tinyurl.com/5xyuhs3u

ອີງຕາມສະຖິຕິປີ 2023 ບ້ານນ້ຳອ້ອນ ປະກອບມີເນື້ອທີ່ທັງໝົດ 6,273 ເຮັກຕາ ປະກອບດ້ວຍເນື້ອທີ່ປ່າໄມ້, ທີ່ຢູ່ອາໄສ; ສ່ວນດິນກະສິກຳ ແມ່ນຍັງບໍ່ທັນໄດ້ມີການວັກແທກເກັບກຳຈຳນວນຕອນ), ມີຈຳນວນທັງໝົດ 329 ຫຼັງຄາເຮືອນ, ມີ 450 ຄອບຄົວ, ມີພົນລະເມືອງທັງໝົດ 1,652 ຄົນ (ຍິງ 832 ຄົນ) ປະກອບມີ 3 ຊົນເຜົ່າຄື: ລາວພວນ, ມົ້ງ ແລະ ຕູມ. ອາຊີບຫຼັກຂອງປະຊາຊົນແມ່ນອາໄສການ ລ້ຽງສັດ ແລະ ປູກຝັງ ໂດຍສະເພາະການເຮັດນາ, ໄຮ່, ການເກັບເຄື່ອງປ່າຂອງດົງ ແລະ ການປູກຫຍ້າ ເພື່ອລ້ຽງສັດຂະໜາດໃຫຍ່ ເຊັ່ນ: ງົວ, ຄວາຍ. ບ້ານນ້ຳອ້ອນ ເປັນບ້ານທີ່ມີຫ້ວຍນ້ຳຈາດໄຫຼຜ່ານ ເຊິ່ງເປັນຫ້ວຍນ້ຳໜຶ່ງທີ່ມີຄວາມສຳຄັນຂອງບ້ານ ແລະ ເມືອງດ້ວຍ. ນອກຈາກການອາໄສປ່າໄມ້ເປັນແຫຼ່ງອາຫານແລ້ວ ຫ້ວຍນ້ຳຈາດກໍ່ເປັນຊັບພະຍາກອນໜຶ່ງທີ່ສຳຄັນສຳລັບປະຊາຊົນຢູ່ບ້ານໃນການຫາປາ ແລະ ສັດ ນ້ຳຕ່າງໆເພື່ອບໍລິໂພກເປັນອາຫານ. ຕາມຂໍ້ມູນຈາກບ້ານໃຫ້ຮູ້ວ່າ ໃນຊ່ວງປີ 2014-2015 ບ້ານນ້ຳອ້ອນເຄີຍໄດ້ມີການກຳນົດເຂດວັງສະຫງວນໃນເຂດຄຸ້ມຄອງຂອງບ້ານ ເຊິ່ງການຄຸ້ມຄອງວັງສະຫງວນໃນໄລຍະເວລາດັ່ງກ່າວ ແມ່ນອີງ ໃສ່ການແຈ້ງຜ່ານທາງຄະນະບ້ານ ແລະ ຍັງບໍ່ໄດ້ມີລະບຽບຄຸ້ມຄອງຢ່າງຊັດເຈນ ເຊິ່ງເຮັດໃຫ້ການຄຸ້ມຄອງແມ່ນບໍ່ໄດ້ຮັບຜົນດີເທົ່າທີ່ຄວນ.

ບ້ານນ້ຳອ້ອນ ເປັນບ້ານໜຶ່ງທີ່ທາງຂັ້ນເມືອງກຳລັງສຸມໃສ່ເພື່ອພັດທະນາໂຄງລ່າງພື້ນຖານ ແລະ ທາງດ້ານເສດ ຖະກິດ ແລະ ມີຄວາມທ້າທາຍຫຼາຍໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ເຫັນໄດ້ເຖິງການປ່ຽນແປງ ໂດຍສະເພາະເນື້ອທີ່ປ່າໄມ້ ແລະ ການນຳໃຊ້ຊັບພະຍາກອນນ້ຳ.

ອີງຕາມ ເປົ້າໝາຍການພັດທະນາຕາມທິດສີຂຽວ ແລະ ເປັນມິດຕໍ່ສິ່ງແວດລ້ອມຂອງແຂວງບໍລິຄຳໄຊ ໄດ້ເນັ້ນ ຢ້ຳວ່າ ວຽກງານຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ ແມ່ນເປັນວຽກງານຈຸດສຸມໜຶ່ງທີ່ສຳຄັນ ໂດຍໃນລະຫວ່າງປີ 2021-2025 ແຂວງບໍລິຄຳໄຊໄດ້ມີແຜນໃນການກຳນົດວັງສະຫງວນປາໃຫ້ໄດ້ 48 ແຫຼ່ງໃນທົ່ວແຂວງ, ສະເພາະໃນເມືອງໄຊຈຳພອນ ແມ່ນ 4 ແຫຼ່ງ (ນ້ຳອ້ອນ 2 ແຫຼ່ງ ແລະ ນ້ຳຈາດ 2 ແຫ່ງ).[5]

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງໃຫ້ຮູ້ວ່າ ທາງເມືອງແມ່ນມີເປົ້າໝາຍໃນການສ້າງເຂດວັງສະຫງວນໃນທຸກບ້ານທີ່ຢູ່ພາຍໃນເມືອງໄຊຈຳພອນ ເຊິ່ງເປົ້າໝາຍຫຼັກ ກໍ່ແມ່ນເພື່ອຮັກສາລະບົບນິເວດ ແລະ ປ້ອງກັນບໍ່ໃຫ້ມີການສູນພັນຂອງສັດນ້ຳທີ່ສຳຄັນ ໂດຍສະເພາະແມ່ນພັນປາດັ້ງເດີມ. ພ້ອມນັ້ນກໍ່ເພື່ອເປັນການສົ່ງເສີມການພັດທະນາທາງດ້ານເສດ ຖະກິດຂອງເມືອງ ໂດຍສະເພາະການດຶງດູດການທ່ອງທ່ຽວຢູ່ພາຍໃນແຂວງ. ສະນັ້ນທາງເມືອງຈຶ່ງເຫັນວ່າ ການສ້າງຕັ້ງວັງສະຫວນຢູ່ບ້ານນ້ຳອ້ອນ ຈຶ່ງເປັນກິດຈະກຳໜຶ່ງທີ່ຈະປະກອບສ່ວນຊ່ວຍຂັ້ນເມືອງ ໃຫ້ບັນບຸຕາມເປົ້າໝາຍ ກໍ່ຄືການເຮັດໃຫ້ມີວັງສະຫງວນເພີ່ມຂຶ້ນຢູ່ເມືອງໄຊຈຳພອນ ຕາມທີ່ໄດ້ລະບຸໄວ້ໃນເປົ້າໝາຍການພັດທະນາຕາມທິດສີຂຽວ ແລະ ເປັນມິດຕໍ່ສິ່ງແວດລ້ອມຂອງແຂວງບໍລິຄຳໄຊ.

ດັ່ງນັ້ນ ການສະໜັບສະໜູນໃນການສ້າງວັງສະຫງວນຢູ່ບ້ານນ້ຳອ້ອນ ຍັງເປັນການຜັນຂະຫຍາຍແຜນພັດທະ ນາຂອງເມືອງທີ່ຕິດພັນກັບການອະນຸລັກຊີວະນາໆພັນ ໂດຍສະເພາະຈຸດພິເສດຂອງເມືອງໄຊຈຳພອນ ທີ່ມີແນວພັນປາທີ່ເປັນປະເພດຫວງຫ້າມ ໂດຍສະເພາະ ປາຂັງ[6] ທີ່ຖືກຈັດຢູ່ບັນຊີແດງ ຂອງອົງການ IUCN[7] ວ່າເປັນສາຍພັນທີ່ໃກ້ສູນພັນ.

## 2. ກິດຈະກຳການເກັບກຳຂໍ້ມູນ ແລະ ການເຜີຍແຜ່ຂໍ້ມູນທາງດ້ານກົດໝາຍຢູ່ຂັ້ນບ້ານ

### 2.1 ການເກັບກຳຂໍ້ມູນກ່ຽວກັບການປ່ຽນແປງທາງດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ກິດຈະກຳເກັບກຳຂໍ້ມູນກ່ຽວກັບການປ່ຽນແປງທາງດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນກິດຈະກຳຄັ້ງທີ 1 ຂອງອາສາສະໝັກ ເຊິ່ງຮູບແບບຂອງການເກັບກຳຂໍ້ມູນແມ່ນຜ່ານການແຕ້ມວາດສາຍນ້ຳ ໂດຍເນັ້ນການມີສ່ວນຮ່ວມຂອງທຸກຄົນຢູ່ພາຍໃນບ້ານ. ກ່ອນຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວຢູ່ຂັ້ນບ້ານ ເຂົາເຈົ້າໄດ້ຜ່ານການ ຝຶກອົບຮົມ ກ່ຽວກັບທັກສະການເປັນຜູ້

[5] ແຜນພັດທະນາເສດຖະກິດ-ສັງຄົມ ແຂວງບໍລິຄຳໄຊ 2021-2025, ໜ້າ 64: http://bolikhamxay.gov.la/webnew/?p=326

[6] ບາງພື້ນທີ່ເອີ້ນວ່າ ປາກັງ ຫລື ປາກົມ ຫຼື ປາກ້ອນຊາຍ ເຊິ່ງເປັນສາຍພັນປາ ທີ່ຖືກຈັດຢູ່ໃນບັນຊີແດງ ຂອງອົງການ IUCN ໃນປີ 2021 ວ່າເປັນສັດທີ່ໃກ້ສູນພັນ. ສະມາຄົມອະນຸລັກ: https://tinyurl.com/3u4rph7c

[7] ອົງການ IUCN ມີຊື່ເຕັມວ່າ International Union for Conservation of Nature ເປັນອົງການທີ່ສົ່ງເສີມການອະນຸລັກຊັບພະຍາກອນທຳມະຊາດໃນລະດັບໂລກ

ອຳນວຍຄວາມສະດວກ ແລະ ການນຳໃຊ້ແຜນວາດສາຍນ້ຳໃນການເກັບກຳຂໍ້ມູນ ກ່ຽວກັບການປ່ຽນແປງທາງດ້ານຊັບພະຍາກອນທຳມະຊາດຢູ່ໃນຂັ້ນບ້ານໃນໄລຍະ 10-20 ປີທີ່ຜ່ານມາ ເພື່ອເສີມສ້າງທັກສະ ແລະ ການກຽມຄວາມພ້ອມ. ສຳລັບການເກັບກຳຂໍ້ມູນດ້ວຍວິທີການແຕ້ມແຜນວາດສາຍນ້ຳ ແມ່ນເນັ້ນການເກັບກຳຂໍ້ມູນຂັ້ນບ້ານ ໂດຍໄດ້ມີການແຍກສະເພາະຂໍ້ມູນທີ່ໄດ້ຮັບຈາກ ກຸ່ມຍິງ, ຊາຍ ແລະ ຄະນະບ້ານ ເພື່ອນຳມາປຽບທຽບ ແລະ ສະຫຼຸບຜົນໄດ້ຮັບສຳລັບຂໍ້ມູນລວມຂອງບ້ານ ເຊິ່ງໃນນັ້ນກໍ່ຈະມີທັງຂໍ້ມູນທີ່ຄືກັນ ແລະ ຕ່າງກັນຕາມຂໍ້ມູນຕົວຈິງທີ່ໄດ້ຮັບ. ເຊິ່ງຂໍ້ມູນຫຼັກໆທີ່ໄດ້ຮັບຈາກການເກັບກຳຂໍ້ມູນຜ່ານແຜນວາດສາຍນ້ຳແມ່ນມີຈຸດທີ່ຄືກັນ ແລະ ຕ່າງກັນຂອງສອງບ້ານເປົ້າໝາຍ ເຊິ່ງມີລາຍລະອຽດຄື:

**ບ້ານສົມສະໜຸກ, ເມືອງມະຫາໄຊ, ແຂວງຄຳມ່ວນ:** ກິດຈະກຳຢູ່ບ້ານນີ້ ແມ່ນເປັນການເຮັດກິດຈະກຳບ້ານໃໝ່ ຫຼັງຈາກທີ່ມີການປັບປ່ຽນພື້ນທີ່ເປົ້າໝາຍຂອງກຸ່ມອາສາສະໝັກລຸ້ນ 3 ນີ້. ຂໍ້ຫຍຸ້ງຍາກ ຫຼື ການປ່ຽນແປງຕໍ່ກັບການຄຸ້ມຄອງຊັບພະຍາກອນທຳມະຊາດພາຍໃນບ້ານທີ່ເກັບກຳໄດ້ຈາກແຜນວາດສາຍນ້ຳຫຼັກໆແມ່ນ: ການບຸກເບີກເນື້ອທີ່ປ່າໄມ້ຫຼາຍຂຶ້ນ ເຮັດໃຫ້ເນື້ອທີ່ປ່າໄມ້ ແລະ ສັດປ່າຫຼຸດລົງ, ລະບົບນິເວດຂອງແມ່ນ້ຳ (ເຊບັ້ງໄຟ) ແມ່ນມີການປ່ຽນແປງໄປຫຼາຍ ເນື່ອງຈາກໃນເຂດເທິງຂອງບ້ານ ມີການສ້າງເຂື່ອນໄຟຟ້າ ແລະ ໃນແຕ່ລະປີກໍ່ມີໄພນ້ຳຖ້ວມ. ພ້ອມນັ້ນ ໃນແມ່ນ້ຳນັ້ນເອງແນວພັນປາກໍ່ຫຼຸດໜ້ອຍລົງບໍ່ສາມາດຫາປາໄດ້ຄືແຕ່ເກົ່າ. ໃນເວລາທີ່ມີນ້ຳຖ້ວມ ຜົນຜະລິດຂອງປະຊາຊົນທີ່ປູກຝັງຢູ່ແຄມນ້ຳ ແມ່ນຖືກທຳລາຍ ເຊິ່ງທີ່ຜ່ານມາບໍລິສັດໂຄງການໄຟຟ້າ ກໍ່ມີການຊົດເຊີຍຈຳນວນໜຶ່ງ; ພ້ອມນັ້ນຢູ່ພາຍໃນບ້ານກໍ່ຍັງມີຂໍ້ຂັດແຍ້ງກັນກ່ຽວກັບການບຸກລຸກເນື້ອທີ່ດິນປ່າໄມ້. ໃນຫຼາຍພື້ນທີ່ທີ່ເຄີຍອຸດົມສົມບູນທີ່ສາມາດໄປຫາປາ ແລະ ເຄື່ອງປ່າຂອງດົງ ໂດຍສະເພາະໜໍ່ໄມ້ ແມ່ນຫຼຸດລົງຫຼາຍ.

**ບ້ານນ້ຳອ້ອນ, ເມືອງໄຊຈຳພອນ, ແຂວງບໍລິຄຳໄຊ:** ກິດຈະກຳການເກັບກຳຂໍ້ມູນຜ່ານແຜນວາດສາຍນ້ຳເປັນກິດຈະກຳຄັ້ງທີ 1 ທີ່ຈັດຕັ້ງປະຕິບັດຢູ່ຂັ້ນບ້ານ ຂອງກຸ່ມອາສາສະໝັກບ້ານນ້ຳອ້ອນ. ຂໍ້ຫຍຸ້ງຍາກ ຫຼື ການປ່ຽນແປງຕໍ່ກັບການຄຸ້ມຄອງຊັບພະຍາກອນທຳມະຊາດພາຍໃນບ້ານທີ່ເກັບກຳຂໍ້ມູນໄດ້ຈາກແຜນວາດສາຍນ້ຳຫຼັກໆແມ່ນ: ຫຼາຍປີທີ່ຜ່ານມານີ້ສະພາບທຳມະຊາດແມ່ນມີການປ່ຽນແປງໄປຫຼາຍ ໂດຍສະເພາະການເພີ່ມຂຶ້ນຂອງຈຳນວນປະຊາຊາກອນທີ່ມາດຳລົງຊີວິດຢູ່ບ້ານນ້ຳອ້ອນ ອັນໄດ້ເຮັດໃຫ້ມີການຂະຫຍາຍພື້ນທີ່ເຂດປ່າເພື່ອທຳການຜະລິດຫຼາຍຂຶ້ນໂດຍສະເພາະແມ່ນ ການປູກຫຍ້າເພື່ອລ້ຽງສັດໃຫຍ່, ການເກັບເຄື່ອງປ່າຂອງດົງໃນຈຳນວນທີ່ຫຼວງຫຼາຍເພື່ອການຄ້າຂາຍໂດຍສະເພາະແມ່ນ ເຄືອແຫມ[8] ເຮັດໃຫ້ສິ່ງຜົນກະທົບຕໍ່ກັບຄວາມອຸດົມສົມບູນຂອງລະບົບນິເວດໂດຍສະເພາະສັດປ່າ ແລະ ພືດຫຼາຍຊະນິດໃນປ່າແມ່ນຄ່ອຍໆຫຼຸດລົງ. ໃນຊ່ວງໄລຍະປີ 2005-2015 ໄດ້ມີບໍລິສັດຕ່າງປະເທດໄດ້ເຂົ້າມາສຳປະທານພື້ນທີ່ ເພື່ອຕັດໄມ້ເພື່ອສົ່ງອອກໄປປະເທດໃກ້ຄຽງ (ປະເທດຫວຽດນາມ) ເຮັດໃຫ້ຕົ້ນໄມ້ໃຫຍ່ເລີ່ມໝົດໄປ. ພ້ອມນັ້ນຍັງບໍ່ທັນໄດ້ມີການກຳນົດເຂດປ່າໄມ້ ແລະ ເຂດອະ ນຸລັກສັດນ້ຳຢ່າງຊັດເຈນຈຶ່ງເຮັດໃຫ້ສັດປ່າ ແລະ ສັດນ້ຳຫຼາຍຊະນິດເລີ່ມສູນພັນ.

> “ຜ່ານການເຮັດກິດຈະກຳເຫັນວ່າໄດ້ຮັບຜົນດີ ໂດຍສະເພາະການແຕ້ມແຜນວາດສາຍນ້ຳໄດ້ຊ່ວຍໃຫ້ປະຊາຊົນເຂົ້າໃຈງ່າຍ ແລະ ມີຄວາມກະຈ່າງແຈ້ງຫຼາຍຂຶ້ນເຊັ່ນ ສັດນ້ຳ ແລະ ເລື່ອງຂອງສະພາບປ່າໄມ້ວ່າມີການທຳລາຍແລ້ວສິ່ງຜົນກະທົບແນວໃດ ເຊັ່ນ ເຮັດໃຫ້ນ້ຳແຫ້ງແລ້ງອຍ້ອນມີການທຳລາຍປ່າໄມ້.”
>
> ທ່ານ ພອນສີ ໄຊມູຢ່າງ , ຫົວໜ້າຊາວໜຸ່ມ ບ້ານນ້ຳອ້ອນ

ນອກຈາກການເກັບກຳຂໍ້ມູນຜ່ານແຜນວາດສາຍນ້ຳແລ້ວ ກຸ່ມອາສາສະໝັກຂອງທັງສອງບ້ານກໍ່ໄດ້ມີການສຳຫຼວດພື້ນທີ່ຕົວຈິງ ເພື່ອສົມທຽບກັບຂໍ້ມູນທີ່ໄດ້ຮັບຈາກກິດຈະກຳແຜນວາດສາຍນ້ຳໂດຍໄດ້ມີການສຳຫຼວດສະພາບພື້ນທີ່ຂອງບ້ານ, ການດຳລົງຊີວິດຂອງປະຊາຊົນ ແລະ ການສຶກສາສະພາບຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນປ່າໄມ້ ແລະ ແຫຼ່ງນ້ຳທີ່ຢູ່ໃກ້ຄຽງບໍລິເວນເຂດຂອງບ້ານ.

8 ຂໍ້ມູນເພີ່ມເຕີມກ່ຽວກັບເຄືອແຫມ: https://species.phakhaolao.la/search/specie_details/2547

ຂໍ້ມູນທີ່ໄດ້ຈາກກິດຈະກໍາແຜນວາດສາຍນໍ້າ ແມ່ນສໍາຄັນຫຼາຍຕໍ່ກັບກຸ່ມອາສາສະໝັກເພື່ອເປັນບ່ອນອີງໃນການສຶກສາເຖິງວິທີທາງໃນການແກ້ໄຂບັນຫາ ແລະ ການສະໜອງຄວາມຕ້ອງການທາງດ້ານຂໍ້ມູນແກ່ປະຊາຊົນຢູ່ຂັ້ນບ້ານ ໂດຍສະເພາະຂໍ້ມູນທາງດ້ານກົດໝາຍທີ່ຕິດພັນກັບການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທໍາມະຊາດ.







ຮູບທີ 5: ກິດຈະກໍາເກັບກໍາຂໍ້ມູນຢູ່ບ້ານສົມສະໜຸກ

ຮູບທີ 6: ກິດຈະກໍາເກັບກໍາຂໍ້ມູນຢູ່ບ້ານນໍ້າອ້ອມ

## 2.2. ກິດຈະກໍາການປູກຈິດສໍານຶກທາງດ້ານກົດໝາຍກ່ຽວກັບຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ

ຫຼັງຈາກການເກັບກໍາຂໍ້ມູນຂອງກຸ່ມອາສາສະໝັກ ຈາກການລົງບ້ານຄັ້ງທີ 1 ຂໍ້ມູນເຫຼົ່ານັ້ນໄດ້ເປັນບ່ອນອີງໃນການຄົ້ນຄວ້າບັນດານິຕິກໍາທີ່ກ່ຽວຂ້ອງ ເພື່ອວິເຄາະ ແລະ ຄັດເລືອກໃນການນໍາໄປເຜີຍແຜ່ຂໍ້ມູນທາງດ້ານກົດໝາຍກ່ຽວກັບຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມໃນຂັ້ນບ້ານ ສໍາລັບການລົງບ້ານຄັ້ງທີ 2 ຂອງກຸ່ມອາສາສະໝັກ.

- ບ້ານສົມສະໜຸກ, ເມືອງມະຫາໄຊ, ແຂວງຄໍາມ່ວນ: ສໍາລັບກິດຈະກໍາການເຜີຍແຜ່ຂໍ້ມູນທາງດ້ານກົດໝາຍຂອງກຸ່ມອາສາສະໝັກຢູ່ບ້ານສົມສະໜຸກນີ້ ແມ່ນຄ່ອນຂ້າງມີຄວາມທ້າທາຍທາງດ້ານໄລຍະເວລາ ເນື່ອງໄດ້ມີການ ດໍາເນີນກິດຈະກໍາໃນຊ່ວງເວລາດຽວກັນຫຼັງຈາກທີ່ເກັບກໍາຂໍ້ມູນ ແຜນວາດສາຍນໍ້າແລ້ວ. ສໍາລັບຫົວຂໍ້ເຜີຍແຜ່ຂໍ້ມູນແມ່ນປະກອບມີ: ສິດ ແລະ ພັນທະຂອງຜູ້ໄດ້ຮັບສິດນໍາໃຊ້ທີ່ດິນ, ການແກ້ໄຂຂໍ້ຂັດແຍ່ງທີ່ດິນທາງດ້ານບໍ ລິຫານ ແລະ ທາງແພ່ງ, ການປ້ອງກັນ ແລະ ຕ້ານໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ, ພັນທະຂອງນັກລົງທຶນຕໍ່ ລັດ, ສັງຄົມ ແລະ ສິ່ງແວດລ້ອມ ແລະ ການແນະນໍາໜ່ວຍງານຊ່ວຍເຫຼືອລ້າທາງດ້ານກົດໝາຍ. ບັນດາຫົວຂໍ້ເຫຼົ່ານັ້ນ ແມ່ນໄດ້ອີງໃສ່ກົດໝາຍດັ່ງນີ້ໃນການເຜີຍແຜ່:

**- ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019**

- ມາດຕາ 130 (ໃໝ່) ການໄດ້ສິດນໍາໃຊ້ທີ່ດິນຕາມປະເພນີ
- ມາດຕາ 133 (ປັບປຸງ) ສິດຂອງຜູ້ໄດ້ຮັບສິດນໍາໃຊ້ທີ່ດິນ
- ມາດຕາ 161 (ປັບປຸງ) ການແກ້ໄຂບັນຫາທີ່ມີລັກສະບໍລິຫານກ່ຽວກັບທີ່ດິນ
- ມາດຕາ 162 (ໃໝ່) ຮູບການແກ້ໄຂຂໍ້ຂັດແຍ້ງກ່ຽວກັບທີ່ດິນ

**- ກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ (ສະບັບປັບປຸງ), ເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017**

- ມາດຕາ 26 (ປັບປຸງ) ການປົກປັກຮັກສານ້ຳ ແລະ ຊັບພະຍາກອນນ້ຳ
- ມາດຕາ 54 (ປັບປຸງ) ການປ້ອງກັນ ແລະ ຕ້ານໄພນ້ຳຖ້ວມ ແລະ ແຫ້ງແລ້ງ
- ມາດຕາ 56 (ໃໝ່) ການບູລະນະຟື້ນຟູ ນ້ຳ ແລະ ຊັບພະຍາກອນນ້ຳ

ຜ່ານການເຜີຍແຜ່ຂໍ້ມູນຢູ່ບ້ານສົມສະໜຸກເຫັນໄດ້ວ່າ ປະຊາຊົນແມ່ນໃຫ້ຄວາມສົນໃຈ ແລະ ມີສ່ວນຮ່ວມໃນການສົນທະນາໂດຍສະແດງອອກ ຈາກທີ່ຫຼາຍຄົນ ໄດ້ຍົກເອົາບັນຫາຕົວຈິງມາແລກປ່ຽນໃນເວລາທີ່ມີການເຜີຍແຜ່ຂໍ້ມູນ.

- **ບ້ານນ້ຳອ້ອນ, ເມືອງໄຊຈຳພອນ, ແຂວງຄຳມ່ວນ:** ການເຜີຍແຜ່ຂໍ້ມູນທາງດ້ານກົດໝາຍໃນບ້ານນ້ຳອ້ອນຂອງກຸ່ມອາສາສະໝັກ ແມ່ນອີງໃສ່ບັນຫາ ແລະ ຂໍ້ມູນທີ່ທາງບ້ານສະເໜີ ເພື່ອແນະນຳຊ່ອງທາງໃນການແກ້ໄຂບັນ ຫາໃຫ້ກັບປະຊາຊົນ. ສຳລັບການເຜີຍແຜ່ຂໍ້ມູນໃນບ້ານນ້ຳອ້ອນແມ່ນປະກອບມີ 2 ຫົວຂໍ້ ຄື: ການປົກປັກຮັກ ສາ ແລະ ນຳໃຊ້ເຄື່ອງປ່າຂອງໃຫ້ຍືນຍົງ; ແລະ ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ, ສິດ ແລະ ພັນທະ ຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນຂອງພົນລະເມືອງລາວ. ບັນດາຫົວຂໍ້ດັ່ງກ່າວແມ່ນໄດ້ອີງໃສ່ນິຕິກຳລຸ່ມນີ້:

**- ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019**

- ມາດຕາ 130 (ໃໝ່) ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ
- ມາດຕາ 133 (ປັບປຸງ) ສິດຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ
- ມາດຕາ 141 ພັນທະຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ

**- ກົດໝາຍວ່າດ້ວຍ ປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019**

- ມາດຕາ 7 ພັນທະໃນການປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້
- ມາດຕາ 61 (ປັບປຸງ) ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ

**- ລະບຽບການຄຸ້ມຄອງໄມ້ ແລະ ເຄື່ອງປ່າຂອງດົງ, ເລກທີ່ 0221/ກປ, ລົງວັນທີ 13 ກຸມພາ 2000**

- ມາດຕາ 22 ບັນດາຂໍ້ຫ້າມ ການເກັບກູ້ເຄື່ອງປ່າຂອງດົງ

ກິດຈະກຳການເຜີຍແຜ່ຂໍ້ມູນຂອງອາສາສະໝັກແມ່ນໄດ້ສ້າງຄວາມສົນໃຈແກ່ປະຊາຊົນທີ່ເຂົ້າຮ່ວມ ໂດຍສະເພາະກິດຈະກຳຖາມ-ຕອບ, ການນຳໃຊ້ຮູບພາບໃນການນຳສະ ເໜີຂໍ້ມູນທາງດ້ານກົດໝາຍ ໂດຍເນັ້ນການສົນທະນາ ແລະ ການນຳສະເໜີໃນຮູບແບບທີ່ເປັນກັນເອງກັບຊຸມຊົນ. ຈຸດພິເສດທີ່ເປັນຜົນໄດ້ຮັບທີ່ດີໃນການເຜີຍແຜ່ຂໍ້ມູນຂອງກຸ່ມອາສາສະໝັກໃນບ້ານນ້ຳອ້ອນແມ່ນການໃຊ້ວິທີສະແດງລະຄອນເພື່ອເຜີຍແຜ່ຂໍ້ມູນດັ່ງກ່າວ ເຊິ່ງສ້າງຄວາມສົນໃຈຫຼາຍໃຫ້ກັບປະຊາຊົນທີ່ເຂົ້າຮ່ວມ.

> “ການມາເຜີຍແຜ່ຂໍ້ມູນກ່ຽວກັບກົດໝາຍກ່ຽວກັບທີ່ດິນ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດ ມີຄວາມສຳຄັນຫຼາຍທີ່ສຸດກັບບ້ານເຮົາ ເຊິ່ງເຮັດໃຫ້ລູກຫຼານບ້ານເຮົາໄດ້ເຂົ້າໃຈວ່າບຸກຄົນມີສິດແນວໃດແດ່ຕໍ່ກັບທີ່ດິນ ແລະ ຊັບພະຍາກອນປ່າໄມ້. ພ້ອມນັ້ນວິທີການທີ່ມາເຜີຍແຜ່ນັ້ນມີຄວາມດຶງດູດໃຫ້ມີສ່ວນຮ່ວມ ໂດຍໄດ້ມີການນຳໃຊ້ກິດຈະກຳຕ່າງໆ ທີ່ມີຄວາມເບີກບານມ່ວນຊື່ນ ເຂົ້າມານຳ ຈຶ່ງເຮັດໃຫ້ປະຊາຊົນ ມີຄວາມກ້າຫານທີ່ຈະເວົ້າ ແລະ ແລກປ່ຽນບົດຮຽນກັບລູກຫຼານ; ນອກຈາກຄວາມມ່ວນຊື່ນ ຊາວບ້ານເຮົາເອງກໍ່ໄດ້ຄວາມຮູ້ທີ່ມີປະໂຫຍດ ເພື່ອວ່າຈະໄດ້ນຳໄປບອກລູກຫຼານຕໍ່.”

ທ່ານ ແພງຕາ ພົງອຸດົມ, ປະຊາຊົນ ບ້ານສົມສະໜຸກ



ຮູບທີ 7: ກິດຈະກຳເຜີຍແຜ່ຂໍ້ມູນ ຢູ່ບ້ານສົມສະໜຸກ



ຮູບທີ 8: ກິດຈະກຳເຜີຍແຜ່ຂໍ້ມູນ ຢູ່ບ້ານນ້ຳອ້ອນ

ຈາກການເຜີຍແຜ່ຂໍ້ມູນທາງດ້ານກົດໝາຍໄດ້ເຮັດໃຫ້ປະຊາຊົນມີຄວາມຊັດເຈນຫຼາຍຂຶ້ນ ຕໍ່ກັບແນວທາງໃນການແກ້ໄຂບັນຫາທີ່ບ້ານກຳລັງປະເຊີນ ທີ່ຕິດພັນກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍອາສາສະໝັກໄດ້ມີການນຳເອົາບັນຫາຫຼັກໆທີ່ໄດ້ຈາກ ການເກັບກຳຂໍ້ມູນໃນຄັ້ງທີ 1 ເພື່ອນຳມາທວນຄືນ ແລະ ຢ້ຳກັບປະຊາຊົນຕື່ມວ່າ ບັນຫາຫຍັງທີ່ທາງປະຊາຊົນຕ້ອງການແກ້ໄຂບັນຫາ ແລະ ຕ້ອງການການສະໜັບສະໜູນອັນໃດແດ່ຈາກກຸ່ມອາສາສະໝັກ. ຜ່ານການສົນທະນາກັບປະຊາຊົນພາຍໃນບ້ານ ກໍ່ໄດ້ມີຫຼາຍຂໍ້ສະເໜີເພື່ອແກ້ໄຂບັນຫາຕ່າງໆທີ່ບ້ານສະເໜີ. ແຕ່ຫຼັງຈາກປຶກສາຫາລື ເຖິງຄວາມເປັນໄປໄດ້ ແລະ ບູລິມາສິດຂອງບ້ານຈຶ່ງໄດ້ມີການຕົກລົງເປັນເອກະສັນກັນໃນການສະເໜີບັນຫາທີ່ຢາກໃຫ້ທີມງານໂຄງການ ແລະ ອາສາສະໝັກແກ້ໄຂບັນຫາຢູ່ໃນບ້ານ ເຊິ່ງທັງບ້ານ ສົມສະໜຸກ ແລະ ບ້ານນ້ຳອ້ອນ ແມ່ນໄດ້ຕົກລົງເຫັນດີກັນໃນການ ການສ້າງວັງສະຫງວນຢູ່ໃນຂັ້ນບ້ານ ເພື່ອເປັນການອະນຸລັກປາ, ປົກປັກຮັກສາລະບົບນິເວດຂອງແມ່ນ້ຳ ທີ່ມີຄວາມສຳຄັນຕໍ່ກັບປະຊາຊົນຢູ່ພາຍໃນບ້ານ.

## 3. ກິດຈະກຳການສ້າງວັງສະຫງວນແບບມີສ່ວນຮ່ວມກັບຂັ້ນບ້ານ

ດັ່ງທີ່ກ່າວໄວ້ໃນເບື້ອງຕົ້ນວ່າ ໃນປະເທດເຮົາ ຍັງບໍ່ມີນິຕິກຳສະເພາະທີ່ກຳນົດເຖິງຂັ້ນຕອນ ແລະ ລະບຽບການການສ້າງວັງສະຫງວນຂັ້ນບ້ານເທື່ອ ສະນັ້ນໃນການສ້າງລະບຽບຄຸ້ມຄອງ ແລະ ການກຳນົດມາດຕະການຕ່າງໆຈຶ່ງໄດ້ອີງໃສ່ແຕ່ລະພື້ນທີ່ ຫຼື ທ້ອງຖິ່ນ ເຊິ່ງກໍ່ຈະເຮັດໃຫ້ມີຂໍ້ຫ້າມ ແລະ ມາດຕະການ ທີ່ແຕກຕ່າງກັນໄປຕາມແຕ່ລະພື້ນທີ່ ແລະ ແຕ່ລະງດັບ (ລະດັບບ້ານ, ເມືອງ ຫຼື ແຂວງ) ໂດຍແນ່ໃສ່ຄວາມເປັນເຈົ້າການຂອງທ້ອງຖິ່ນໂດຍສະເພາະແມ່ນຂັ້ນບ້ານເປັນຫຼັກໃນການຄຸ້ມຄອງວັງສະຫງວນທີ່ສ້າງຕັ້ງຂຶ້ນ. ການສ້າງວັງສະຫງວນໃນສອງບ້ານເປົ້າໝາຍນີ້ ກໍ່ແມ່ນໄດ້ອີງ ໃສ່ບົດຮຽນ ແລະ ການຈັດຕັ້ງປະຕິບັດທີ່ຜ່ານມາ ໂດຍໄດ້ອີງໃສ່ນິຕິກຳຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການກຳນົດລະບຽບ ແລະ ຂໍ້ຫ້າມຕ່າງໆໃນການຄຸ້ມຄອງວັງສະຫງວນຂັ້ນບ້ານ ເຊິ່ງນິຕິກຳຫຼັກໆທີ່ນຳມາເປັນບ່ອນອີງທາງດ້ານເນື້ອໃນ ໃນການສ້າງລະບຽບຄຸ້ມຄອງວັງສະຫງວນ ຢູ່ສອງບ້ານຄື ບ້ານສົມສະໜຸກ-ບ້ານດ້າງ, ເມືອງມະຫາໄຊ, ແຂວງຄຳມ່ວນ ແລະ ບ້ານນ້ຳອ້ອນ, ເມືອງໄຊຈຳພອນ, ແຂວງບໍລິຄຳໄຊ ແມ່ນ: ກົດໝາຍວ່າດ້ວຍ ສັດນ້ຳ ແລະ ການປະມົງສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023; ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012. ນອກນັ້ນແມ່ນ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ແລະ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021.

ສຳລັບລາຍລະອຽດ ຂອງແຕ່ລະຂໍ້ຫ້າມ ແລະ ມາດຕະການຕ່າງໆ ລວມເຖິງ ນະໂຍບາຍຕໍ່ຜູ້ມີຜົນງານ ໃນການຄຸ້ມຄອງວັງສະຫງວນໃນຂັ້ນບ້ານ ແມ່ນໄດ້ມີການກຳນົດຂຶ້ນ ແລະ ການເຫັນດີເຫັນພ້ອມຂອງສະມາຊິກພາຍໃນບ້ານ ແລະ ໄດ້ສະເໜີຫາຂັ້ນເມືອງໃນການຮັບຮອງເອົາລະບຽບການທີ່ສ້າງຂຶ້ນ ເພື່ອໃຫ້ສາມາດນຳມາບັງຄັບໃຊ້ຢ່າງເປັນເອກະພາບໃນຂັ້ນບ້ານ.

## 3.1. ກິດລະບຽບຄຸ້ມຄອງວັງສະຫງວນບ້ານສີມສະໝຸກ-ບ້ານດ້າງ ເມືອງມະຫາໄຊ ແຂວງ ຄໍາມ່ວນ

ປະຊາຊົນບ້ານສີມສະໝຸກ ແມ່ນອາສາຊັບພະຍາກອນທໍາມະຊາດ ແລະ ການຜະລິດກະສິກໍາ ເປັນຫຼັກໃນການ ດໍາລົງຊີວິດ ໂດຍສະເພາະການເຮັດນາ, ສວນ, ການຫາປາຈາກແຫຼ່ງນໍ້າ ແລະ ເຄື່ອງປ່າຂອງດົງຈາກປ່າຢູ່ໃນຂອບເຂດຂອງບ້ານ. ໃນໄລຍະຫຼາຍປີທີ່ຜ່ານມາ ການດໍາລົງຊີວິດແມ່ນຄ່ອຍໆມີການປ່ຽນແປງໄປ ເນື່ອງຄວາມອຸດົມສົມບູນຂອງຊັບພະຍາກອນທໍາມະຊາດເລີ່ມຫຼຸດລົງ ໂດຍສະເພາະການຫາປາຈາກ ເຊບັ້ງໄຟ ເຊິ່ງເປັນແມ່ນໍ້າໃຫຍ່ທີ່ໄຫຼຜ່ານບ້ານສີມສະໝຸກ ເຊິ່ງຫຼາຍປີທີ່ຜ່ານມານີ້ປະຊາຊົນພາຍໃນບ້ານບອກວ່າ ບໍ່ສາມາດຫາໄດ້ຄືດັ່ງທີ່ຜ່ານມາແລ້ວ ແລະ ພັນປາທີ່ເຄີຍຫາໄດ້ກໍ່ເລີ່ມຈະສູນພັນຫາຍໄປ. ນອກຈາກນີ້ປະຊາຊົນກໍ່ບອກວ່າ ການປ່ຽນແປງທີ່ສົ່ງຜົນກະທົບທີ່ເຫັນຊັດເຈນຂອງແມ່ນໍ້າ ແມ່ນເນື່ອງຈາກມີການການສ້າງເຂື່ອນໄຟຟ້າຢູ່ທາງເທິງຂອງແມ່ນໍ້າເຊບັ້ງໄຟ ເຊິ່ງໄດ້ສົ່ງຜົນກະທົບໃນວົງກວ້າງຕໍ່ກັບປະຊາຊົນທີ່ດໍາລົງຊີວິດຢູ່ຕາມລໍານໍ້າດັ່ງກ່າວ. ປະຊາຊົນໃນບ້ານສີມສະໝຸກໃຫ້ຮູ້ວ່າ ໃນກ່ອນໜ້ານີ້ຫຼັງຈາກທີ່ມີການສ້າງເຂື່ອນໄຟຟ້າ ບ້ານກໍ່ປະເຊີນກັບໄພນໍ້າຖ້ວມ ຮຸນແຮງທີ່ບໍ່ເຄີຍເກີດຂຶ້ນມາກ່ອນ ແລະ ພືນລະປູກຢູ່ຕາມແຄມນໍ້າເຊບັ້ງໄຟບາງພື້ນທີ່ຖືກທໍາລາຍໃນເວລາທີ່ຖືກນໍ້າຖ້ວມ ເຊິ່ງມາເຖິງປັດຈຸບັນບ້ານສີມສະໝຸກກໍ່ຍັງປະເຊີນກັບຄວາມສ່ຽງນໍ້າຖ້ວມໃນແຕ່ລະປີ. ເນື່ອງຈາກມີການປ່ຽນແປງຂອງແມ່ນໍ້າສາຍຫຼັກ ແລະ ຫ້ວຍຕ່າງໆ ໄດ້ສົ່ງຜົນເຮັດໃຫ້ການຫາປາໄດ້ຈໍານວນຫຼຸດລົງ ເຊິ່ງຊາວບ້ານໄດ້ບອກວ່າ ເນື່ອງຈາກການປ່ຽນແປງຂອງລະບົບນິເວດ ປະກອບກັບການຫາປາແບບດັບສູນ ໂດຍບໍ່ໄດ້ມີການສະຫງວນ ຫຼື ຂໍ້ຫ້າມໃດໆ ຈຶ່ງເຮັດໃຫ້ປາທີ່ມີໜ້ອຍຢູ່ແລ້ວນັ້ນຍິ່ງມີຈໍານວນຫຼຸດລົງ ທັງຢູ່ໃນແມ່ນໍ້າສາຍຫຼັກ ແລະ ຫ້ວຍນໍ້າ. ຈາກບັນຫາດັ່ງກ່າວ ປະຊາຊົນບ້ານສີມສະໝຸກ ຈຶ່ງມີແນວຄວາມຄິດທີ່ຢາກຈະມີການຟື້ນຟູ ແລະ ອະນຸລັກແມ່ນໍ້າ ໂດຍສະເພາະຫ້ວຍນໍ້າທີ່ຢູ່ໃກ້ກັບບ້ານຄື ຫ້ວຍເຈົ່າ. ທີ່ຜ່ານມາຫ້ວຍດັ່ງກ່າວເຄີຍເປັນແຫຼ່ງທີ່ຢູ່ອາໄສຂອງປາ ແລະ ສັດນໍ້າຂະໜາດນ້ອຍອື່ນໆ ຫຼາຍຊະນິດຫຼາຍກວ່າ 80 ຊະນິດເຊັ່ນ: ປາປາກ, ປາຈາດ, ປາກະບົກ, ປາກະໄຫ, ປາໜ້າໝອງ, ປາຂີ້ລາມ, ປາເກັດແລບ, ປາເສືອ, ປາກົດ, ປາໄນ, ປານິນ, ປາຄໍ່, ປາກັ້ງ ແລະ ອື່ນໆ ເຊິ່ງປັດ ຈຸບັນພັນປາດັ່ງກ່າວເລີ່ມຫຼຸດໜ້ອຍລົງ ແລະ ບາງສາຍພັນແມ່ນດັບສູນໄປແລ້ວ. ຈາກສະພາບການປ່ຽນແປງດັ່ງກ່າວ ປະຊາຊົນພາຍໃນບ້ານຈຶ່ງພ້ອມກັນສະເໜີກັບທາງອາສາສະໝັກ ແລະ ທີມງານໂຄງການໄລຟ໌ ເພື່ອຢາກອະນຸລັກຫ້ວຍເຈົ່າ ໂດຍການກໍານົດຂອບເຂດວັງສະຫງວນຂອງບ້ານ ເພື່ອເປັນການອະນຸລັກແນວພັນປາ ແລະ ສັດນໍ້າຂະໜາດນ້ອຍອື່ນໆ ເພື່ອໃຫ້ສັດນໍ້າໃນຫ້ວຍດັ່ງກ່າວມີການແຜ່ພັນຂະຫຍາຍ ເພື່ອປະຊາຊົນຈະສາມາດຟື້ນຟູໃຫ້ຫ້ວຍດັ່ງກ່າວກັບມາສູ່ສະພາບເດີມຄືແຕ່ກ່ອນ ຫຼື ໃຫ້ດີຂຶ້ນກວ່າທີ່ເປັນຢູ່ໃນປັດຈຸບັນນີ້.



ຮູບທີ 9: ກິດຈະກໍາການກໍານົດເຂດວັງສະຫງວນຢູ່ບ້ານ ສີມສະໝຸກ-ບ້ານດ້າງ (ພາບໂດຍ ທີມອາສາສະໝັກບ້ານສີມສະໝຸກ)

ຫຼັງຈາກການສະເໜີຂອງປະຊາຊົນພາຍໃນບ້ານ ທີມງານໂຄງການພ້ອມດ້ວຍອາສາສະໝັກກໍ່ໄດ້ປະສານສົມທົບກັບທາງຂັ້ນເມືອງໃນການພິຈາລະນາຂໍ້ສະເໜີຂອງປະຊາຊົນບ້ານສະໝຸກ ໃນການກຳນົດເຂດວັງສະຫງວນຂອງບ້ານ ເຊິ່ງຂໍ້ສະເໜີດັ່ງກ່າວແມ່ນສອດຄ້ອງກັບເປົ້າໝາຍຂອງໂຄງການ ແລະ ແຜນຍຸດທະສາດຂອງເມືອງມະຫາໄຊ ສະນັ້ນທາງຂັ້ນຈຶ່ງໄດ້ມີການອະນຸມັດໃຫ້ມີການສຳຫຼວດພື້ນທີ່ເພື່ອກຳນົດເຂດວັງສະຫງວນຂອງບ້ານ. ເຊິ່ງຂະບວນການໃນການສ້າງວັງສະຫງວນຂອງບ້ານແມ່ນມີລາຍລະອຽດຕາມແຜນວາດທີ 1.

ເນື່ອງຈາກຫ້ວຍເຈົ່າ ເປັນຫ້ວຍນ້ຳທີ່ໃຊ້ຮ່ວມກັນຂອງ ສອງບ້ານກໍ່ຄື ບ້ານສົມສະໝຸກ ແລະ ບ້ານດ້າງ ສະນັ້ນຈຶ່ງໄດ້ມີການປຶກສາຫາລືກັນ ເພື່ອສ້າງລະບຽບຄຸ້ມຄອງວັງສະຫງວນຫ້ວຍເຈົ່າ ຮ່ວມກັນລະຫວ່າງສອງບ້ານດັ່ງກ່າວ. ທັງສອງບ້ານ ແມ່ນມີຊາຍແດນຕິດຈອດກັນ ແລະ ນຳໃຊ້ສາຍຫ້ວຍເຈົ່າ ຮ່ວມກັນ. ໃນໄລຍະຜ່ານມາທັງສອງບ້ານ ແມ່ນໄດ້ມີການປົກປັກຮັກສາວັງສະຫງວນຕາມປະເພນີແຕ່ເມື່ອມີການພັດທະນາ ແລະ ຫຼາຍຢ່າງມີການປ່ຽນແປງເຮັດໃຫ້ບໍ່ມີຄວາມຍືນຍົງຄືແຕ່ເກົ່າຜ່ານມາ. ສະນັ້ນ ຊາວບ້ານ ແລະ ອຳນາດການປົກຄອງທັງສອງບ້ານໄດ້ມີການຕົກລົງ ແລະ ເຫັນດີເປັນເອກະພາບໃນການສ້າງວັງສະຫງວນແບບມີສ່ວນຮ່ວມ ໂດຍການສະເໜີໃຫ້ຂັ້ນເມືອງຊ່ວຍໃນການສ້າງຕັ້ງຄະນະກຳມະການຄຸ້ມຄອງວັງສະຫງວນ ແລະ ກົດລະບຽບໃນການປົກປັກຮັກສາ ແລະ ຊົມໃຊ້ວັງສະຫງວນ.

ວັງສະຫງວນຫ້ວຍເຈົ່າ ລະຫວ່າງ ບ້ານສົມສະໝຸກ-ບ້ານດ້າງ ມີຄວາມຍາວ 1,500 ແມັດ, ລວງກວ້າງປະມານ 16 ແມັດ ແລະ ເນື້ອທີ່ລວມ 2.5 ເຮັກຕາ. ເຊິ່ງຄວາມຍາວຂອງສາຍຫ້ວຍທີ່ກຳນົດເປັນວັງສະຫງວນປະກອບມີ 3 ວັງໃຫຍ່ຄື: ວັງປາຝາ, ວັງສະດົວະ (ວັງຫາຍາດິນ) ແລະ ວັງອ້ຽມ.[9] ປະຊາຊົນບອກວ່າ ພື້ນທີ່ຈຸດຕົ້ນວັງ-ທ້າຍວັງທີ່ກຳນົດເປັນວັງສະຫງວນແມ່ນມີນ້ຳໄຫຼຕະຫຼອດປີ. ການກຳນົດຂອບເຂດໃນແຕ່ລະຈຸດນັ້ນ ແມ່ນໄດ້ເຫັນດີເຫັນພ້ອມກັນລະຫວ່າງປະຊາຊົນທັງສອງບ້ານ ໂດຍມີພະນັກງານຂັ້ນເມືອງຊ່ວຍໃນການໝາຍຂອບເຂດຈຸດຕ່າງໆຂອງວັງສະຫງວນ.

ການສ້າງລະບຽບຄຸ້ມຄອງ ວັງສະຫງວນຂອງບ້ານສົມສະໝຸກ-ບ້ານດ້າງ ແມ່ນເກີດຂຶ້ນ ມາຈາກການສະເໜີຮ່ວມກັນຂອງປະຊາຊົນທຸກຄົນພາຍໃນບ້ານ ໂດຍມີເປົ້າໝາຍເພື່ອອະນຸລັກສັດນ້ຳຢູ່ໃນຫ້ວຍເຈົ່າ ບໍ່ໃຫ້ສູນພັນ ແລະ ໃຫ້ສາມາດແຜ່ພັນເພື່ອປະຊາຊົນພາຍໃນບ້ານສາມາດພຶ່ງອາໄສສຳລັບເປັນແຫຼ່ງອາຫານຂອງເຂົາເຈົ້າໄດ້. ສະນັ້ນເພື່ອຮັບປະກັນເຖິງຄວາມຍືນຍົງ ແລະ ຄວາມເປັນເຈົ້າການຂອງປະຊາຊົນທັງສອງບ້ານ ໃນທຸກໆຂະບວນການແມ່ນໄດ້ເນັ້ນເຖິງການມີສ່ວນຮ່ວມຂອງປະຊາຊົນໃນການສະ ແດງຄວາມຄິດເຫັນ ແລະ ການຕັດສິນໃຈ ໂດຍລະບຽບ ແລະ ມາດຕະການຕ່າງໆແມ່ນໄດ້ຕົກລົງຮັບຮອງເອົາອີງໃສ່ສຽງສ່ວນຫຼາຍຂອງປະຊາຊົນເຊິ່ງໃນຂັ້ນບ້ານແມ່ນໄດ້ມີການຜ່ານແຕ່ລະຂໍ້ ແລະ ໃຫ້ທຸກຄົນຍົກມືຮັບຮອງເອົາ ຫຼື ສະເໜີໃຫ້ມີການປັບປຸງ ເຊິ່ງສິ່ງດັ່ງກ່າວແມ່ນສະແດງອອກຢູ່ໃນບັນດາລະບຽບຕ່າງໆທີ່ລະບຸຢູ່ໃນລະບຽບຄຸ້ມຄອງວັງສະຫງວນຫ້ວຍເຈົ່າ. ຕົວຢ່າງບາງຂໍ້ຫ້າມມີຄື:

⇒ ພາຍຫຼັງປະກາດກົດລະບຽບແມ່ນຕ້ອງປິດວັງຈົນຄົບສາມປີຈຶ່ງປະກາດເປີດວັງ ແລະ ປີຕໍ່ໆໄປແມ່ນເປີດວັງປີລະໜຶ່ງຄັ້ງ. ໃນຊ່ວງເດືອນ ມີນາ ໃນໄລຍະເວລາໜຶ່ງມື້ເທົ່ານັ້ນໂດຍການປະກາດຂອງນາຍບ້ານ, ສ່ວນຊ່ວງເວລາອື່ນໆ ແມ່ນຈະປິດວັງເພື່ອໃຫ້ປາໄດ້ແຜ່ພັນ.

⇒ ຫ້າມນຳໃຊ້ເຄື່ອງມືຫາປາທີ່ຜິດກົດໝາຍເຊັ່ນ: ລະເບີດ, ຢາເບື່ອ, ໝໍ້ຊ໋ອດ, ໝໍ້ດູດ, ອາວຸດປືນທຸກຊະນິດ,ຫ້າມເຮັດຮຸ້ມ ແລະ ອື່ນໆຢ່າງເດັດຂາດ.

*ຄັດມາຈາກ: ຢ້ອນໜ້າ 3 ແລະ 4, ຂໍ້ 5.1. ວ່າດ້ວຍຂໍ້ຫ້າມ ໃນມາດຕາ 5 ວ່າດ້ວຍກົດລະບຽບໃນການຄຸ້ມຄອງວັງສະຫງວນ, ກົດລະບຽບກ່ຽວກັບການຄຸ້ມຄອງວັງສະຫງວນ ບ້ານສົມສະໝຸກ - ບ້ານດ້າງ, ລົງວັນທີ 24/8/2024*

ກ່ອນທີ່ຈະມີການນຳສະເໜີກົດລະບຽບຄຸ້ມຄອງວັງສະຫງວນ ອາສາສະໝັກໄດ້ມີການເຮັດກິດຈະກຳປູກຈິດສຳນຶກກ່ຽວກັບລະບຽບກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງວັງສະຫງວນໃຫ້ປະຊາຊົນໄດ້ຮັບຮູ້ຢ່າງຊັດເຈນ ເພື່ອໃຫ້ເຂົາເຈົ້າຮູ້ເຖິງຄວາມສຳຄັນ ແລະ ຄວາມພ້ອມພຽງກັນໃນການປະຕິບັດຕາມລະບຽບຄຸ້ມຄອງທີ່ສອດຄ້ອງກັບນະໂຍບາຍ ແລະ ກົດໝາຍທີ່ກ່ຽວຂ້ອງ.

ນອກຈາກກົດລະບຽບຄຸ້ມຄອງວັງສະຫງວນ ທີ່ສ້າງຂຶ້ນເພື່ອໃຫ້ປະຊາຊົນໄດ້ຮັບຮູ້ກັນພາຍໃນບ້ານ ສິ່ງທີ່ຊ່ວຍໃຫ້ປະຊາຊົນຮັບຮູ້ດີທີ່ສຸດກໍ່ຄືການມີເຄື່ອງໝາຍບອກຂອບເຂດວັງສະຫງວນ.ແມ່ຍິງທ່ານໜຶ່ງຢູ່ບ້ານສົມສະໝຸກກ່າວວ່າ ***"ຫຼັງຈາກທີ່ແລ້ວກອງປະ***

[9] ລາຍລະອຽດ ແມ່ນເບິ່ງຢູ່ໃນຮູບພາບແຜນທີ່ວັງສະຫງວນບ້ານສົມສະໝຸກ-ບ້ານດ້າງ ໃນເອກະສານຊ້ອນທ້າຍ

*ປະຊຸມທີ່ຜ່ານລະບຽບຄຸ້ມຄອງວັງສະຫງວນແລ້ວ ນາຍບ້ານກໍ່ໄດ້ແຈ້ງຜ່ານໂທລະໂຄ່ງຕື່ມເພື່ອໃຫ້ປະຊາຊົນຮູ້; ໃນການແຈ້ງເພີ່ມກໍ່ໃຫ້ຮູ້ວ່າມີລະບຽບອັນ ແລະ ຂໍ້ຫ້າມອັນໃດແດ່ຕໍ່ກັບການຫາປາຢູ່ຫ້ວຍເຈົ່າ. ນອກຈາກນັ້ນ ສິ່ງທີ່ເປັນປະຈັກຕາທີ່ສຸດກໍ່ຄື ມີການນໍາເອົາປ້າຍ ເຂດວັງສະຫງວນໄປໝາຍຂອບເຂດບ່ອນທີ່ໄດ້ກໍານົດເປັນວັງສະຫງວນ ເຊິ່ງຊ່ວຍໃຫ້ເວລາຄົນໄປຫາປາຢູ່ຫ້ວຍເຈົ່າຮູ້ວ່າເຂດໃດເປັນເຂດຫວງຫ້າມທີ່ບໍ່ສາມາດເຂົ້າໄປຫາໄດ້, ອັນນີ້ຖືວ່າສໍາຄັນຫຼາຍ."*

ການມີສ່ວນຮ່ວມຂອງປະຊາຊົນໃນການກໍານົດລະບຽບ ແລະ ນະໂຍບາຍຕ່າງໆ ຢູ່ໃນລະບຽບຄຸ້ມຄອງວັງສະຫງວນນີ້ແມ່ນພຽງແຕ່ເປັນການອະນຸລັກຊັບພະຍາກອນ ແລະ ສັດນໍ້າ ເທົ່ານັ້ນ ແຕ່ຍັງເປັນການສົ່ງເສີມສິດເປັນເຈົ້າຂອງຊຸມຊົນໃນການຄຸ້ມຄອງຊັບພະຍາກອນທໍາມະຊາດ ໂດຍສະເພາະແຫຼ່ງນໍ້າ ດັ່ງທີ່ຄະນະບ້ານ ບ້ານສົມສະໜຸກໄດ້ກ່າວວ່າ ***"ການສ້າງວັງສະຫງວນມີສ່ວນຊ່ວຍໃນການສົ່ງເສີມຄວາມເປັນເຈົ້າການໃນການເຂົ້າເຖິງແຫຼ່ງນໍ້າ, ນໍາໃຊ້ ແລະ ຄຸ້ມຄອງແຫຼ່ງນໍ້າ ເພາະເຫັນວ່າລະບຽບໃນການຄຸ້ມຄອງນີ້ ບໍ່ສະເພາະແຕ່ວັງສະຫງວນເທົ່ານັ້ນ ແຕ່ມັນຄອບຄຸມເຖິງການຄຸ້ມຄອງແຫຼ່ງນໍ້າ ແລະ ຊັບພະຍາກອນທໍາມະຊາດຢູ່ໃນບໍລິເວນໃກ້ຄຽງ ໃຫ້ມີຄວາມອຸດົມສົມບູນຂຶ້ນອີກດ້ວຍ."***

## 3.2. ກົດລະບຽບຄຸ້ມຄອງວັງສະຫງວນບ້ານນໍ້າອ້ອນ ເມືອງໄຊຈໍາພອນ ແຂວງ ບໍລິຄໍາໄຊ

ບ້ານນໍ້າອ້ອນເປັນບ້ານທີ່ຕັ້ງຢູ່ເທດສະບານ ແລະ ມີປະຊາຊົນຫຼາຍຄົນດໍາລົງຊີວິດຢູ່ເຊິ່ງລວມເຖິງປະຊາຊົນທີ່ດໍາລົງຊີວິດມາແຕ່ດົນນານ ແລະ ມີຫຼາຍຄົນໄດ້ຍ້າຍມາດໍາລົງຊີວິດຢູ່ໃນບ້ານດັ່ງກ່າວ. ເນື່ອງຈາກເປັນບ້ານທີ່ຢູ່ໃນເຂດພູດອຍ ສະນັ້ນວິຖີການດໍາລົງຊີວິດຂອງປະຊາຊົນແມ່ນອາໄສຊັບພະຍາກອນເປັນຫຼັກ ໂດຍສະເພາະການເກັບເຄື່ອງປ່າຂອງດົງຈາກປ່າ ແລະ ການຫາປາຕາມລໍານໍ້າ ແລະ ຫ້ວຍຕ່າງໆທີ່ຢູ່ອ້ອມຮອບບ້ານ. ແມ່ນໍ້າຈາດ ເປັນແມ່ນໍ້າໜຶ່ງທີ່ມີຄວາມສໍາຄັນຕໍ່ກັບປະຊາຊົນຢູ່ພາຍໃນບ້ານນໍ້າອ້ອນ ເນື່ອງຈາກເປັນແຫຼ່ງນໍ້າທີ່ປະຊາຊົນອາໄສໃນການຫາປາ ເພື່ອນໍາມາເປັນແຫຼ່ງອາຫານຢູ່ພາຍໃນຄອບຄົວ ແລະ ຂາຍເພື່ອສ້າງລາຍໄດ້ໃຫ້ກັບບາງຄອບຄົວ. ເຊິ່ງຈະບໍ່ແມ່ນແມ່ນໍ້າໃຫຍ່ ແຕ່ຈາກການເລົ່າຂອງປະຊາຊົນພາຍໃນບ້ານໄດ້ບອກວ່າ ເປັນແມ່ນໍ້າໜຶ່ງທີ່ມີຄວາມອຸດົມສົມບູນ ໂດຍສະເພາະໃນໄລຍະທີ່ຜ່ານມາ ແລະ ເປັນຫ້ວຍນໍ້າທີ່ມີປາຫຼາກຫຼາຍຊະນິດເຊັ່ນ: ປາຂັງ, ປາເຄິງ, ປາຈາດ, ປາມ່ອມ, ປາຊາ, ປາຄັງລົດ ເປັນຕົ້ນ. ມາເຖິງປັດຈຸບັນເນື່ອງຈາກມີການຫາໂດຍການໃຊ້ເຄື່ອງມືແບບດັບສູນເຊັ່ນ: ການໃຊ້ໄຟຟ້າຊ໋ອດ, ການໃຊ້ລະເບີດ, ຢາເບື່ອ ແລະ ປະ ກອບກັບການບໍ່ມີລະບຽບຄຸ້ມຄອງທີ່ເຂັ້ມງວດ ສະນັ້ນຈຶ່ງເຮັດປາໃນຫ້ວຍນໍ້າດັ່ງກ່າວ ໂດຍສະເພາະໃນບໍລິເວນຂອງບ້ານ ນໍ້າອ້ອນ ແມ່ນນັບມື້ນັບສູນພັນໄປ.

> "ແຕ່ກ່ອນໄປເຮືອນໃດກໍ່ມີປາ ເພາະຄົນກໍ່ບໍ່ຫຼາຍ, ແຕ່ລະຄອບຄົວຫາພໍຊໍ່າກິນ; ປາທີ່ຫາມາໝົດຈຶ່ງໄປຫາໃໝ່. ປັດຈຸ ບັນຍິ່ງເປັນບ້ານທີ່ຕັ້ງຢູ່ເທດສະບານເມືອງ ຄົນກໍ່ນັບມື້ນັບຫຼາຍຂຶ້ນ ການຫາປາກໍ່ບໍ່ແມ່ນແຕ່ສະ ເພາະຫາມາກິນເທົ່ານັ້ນ ແລ້ວ ແຕ່ເປັນການຫາມາຂາຍເປັນສິນຄ້າ ແຕ່ລະຄົນຫາເປັນ 10 ເປັນ 20 ໂລ ກໍ່ບໍ່ພໍ ດັ່ງນັ້ນຈຶ່ງເປັນເຫດຜົນທີ່ເຮັດໃຫ້ປາເລີ່ມດັບສູນໄປ. ຖ້າເຮົາບໍ່ອະນຸລັກໄວ້ກໍ່ໝາຍຄວາມວ່າ ຢູ່ຫ້ວຍນໍ້ານີ້ກໍ່ຈະສູນພັນໄປໝົດທຸກສິ່ງຢ່າງ."
>
> ທ່ານ ແສງຈັນ ມັນນະພົມ, ຫົວໜ້າແນວໂຮມ ບ້ານນໍ້າອ້ອນ

ຕາມການບອກເລົ່າຄະນະບ້ານໃຫ້ຮູ້ວ່າ ໃນປີ 2015 ບ້ານນໍ້າອ້ອນໄດ້ເຄີຍສ້າງເປັນວັງສະຫງວນຂອງບ້ານ ທີ່ຄຸ້ມຄອງກັນເອງພາຍໃນບ້ານ ແຕ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ດີ ເນື່ອງຈາກຫຼາຍຄົນບໍ່ເຄົາລົບຕໍ່ລະບຽບຄຸ້ມຄອງປະກອບກັບຄວາມບໍ່ເຂັ້ມແຂງຂອງການໃຊ້ລະບຽບຕໍ່ກັບຜູ້ກະທໍາຜິດ ພ້ອມກັນນັ້ນໃນຕອນນັ້ນ ກໍ່ບໍ່ໄດ້ມີການກໍານົດລະ ບຽບຄຸ້ມຄອງຢ່າງລະອຽດ ແລະ ບໍ່ໄດ້ມີການແຕ່ງຕັ້ງຄະນະຄຸ້ມຄອງ ສະເພາະສະນັ້ນຈຶ່ງເຮັດໃຫ້ຫຼາຍຄົນບໍ່ໃຫ້ຄວາມສໍາຄັນ ແລະ ມີການຫາປາໃນຮູບແບບດັບສູນ ໂດຍບໍ່ໄດ້ຄໍານຶງເຖິງຜົນກະທົບທີ່ຈະຕາມມາ. ຕໍ່ກັບບັນຫາທີ່ເກີດຂຶ້ນປະຊາຊົນພາຍໃນບ້ານຫຼາຍຄົນ ຈຶ່ງໄດ້ມີການສະເໜີຕໍ່ກັບອາສາສະໝັກ ແລະ ໂຄງການໄລຟ໌ ໃນການສະໜັບສະໜູນບ້ານ ເພື່ອສ້າງລະບຽບຄຸ້ມຄອງວັງສະຫງວນໃຫ້ມີຄວາມເຂັ້ມແຂງຫຼາຍກວ່າທີ່ຜ່ານມາ ເພື່ອເຮັດເປັນລະບຽບທີ່ສາມາດນໍາມາຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ໂດຍມີຈຸດປະສົງ ເພື່ອປ້ອງກັນບໍ່ໃຫ້ພັນປາທີ່ມີຢູ່ໃນຫ້ວຍນໍ້າຈາດນັ້ນສູນພັນໄປ.

ຕໍ່ກັບຂໍ້ສະເໜີຂອງບ້ານ ທາງອາສາສະໝັກພ້ອມດ້ວຍທີມງານໂຄງການ ແລະ ຂັ້ນເມືອງ ໄດ້ມີການປຶກສາຫາລືຕໍ່ກັບຂໍ້ສະເໜີດັ່ງກ່າວ ເພື່ອສະໜັບສະໜູນຄວາມຕ້ອງການຂອງບ້ານ ເນື່ອງຈາກເຫັນວ່າເປັນຂໍ້ສະເໜີທີ່ສອດຄ້ອງກັບເປົ້າໝາຍຂອງໂຄງການ ແລະ ແຜນພັດທະນາຂອງເມືອງ. ສະນັ້ນຈຶ່ງມີການຕົກລົງເຫັນດີຮ່ວມກັນໃນການສະໜັບສະ ໜູນບ້ານນ້ຳອ້ອນໃນການກຳນົດເຂດວັງສະຫງວນຂອງບ້ານ. ຂະບວນການໃນການສ້າງວັງສະຫງວນຂອງບ້ານແມ່ນມີລາຍລະອຽດຕາມແຜນວາດທີ 1.

ວັງສະຫງວນບ້ານນ້ຳອ້ອນ ມີລວງຍາວປະມານ 1,195 ແມັດ, ລວງກວ້າງປະມານ 67 ແມັດ ແລະ ມີເນື້ອທີ່ທັງໝົດປະມານ 8 ເຮັກຕາ. ວັງສະຫງວນນີ້ຕັ້ງຢູ່ຫ້ວຍນ້ຳຈາດ ເຊິ່ງຈຸດຕົ້ນວັງສະຫງວນ ຫ່າງຈາກບ້ານນ້ຳອ້ອນ ປະມານ 1.5 ກມ ແລະ ຈຸດທ້າຍວັງແມ່ນ ຫ່າງຈາກບ້ານນ້ຳອ້ອນ ປະມານ 1 ກມ. ຂອບເຂດວັງສະຫງວນຂອງບ້ານນ້ຳອ້ອນແມ່ນ ໄດ້ກຳນົດເອົາ 2 ວັງຄື: ວັງສອມ ແລະ ວັງທ່າເຮືອ.[10]




ຮູບທີ10: ກິດຈະກຳການກຳນົດເຂດວັງສະຫງວນ ຢູ່ບ້ານນ້ຳອ້ອນ

ເປົ້າໝາຍຫຼັກຂອງການການສ້າງວັງສະຫງວນບ້ານນ້ຳອ້ອນ ແມ່ນເພື່ອການເຮັດໃຫ້ມີຄວາມເຂັ້ມງວດຫຼາຍຂຶ້ນຕໍ່ກັບການຈັດຕັ້ງປະຕິບັດລະບຽບ ເນື່ອງຈາກທີ່ຜ່ານມາເຫັນວ່າ ທາງບ້ານບໍ່ມີການກຳນົດລະບຽບຢ່າງລະອຽດ ໂດຍສະ ເພາະມາດຕະການຕ່າງໆ ລວມເຖິງໜ່ວຍງານທີ່ຮັບຜິດຊອບຕໍ່ກັບການຄຸ້ມຄອງວັງສະຫງວນຂອງບ້ານ ສະນັ້ນຈຶ່ງຍັງບໍ່ທັນມີຄວາມເຂັ້ມແຂງເທົ່າທີ່ຄວນ. ສຳລັບລະບຽບຄຸ້ມຄອງວັງສະຫງວນຂອງບ້ານນ້ຳອ້ອນ ໄດ້ກຳນົດຂໍ້ຫ້າມ ແລະ ມາດຕະການຕ່າງໆ ອີງຕາມການຕົກລົງເຫັນດີຂອງປະຊາຊົນພາຍໃນບ້ານ ເພື່ອຮັບປະກັນການມີສ່ວນຮ່ວມ ແລະ ການເຫັນດີເຫັນພ້ອມຂອງທຸກໆຄົນ ເຊິ່ງລະບຽບບາງຂໍ້ທີ່ສຳຄັນທີ່ລະບຸໃນລະບຽບຄຸ້ມຄອງມີຄື:

⇒ ເປັນສະຖານທີ່ອະນຸລັກ, ປົກປັກຮັກສາຊະນິດພັນປາ ແລະ ສັດນ້ຳຊະນິດອື່ນໆໃຫ້ມີຄວາມອຸດົມສົມບູນ ແລະ ຍືນຍົງ.

⇒ ຖ້າຫາກພົບເຫັນຜູ້ໃດຫາສັດນ້ຳ ແລະ ສັດປ່າທຸກໆປະເພດໃນຂອບເຂດວັງສະຫງວນ ດ້ວຍເຄື່ອງມືຫາປາທີ່ຜິດກົດໝາຍເຊັ່ນ: ໝໍ້ຊ໋ອດ,ລະເບີດ, ຢາ ເບື່ອ, ທາດເຄມີ,ໝໍ້ດູດ, ອາວຸດປືນທຸກຊະນິດ ແລະ ເຄື່ອງມືທີ່ເກືອບຫ້າມອື່ນໆ ຄັ້ງທີ 1 ແມ່ນປັບໄໝ 3,000,000 ກີບ ຕໍ່ຄົນ; ຄັ້ງທີ 2 ປັບໄໝ 6,000,000 ກີບ ຕໍ່ຄົນ ແລະ ຄັ້ງທີ 3 ປັບໄໝ 10,000,000 ກີບຕໍ່ຄົນ.

*ຄັດມາຈາກ: ຂໍ້ 2, ມາດຕາ 2 ວ່າດ້ວຍຈຸດປະສົງຂອງການສ້າງວັງສະຫງວນ ແລະ ຂໍ້ 3, ຂໍ້ 6.2. ມາດຕະການຕໍ່ຜູ້ລະເມີດ, ມາດຕາ 6 ວ່າດ້ວຍກົດລະບຽບໃນການຄຸ້ມຄອງວັງສະຫງວນ, ກົດລະບຽບກ່ຽວກັບການຄຸ້ມຄອງວັງສະຫງວນບ້ານນ້ຳອ້ອນ, ເລກທີ 01/ນບ.ນອ, ລົງວັນທີ 18/9/2024*

[10] ລາຍລະອຽດ ແມ່ນເບິ່ງຢູ່ໃນຮູບພາບແຜນທີ່ວັງສະຫງວນບ້ານນ້ຳອ້ອນ ໃນເອກະສານຊ້ອນທ້າຍ

ໃນການສ້າງລະບຽບຄຸ້ມຄອງວັງສະຫງວນຢູ່ສອງບ້ານນີ້ ທັງປະຊາຊົນ ແລະ ຂັ້ນເມືອງ ແມ່ນມີຄວາມຄາດຫວັງຢ່າງຍິ່ງຕໍ່ກັບການຈັດຕັ້ງປະຕິບັດລະບຽບໃຫ້ມີຄວາມເຂັ້ມງວດຫຼາຍຂຶ້ນເນື່ອງຈາກບ້ານນ້ຳອ້ອນເປັນບ້ານໃຫຍ່ ແລະ ເປັນບ້ານຕັ້ງຢູ່ເທດສະບານເມືອງ ຈຶ່ງຢາກສ້າງໃຫ້ເປັນບ້ານແບບຢ່າງຂອງເມືອງ. ສະນັ້ນຈຶ່ງເຫັນວ່າ ການຄຸ້ມຄອງວັງສະຫງວນນີ້ຈະເປັນການປະກອບສ່ວນສຳຄັນແກ່ບ້ານ ແລະ ເມືອງ ໃຫ້ສາມາດບັນລຸເປົ້າໝາຍດັ່ງກ່າວ.

1. ການສະເໜີຂອງບ້ານຫາຫ້ອງ ການກະສິກຳ ແລະ ປ່າໄມ້ ຕໍ່ກັບເຈດຈຳນົງໃນການສ້າງວັງສະຫງວນຂອງບ້ານ
2. ທີມງານຂັ້ນເມືອງ, ໂຄງການ ແລະ ອາສາສະໝັກ ປຶກສາຫາລືຕໍ່ກັບຂະບວນການໃນການສ້າງວັງສະຫງວນຂອງບ້ານ
3. ອາສາສະໝັກເຜີຍແຜ່ຂໍ້ມູນຄວາມສຳຄັນຂອງການສ້າງວັງສະຫງວນ ແລະ ຮ່ວມກັບບ້ານ ໃນການຕົກລົງເປັນເອກະພາບໃນການສ້າງວັງສະຫງວນຂອງບ້ານ
4. ທີມງານຂັ້ນເມືອງ, ໂຄງການ, ອາສາສະໝັກ ແລະ ປະຊາຊົນພາຍໃນບ້ານສຳຫຼວດພື້ນທີ່ຕົວຈິງທີ່ຈະກຳນົດເປັນເຂດວັງສະຫງວນ
5. ທີມງານຂັ້ນເມືອງ ນຳເອົາຂໍ້ມູນຈາກການສຳຫຼວດມາເຂົ້າໃນລະບົບ Google Earth ເພື່ອໝາຍຈຸດທີ່ວັດແທກ ຂອບເຂດທີ່ກຳນົດເປັນວັງສະຫງວນຂອງບ້ານ
6. ທີມງານຂັ້ນເມືອງ, ໂຄງການ ແລະ ອາສາສະໝັກ ປຶກສາຫາລືຮ່ວມກັບຄະນະບ້ານ ຕໍ່ກັບຮ່າງລະບຽບຄຸ້ມຄອງວັງສະຫງວນ ແລະ ການສະເໜີລາຍຊື່ຄະນະກຳມະການຄຸ້ມຄອງວັງສະຫງວນຂອງບ້ານ
7. ທີມງານຂັ້ນເມືອງ, ໂຄງການ ແລະ ອາສາສະໝັກ ຜ່ານຮ່າງລະບຽບຄຸ້ມຄອງວັງສະຫງວນບ້ານ ແລະ ເພື່ອຕົກລົງຮ່ວມກັນໃນການຮັບຮອງເອົາລະບຽງຄຸ້ມຄອງວັງສະຫງວນກັບຂັ້ນບ້ານ
8. ເຈົ້າເມືອງລົງລາຍເຊັນ ໃນການຮັບຮູ້ ແລະ ເຫັນດີ ສຳລັບການລະບຽບຄຸ້ມຄອງວັງສະຫງວນຂອງບ້ານ ແລະ ການແຕ່ງຕັ້ງຄະນະກຳມະການຄຸ້ມຄອງວັງສະຫງວນ

**ແຜນວາດທີ 1: ຂະບວນການ ແລະ ຂັ້ນຕອນໃນການສ້າງວັງສະຫງວນໃນ 2 ບ້ານເປົ້າໝາຍ**

ເນື່ອງຈາກ ໂຄງຮ່າງລະບຽບຄຸ້ມຄອງວັງສະຫງວນຂັ້ນບ້ານ ຍັງບໍ່ໄດ້ມີກຳນົດສະເພາະໄວ້ໃນນິຕິກຳໃດໜຶ່ງສະນັ້ນຈຶ່ງໄດ້ອີງໃສ່ ໂຄງການຮ່າງຕ່າງໆທີ່ທາງຂັ້ນເມືອງ ຫຼື ອົງການທີ່ເຮັດວຽກກ່ຽວຂ້ອງ ໄດ້ສ້າງຂຶ້ນມາ ເພື່ອເປັນບ່ອນອ້າງອີງ ແລະ ປັບນຳໃຊ້ໃຫ້ແທດເໝາະຕໍ່ກັບການສ້າງລະບຽບຄຸ້ມຄອງວັງສະຫງວນໃນຄັ້ງນີ້. ໃນລະບຽບນີ້ແມ່ນອີງໃສ່ກົດໝາຍທີ່ກ່ຽວຂ້ອງຄື: ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (2015), ກົດໝາຍວ່າດ້ວຍ ສັດນ້ຳ ແລະ ການປະມົງ (2023) ແລະ ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (2012). ເນື້ອໃນຫຼັກໆຂອງກົດລະບຽບຄຸ້ມຄອງວັງສະຫງວນ ແມ່ນປະກອບດ້ວຍ ຂໍ້ມູນໂດຍທົ່ວໄປຂອງວັງສະຫງວນ, ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງວັງສະຫງວນ, ຂໍ້ຫ້າມ, ມາດຕະການຕໍ່ຜູ້ລະເມີດ ລວມເຖິງນະໂຍບາຍຕໍ່ຜູ້ທີ່ມີຜົນງານ ຕໍ່ກັບການປົກປັກຮັກສາວັງສະຫງວນ.

ຈາກທີ່ກ່າວໃນເບື້ອງຕົ້ນວ່າ ຂະບວນການສ້າງວັງສະຫງວນຢູ່ທັງສອງບ້ານ ແມ່ນມີການດຳເນີນໂດຍ ການເນັ້ນການມີສ່ວນຮ່ວມຂອງປະຊາຊົນ ແລະ ຕ້ອງໃຫ້ໝັ້ນໃຈວ່າປະຊາຊົນສາມາດເຂົ້າໃຈໄດ້ລະບຽບໃນແຕ່ລະຂໍ້ທີ່ລະບຸໄວ້ໃນຮ່າງລະບຽບຄຸ້ມຄອງວັງສະຫງວນ. ສະນັ້ນໃນຂັ້ນຕອນການຜ່ານຮ່າງລະບຽບຄຸ້ມຄອງວັງສະຫງວນຂັ້ນບ້ານ ທີມງານຂັ້ນເມືອງ, ອາສາສະໝັກ ແລະ ໂຄງການ ໄດ້ອະທິບາຍລະອຽດໃນແຕ່ລະຂໍ້ ພ້ອມທັງເປີດໃຫ້ປະຊາຊົນໄດ້ສະເໜີຄວາມຄິດເຫັນວ່າເຫັນດີ ຫຼື ບໍ່ ຫຼື ຈະມີການປັບປຸງແນວໃດໃຫ້ເໝາະສົມ ແລະ ດີຂຶ້ນ. ເຊິ່ງວິທີການນີ້ແມ່ນຊ່ວຍໃນການຮັບ ປະກັນການປຶກສາຫາລືຢ່າງມີສ່ວນຮ່ວມ ພ້ອມທັງເປີດໃຫ້ປະຊາຊົນສະເໜີສິ່ງທີ່ເຂົາເຈົ້າຢາກຈະເພີ່ມເຕີມ ຫຼື ປັບປ່ຽນ ເພື່ອໃຫ້ລະບຽບຄຸ້ມຄອງມີເນື້ອທີ່ທີ່ຫັດກຸມ ແລະ ແທດເໝາະກັບການນຳມາຈັກຕັ້ງປະຕິບັດຕົວຈິງໃນຂັ້ນທ້ອງຖິ່ນ.

# 4. ບັນດານິຕິກຳ, ນະໂຍບາຍ ແລະ ແຜນຍຸດທະສາດທີ່ກ່ຽວຂ້ອງກັບການສ້າງວັງສະຫງວນ ແລະ ບາງບົດຮຽນທີ່ດີຈາກການວັງສະຫງວນຢູ່ໃນປະເທດລາວ

## 4.1. ນິຕິກຳ ແລະ ນະໂຍບາຍທີ່ກ່ຽວຂ້ອງ

ການສ້າງວັງສະຫງວນ ແມ່ນຍຸດທະສາດໜຶ່ງທີ່ສຳຄັນຂອງລັດຖະບານລາວ ໂດຍສະເພາະແມ່ນຂະແໜງລ້ຽງສັດ ແລະ ການປະມົງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ເພື່ອແນໃສ່ການອະນຸລັກສັດນ້ຳ ໂດຍສະເພາະແມ່ນປາຢູ່ຕາມແຫຼ່ງນ້ຳຕ່າງໆໃຫ້ມີຄວາມອຸດົມສົມບູນ ໂດຍການມີສ່ວນຮ່ວມຂອງປະຊາຊົນໃນທ້ອງຖິ່ນ; ທັງເປັນການປົກປັກຮັກສາທຳມະຊາດ, ສິ່ງແວດລ້ອມ, ລະບົບນິເວດທາງນ້ຳ, ການເພີ່ມຈຳນວນ ແລະ ຊະນິດຂອງປາຢູ່ຕາມແຫຼ່ງນ້ຳທຳມະຊາດໃຫ້ຫຼາຍຂຶ້ນ ແລະ ສາມາດສ້າງລາຍຮັບໃຫ້ແກ່ປະຊາຊົນຢ່າງຍືນຍົງ.[11]

ອີງຕາມ ມາດຕາ 31 (ວັກ 1) ຂອງກົດໝາຍວ່າດ້ວຍ ສັດນ້ຳ ແລະ ການປະມົງ (ສະບັບປັບປຸງ), ເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023 ລະບຸວ່າ ວັງສະຫງວນ ແມ່ນ ແຫຼ່ງນ້ຳໃດໜຶ່ງທີ່ກຳນົດຂຶ້ນຢູ່ຕາມ ແມ່ນ້ຳ, ອ່າງເກັບນ້ຳ, ອ່າງຮັບນ້ຳທີ່ມີນ້ຳຕະຫຼອດປີ ເພື່ອເປັນແຫຼ່ງທີ່ຢູ່ອາໄສ ແລະ ແຜ່ພັນຢ່າງປອດໄພຂອງສັດນ້ຳ.

ການສ້າງວັງສະຫງວນ ໃນປັດຈຸບັນແມ່ນຍັງບໍ່ທັນມີລະບຽບການອັນສະເພາະ ທີ່ລະບຸເຖິງຂັ້ນຕອນ ແລະ ຂະບວນການຂອງການສ້າງຕັ້ງວັງສະຫງວນ ເຊິ່ງຕ່າງຈາກ ວຽກງານການຄຸ້ມຄອງປ່າຂັ້ນບ້ານ ທີ່ໄດ້ມີນິຕິກຳອັນສະເພາະເປັນບ່ອນອີງ ເຊິ່ງຊ່ວຍໃຫ້ມີຄວາມຊັດເຈນຕໍ່ກັບການຈັດຕັ້ງປະຕິບັດໃນຂັ້ນຕອນຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້ຂັ້ນບ້ານ. ສະນັ້ນການສ້າງລະບຽບຄຸ້ມຄອງວັງສະຫງວນຂັ້ນບ້ານ ເຫັນວ່າຍັງເປັນຄວາມທ້າທາຍໃນຂອດຂອງການຈັດຕັ້ງປະຕິບັດ ເພາະ ຍັງບໍ່ມີບ່ອນອີງ ທາງດ້ານນິຕິກຳສະເພາະທີ່ເວົ້າເຖິງຂະບວນການສ້າງ ຫຼື ໂຄງຮ່າງຂອງລະບຽບຄຸ້ມຄອງວັງສະຫງວນຂັ້ນບ້ານ ທີ່ສາມາດໃຊ້ເປັນບ່ອນອີງເປັນເອກະພາບໃນຂອບເຂດທົ່ວປະເທດ. ຢ່າງໃດກໍ່ຕາມ ໃນກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປີ 2023) ວັກທີ 2 ຂອງມາດຕາ 31 ກໍ່ໄດ້ລະບຸວ່າ ການສ້າງວັງສະຫງວນ ໃຫ້ປະຕິບັດຕາມຂັ້ນຕອນ ແລະ ລະບຽບການ ທີ່ກະຊວງກະສິກຳ ແລະ ປ່າໄມ້ກຳນົດ. ນັ້ນໝາຍຄວາມວ່າ ການສ້າງຕັ້ງວັງສະຫງວນແຕ່ລະພື້ນທີ່ໃນຂອບເຂດທົ່ວປະເທດລາວ ແມ່ນອີງໃສ່ລະບຽບສະເພາະຂອງແຕ່ລະທ້ອງຖິ່ນ ໂດຍໃຫ້ເນັ້ນການມີສ່ວນຮ່ວມຂອງປະຊາຊົນໃນທ້ອງຖິ່ນ ເຊິ່ງແມ່ນອຳນາດການປົກຄອງໃນທ້ອງຖິ່ນ ເປັນຜູ້ກຳນົດລະບຽບການຕ່າງໆຂຶ້ນມາຮ່ວມກັບປະຊາຊົນ ໂດຍມີວິຊາການດ້ານການປະມົງເປັນຜູ້ແນະນຳດ້ານເຕັກນິກວິຊາການ.[12]

ຄະນະກຳມາທິການແມ່ນ້ຳຂອງສາກົນ (MRC) ໄດ້ປະເມີນວ່າ: ຊະນິດພັນປາໃນອ່າງແມ່ນ້ຳຂອງຕອນລຸ່ມມີຫຼາຍກວ່າ 1,200 ຊະນິດ, ສຳລັບປະເທດລາວ ຊະນິດພັນປາພື້ນເມືອງທີ່ໄດ້ຮັບການຂຶ້ນບັນຊີມີຫຼາຍກວ່າ 609 ຊະນິດ (ໃນນີ້ 45 ຊະນິດ, ແມ່ນມີຄວາມສຳຄັນທາງດ້ານເສດຖະກິດ, ເປັນປາພື້ນເມືອງທີ່ມີລາຄາແພງ ແລະ ສ້າງລາຍໄດ້ໃຫ້ແກ່ຊາວປະມົງ). ພ້ອມນັ້ນຍັງໄດ້ມີການສຶກສາວ່າ: ເປັນຊະນິດພັນປາທີ່ມີການເຄື່ອນຍ້າຍຕາມລຳແມ່ນ້ຳຂອງ ແລະ ຍັງເປັນປາເສດຖະກິດ,ໃນຈຳນວນດັ່ງກ່າວ 18 ຊະນິດທີ່ມີເງື່ອນໄຂນຳໄປລ້ຽງໃນໜອງເພື່ອປັບປຸງເປັນຜະລິດຕະພັນ ແລະ ກາຍເປັນສິນຄ້າໃນອະນາຄົດ.[13]

ເຖິງຢ່າງໃດກໍ່ດີ ເພື່ອໃຫ້ທົ່ວປວງຊົນຮັບຮູ້ ແລະ ເຂົ້າໃຈຕໍ່ກັບນະໂຍບາຍຂອງລັດ ແລະ ເຫັນໄດ້ເຖິງຄວາມສຳ ຄັນຂອງປາ ແລະ ສັດນ້ຳ ຕໍ່ກັບການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ການປຸກລະດົມໃຫ້ທຸກພາກສ່ວນໃຫ້ທຸກພາກ ສ່ວນປະກອບສ່ວນເຂົ້າໃນການອະນຸລັກ, ປົກປັກຮັກສາ ແລະ ພັດທະນາປາ ແລະ ສັດນ້ຳຕາມກົດໝາຍ ແລະ ລະບຽບການກຳນົດ ເປັນເລື່ອງທີ່ມີຄວາມສຳຄັນ ເພື່ອເຮັດໃຫ້ແນວພັນປາພາຍໃນປະເທດລາວໃຫ້ມີຄວາມອຸດົມສົມບູນ ແລະ ທັງຍັງເປັນແນວທາງໃນການຟື້ນຟູສະພາບພື້ນທີ່ຕ່າງໆໃຫ້ດີຂຶ້ນກວ່າເກົ່າ ໂດຍສະເພາະການຮັກສາແນວພັນປາດັ້ງເດີມ ເພາະນັ້ນໝາຍເຖິງການຮັກສາລະບົບນິເວດຂອງນ້ຳໃຫ້ມີຄວາມຍືນຍົງ.

---

[11, 12] ຂ່າວສານປະເທດລາວ "ວັງສະຫງວນ ແຫລ່ງອະນຸລັກສັດນ້ຳ ໃຫ້ອຸດົມສົມບູນ", ເຂົ້າເຖິງວັນທີ 7 ພະຈິກ 2024: https://kpl.gov.la/detail.aspx?id=14949

[13] ແຈ້ງການຂອງກະຊວງກະສິກຳ ແລະ ປ່າໄມ້ສະບັບເລກທີ 3024/ກປ, ລົງວັນທີ11ມິຖຸນາ 2024 ວ່າດ້ວຍການສ້າງຂະບວນການປົກປັກຮັກສາ ແລະ ພັດທະນາປາ ແລະ ສັດນ້ຳ ເນື່ອງໃນວັນປ່ອຍປາ ແລະ ສັດນ້ຳແຫ່ງຊາດ 13 ກໍລະກົດ 2024

## 4.2. ບົດຮຽນທີ່ດີຈາກການສ້າງຕັ້ງວັງສະຫງວນ

ອີງຕາມນະໂຍບາຍຂອງລັດຖະບານລາວ ທີ່ເນັ້ນເຖິງຄວາມສຳຄັນໃນການອະນຸລັກພັນປາ ແລະ ຄວາມອຸດົມສົມບູນຂອງລະບົບນິເວດແມ່ນ້ຳ ການສ້າງວັງສະຫງວນ ເປັນຍຸດທະສາດໜຶ່ງ ເພື່ອໃຫ້ສາມາດບັນລຸເປົ້າໝາຍດັ່ງກ່າວ. ອີງຕາມຂໍ້ມູນຈາກກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ ທົ່ວປະເທດລາວ ມີວັງສະຫງວນປະ ມານ 1,000 ວັງ. ອົງການ WWF Laos[14] ແມ່ນອົງການຈັດຕັ້ງທາງສາກົນໜຶ່ງ ທີ່ມີບົດບາດສຳຄັນຫຼາຍໃນການສະໜັບສະໜູນຊຸມຊົນຕໍ່ກັບການສ້າງວັງສະຫງວນ ໂດຍເນັ້ນການມີສ່ວນຮ່ວມຂອງຊຸມຊົນຢູ່ໃນປະເທດລາວ. ໃນຈຳນວນວັງສະຫງວນທັງໝົດກວ່າ 1,000 ວັງນັ້ນ ມີເຖິງ 300 ວັງ ທີ່ໄດ້ຮັບການສະໜັບສະໜູນຈາກອົງການ WWF Laos ໃນການສ້າງ ແລະ ສົ່ງເສີມການບໍລິການຄຸ້ມຄອງທີ່ຊຸມຊົນເປັນເຈົ້າການ (ຂັ້ນບ້ານ). ໃນປີ 2024 ອົງກອນດັ່ງກ່າວ ຍັງໄດ້ສະໜັບສະໜູນສ້າງວັງສະຫງວນ ຈຳນວນ 7 ວັງ ກວມເອົາປະມານ 60 ເຮັກຕາ ຂອງເຂດແມ່ນ້ຳຂອງ ໃນ 7 ບ້ານ ທີ່ຕັ້ງຢູ່ເຂດແມ່ນ້ຳຂອງ ຕິດກັບປ່າສະຫງວນແຫ່ງຊາດພູຊຽງທອງ, ແຂວງສາລະວັນ.

ນອກຈາກອົງການ WWF Laos ແລ້ວ ຍັງມີຫຼາຍອົງການ ແລະ ໜ່ວຍງານທີ່ມີການສະໜັບສະໜູນຊຸມຊົນໃນການສ້າງວັງສະຫງວນແບບມີສ່ວນຮ່ວມເຊັ່ນ: ອົງການອາສາສະໝັກຍີ່ປຸ່ນ (JVC), ສະມາຄົມອະນຸລັກ, ອົງການອະນຸລັກສັດປ່າປະຈຳລາວ (WCS) ເປັນຕົ້ນ.

ໃນຊ່ວງການດຳເນີນກິດຈະກຳຢູ່ບ້ານນ້ຳອ້ອນ ທີມງານ ແລະ ອາສາສະໝັກກໍ່ໄດ້ມີການໃນການໄປສຶກສາເບິ່ງພື້ນທີ່ ວັງສະຫງວນທີ່ຕັ້ງຢູ່ບ້ານວັງບານ[15] ເປັນວັງທີ່ຢູ່ໃກ້ເຂດທີ່ກຳນົດເປັນເຂດວັງສະຫງວນຂອງບ້ານນ້ຳອ້ອນ. ວັງສະຫງວນດັ່ງກ່າວໄດ້ກຳນົດເປັນເຂດວັງນຳໃຊ້/ວັງຫວງຫ້າມເຂດສະຫງວນປາ (ປາຂັງ) ແລະ ສັດນ້ຳຊະນິດຕ່າງໆໃນເຂດວັງສະຫງວນຂະໜາດ 500 ແມັດ (ຕັ້ງຢູ່ສາຍແມ່ນ້ຳຈາດ). ວັງດັ່ງກ່າວແມ່ນສ້າງຂຶ້ນບົນພື້ນ ຖານການມີສ່ວນຮ່ວມຂອງປະຊາຊົນພາຍໃນບ້ານ ເຊິ່ງທຸກຄົນພາຍໃນບ້ານໄດ້ເຫັນເຖິງຄວາມສຳຄັນ ແລະ ຄຸນປະໂຫຍດຂອງການສ້າງວັງສະ ຫງວນດັ່ງກ່າວ ສະນັ້ນຈຶ່ງພ້ອມພຽງກັນໃນການປົກປັກຮັກສາ ແລະ ປະຕິບັດຕາມລະບຽບທີ່ໄດ້ວາງອອກ.



*"ການສ້າງວັນສະຫງວນ ຢູ່ບ້ານເຮົາແມ່ນໄດ້ຮັບຜົນດີຫຼາຍ ເຊິ່ງປັດໃຈຫຼັກໆທີ່ເຮັດໃຫ້ພວກເຮົາສາມາດເຮັດວຽກໂຕນີ້ໄດ້ແມ່ນຄວາມສາມັກຄີພາຍໃນບ້ານ ໂດຍການເຮັດວຽກຮ່ວມກັນຂອງປະຊາຊົນທັງໝົດ ໃນການຈັດຕັ້ງປະຕິບັດລະ ບຽບຄຸ້ມຄອງວັງສະຫງວນທີ່ສ້າງຂຶ້ນມາພ້ອມກັນ. ກົດລະບຽບທີ່ເຮົາສ້າງຂຶ້ນມາຈະມີຜົນສັກສິດແທ້ໆກໍ່ຕໍ່ເມື່ອເຮົາສາ ມາດນຳມາຈັດຕັ້ງປະຕິບັດໃຫ້ເຫັນຢ່າງປະຈັກຕາ ເຊິ່ງໃນບ້ານຂອງເຮົາແມ່ນໄດ້ເຮັດຜ່ານມາ ແລະ ໄດ້ຜົນແທ້ໆ."*

ທ່ານ ໄກຍ່າງ ຢາປ່າວ, ນາຍບ້ານ ບ້ານວັງບານ
ເມືອງໄຊຈຳພອນ, ແຂວງ ບໍລິຄຳໄຊ

ນອກຈາກວັງສະຫງວນດັ່ງກ່າວ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງໄຊຈຳພອນກໍ່ໄດ້ບອກວ່າ ທາງເມືອງມີເປົ້າໝາຍ ໃນການສ້າງວັງສະຫງວນໃຫ້ໄດ້ທຸກບ້ານຢູ່ທົ່ວເມືອງ ເຊິ່ງມີຫຼາຍວັງແມ່ນອາໄສຄວາມເຊື່ອ ປະກອບກັບກົດລະບຽບທີ່ເປັນລາຍລັກອັກສອນ ໃນການປົກປັກຮັກສາເຂດວັງສະຫງວນທີ່ໄດ້ມີການກຳນົດຂຶ້ນ ເຊິ່ງກໍ່ເຫັນວ່າຫຼາຍບ້ານແມ່ນໄດ້ຮັບຜົນດີ.

ຈາກຂໍ້ມູນທີ່ໄດ້ຄົ້ນຄວ້າເອກະສານ, ສື່ ແລະ ການໄດ້ເຫັນບາງພື້ນທີ່ຕົວຈິງຂອງທີມງານເຮົາປະກອບກັບການສຳພາດເມືອງ ແລະ ບ້ານທີ່ໄດ້ມີສ່ວນໃນການສ້າງວັງສະຫງວນ ໂດຍສະເພາະວັງສະຫງວນທີ່ສ້າງຂຶ້ນ ແລະ ໄດ້ຮັບຜົນສຳເລັດ ແມ່ນເຫັນວ່າໄດ້ສ້າງ

---

[14] ອົງການ WWF Laos ມີຊື່ເຕັມວ່າ World Wide Fund for Nature ປະຈຳປະເທດລາວ. ເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບອົງການນີ້ໄດ້ທີ່: https://www.wwf.org.la/

[15] ບ້ານວັງບານ ເປັນບ້ານທີ່ຕິດກັບບ້ານ ນ້ຳອ້ອນ ເຊິ່ງວັງສະຫງວນຂອງບ້ານນີ້ສ້າງຕັ້ງມາຕັ້ງແຕ່ປີ 2000 ເຊິ່ງກໍ່ມີບັນຫາ ແລະ ການປ່ຽນແປງເລື້ອຍໆ. ຈົນມາເຖິງປີ 2018 ວຽກງານຄຸ້ມຄອງວັງສະຫງວນແມ່ນມີຄວາມພົ້ນເດັ່ນ ໂດຍສະເພາະການມີລະບຽບຄຸ້ມຄອງຢ່າງຊັດເຈນ ແລະ ການປະຕິບັດລະບຽບທີ່ໄດ້ຮັບຜົນດີເລື້ອຍໆມາ. ເຂດວັງສະຫງວນນ້ຳອ້ອນ ແມ່ນຕິດກັບວັງສະຫງວນຂອງບ້ານ ວັງບ້ານເຊັ່ນກັນ.

ຜົນປະໂຫຍດຢ່າງຊັດເຈນ ຕໍ່ກັບປະຊາຊົນ ຫາກມີການຄຸ້ມຄອງທີ່ດີ ແລະ ມີສ່ວນຮ່ວມຂອງຊຸມຊົນ ໂດຍສະເພາະແມ່ນການປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ ໂດຍສະເພາະການສະໜອງແຫຼ່ງອາຫານ, ລາຍໄດ້ແກ່ປະຊາຊົນຈາກການກິດຈະກຳທ່ອງທ່ຽວແບບອະນຸລັກໃນເຂດວັງສະຫງວນ ແລະ ພ້ອມທັງຍັງສາມາດຮັກສາ ແລະ ອະນຸລັກແນວພັນປາດັ້ງເດີມຂອງລາວ ໃຫ້ຄົງຢູ່ໃນລະບົບນິເວດຂອງແມ່ນ້ຳ ແລະ ຫ້ວຍຕ່າງໆໄດ້ຢ່າງຍາວນານ.

## 5. ບົດຮຽນຈາກການເກັບກຳກໍລະນີສຶກສາຈາກສອງພື້ນທີ່

### 5.1. ການປ່ຽນແປງທາງດ້ານຄວາມຮູ້ ແລະ ທັກສະຂອງນັກສຶກສາ ທີ່ເປັນອາສາສະໝັກ

ຜ່ານການຮ່ວມກັນຈັດຕັ້ງປະຕິບັດກິດຈະກຳຕັ້ງແຕ່ເລີ່ມຕົ້ນຈົນເຖິງກິດຈະກຳຄັ້ງລ່າສຸດກໍ່ຄື ກິດຈະກຳສ້າງລະບຽບຄຸ້ມຄອງວັງສະຫງວນຢູ່ໃນຂັ້ນບ້ານ ເຊິ່ງເປັນບ້ານເກີດຂອງສະມາຊິກໃນກຸ່ມອາສາສະໝັກຂອງສອງບ້ານດັ່ງກ່າວກໍ່ຄື: ກຸ່ມບ້ານສົມສະໜຸກ ແລະ ບ້ານ ນ້ຳອ້ອມ ເຫັນວ່າ ອາສາສະໝັກທັງສອງກຸ່ມແມ່ນໄດ້ມີການປ່ຽນແປງຫຼາຍດ້ານຜ່ານການເປັນອາສາສະໝັກໂຄງການໄລຟ໌ ໂດຍສະເພາະແມ່ນທາງດ້ານທັກສະ ແລະ ຄວາມຮູ້ກ່ຽວກັບການນຳເອົາກົດໝາຍໄປເຜີຍແຜ່ໃນຂັ້ນຊຸມຊົນ ຈົນເຮັດໃຫ້ເກີດການປ່ຽນແປງໄປໃນທາງທີ່ດີ ທັງສະເພາະອາສາສະໝັກເອງ ແລະ ຊຸມຊົນ. ບັນດາທັກສະ ແລະ ບົດຮຽນຫຼັກໆ ທີ່ນັກສຶກສາໄດ້ຮັບໃນຕະຫຼອດຊ່ວງຂອງການເປັນອາສະໝັກໄດ້ແກ່: ການເກັບກຳຂໍ້ມູນແບບມີສ່ວນຮ່ວມກັບຊຸມຊົນ ຜ່ານການນຳໃຊ້ເຄື່ອງມືທີ່ຫຼາກຫຼາຍເຊັ່ນ ແຜນວາດສາຍນ້ຳ ແລະ ການນຳໃຊ້ເຄື່ອງມືສື່ສານ, ການເຮັດວຽກເປັນທີມ, ການເວົ້າຕໍ່ໜ້າມວນຊົນ, ທັກສະຂອງການເຜີຍແຜ່ຂໍ້ມູນທາງດ້ານກົດໝາຍດ້ວຍຮູບແບບທີ່ຫຼາກຫຼາຍ, ການເຮັດວຽກຮ່ວມກັບຊຸມຊົນໃນການປະຕິບັດຕົວຈິງ.

ດັ່ງທີ່ໄດ້ກ່າວໃນເບື້ອງຕົ້ນວ່າກ່ອນທີ່ຈະມີການລົງຈັດຕັ້ງປະຕິບັດແຕ່ລະຄັ້ງ ອາສາສະໝັກໄດ້ຮັບການຝຶກອົບຮົມ ອີງຕາມຫົວຂໍ້ທີ່ຈະລົງບ້ານໃນແຕ່ລະຄັ້ງຈາກຄູຝຶກຂອງໂຄງການໄລຟ໌. ການຝຶກອົບຮົມເປັນພາກສ່ວນທີ່ສຳຄັນ ເພື່ອກຽມຄວາມພ້ອມໃຫ້ກັບອາສາສະໝັກທັງເລື່ອງຂອງທັກສະ, ຄວາມຮູ້ ແລະ ວິທີການຮັບມືກັບສະຖານະການຕ່າງໆໃນເວລາລົງຈັດຕັ້ງປະຕິບັດຕົວຈິງຢູ່ຂັ້ນບ້ານ.



“ຫຼັງຈາກທີ່ນ້ອງໄດ້ເຂົ້າມາເປັນອາສາສະໝັກໂຄງການໄລຟ໌ແລ້ວ ເຫັນໄດ້ການພັດທະນາທີ່ດີຂຶ້ນ ແຕ່ກ່ອນຈາກທີ່ນ້ອງເປັນຄົນຂີ້ອາຍ, ບໍ່ກ້າເວົ້າຕໍ່ໜ້າຫຼາຍຄົນ ປັດຈຸບັນນ້ອງມີຄວາມກ້າຫານທີ່ສາມາດເວົ້າຕໍ່ໜ້າມວນຊົນໄດ້ດີຂຶ້ນ ແລະ ກ້າເຮັດສິ່ງໃໝ່ໆທີ່ຕົນເອງບໍ່ກ້າເຮັດມາກ່ອນ. ນອກຈາກນີ້ ນ້ອງຍັງຮຽນຮູ້ທັກສະຫຼາຍຢ່າງ ເປັນຕົ້ນແມ່ນ ການເຮັດວຽກເປັນທີມ, ທັກສະໃນການເວົ້າ, ການເຜີຍແຜ່ກົດໝາຍ ແລະ ຍັງໄດ້ປະສົບການຕົວຈິງໃນການເຮັດວຽກກັບຊຸມຊົນ; ເຊິ່ງຄວາມຮູ້ ແລະ ປະສົບການເຫຼົ່ານີ້ແມ່ນສາມາດນຳໄປຕໍ່ຍອດໃນການເຮັດວຽກງານໃນອະນາຄົດໄດ້.”

ນີວວື່ຊົ່ງ ເລົ່າປໍລີ, ນັກສຶກສາພາກວິຊາ ກົດໝາຍອາຍາ, ຄນລ, ອາສາສະໝັກໂຄງການໄລຟ໌ລຸ້ນ 3

ສິ່ງທີ່ເຫັນໄດ້ຢ່າງປະຈັກຕາກໍ່ຄືການປ່ຽນແປງທາງດ້ານທັກສະຂອງແຕ່ລະຄົນທີ່ເປັນອາສາສະໝັກ ເຊັ່ນຈາກບຸກຄົນຂີ້ອາຍ, ບໍ່ກ້າເວົ້າ ແລະ ຂາດຄວາມໝັ້ນໃຈ ເຫັນໄດ້ເຖິງການປ່ຽນແປງໃນແຕ່ລະຄັ້ງທີ່ມີການລົງບ້ານເຊັ່ນ ການປັບປ່ຽນໜ້າທີ່ຂອງອາສາສະໝັກ ເພື່ອໄດ້ເຮັດໜ້າທີ່ຕ່າງໆ. ນອກຈາກນັ້ນການເປີດໂອກາດ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ຂອງສະມາຊິກໃນກຸ່ມກໍເປັນບົດຮຽນທີ່ສຳຄັນຢ່າງໜຶ່ງຂອງການເຮັດວຽກເປັນທີມ ສຳລັບອາສາສະໝັກໃນຊຸດນີ້.



"ຕະຫຼອດຊ່ວງການເປັນອາສາສະໝັກ ນ້ອງໄດ້ຮຽນຮູ້ເຖິງການເຮັດວຽກເປັນທີມທີ່ອາໃສຄວາມເຂົ້າໃຈກັນ, ເປີດໃຈຮັບຟັງມຸມມອງຂອງແຕ່ລະຄົນຢູ່ພາຍໃນທີມ; ມີໂອກາດໄດ້ແລກປ່ຽນຄວາມຮູ້ ເຊິ່ງກັນ ແລະ ກັນ. ພ້ອມນັ້ນຍັງເຮັດໃຫ້ນ້ອງໄດ້ຮຽນຮູ້ເຖິງຄວາມຮັບຜິດຊອບຫລາຍຂື້ນຕໍ່ບົດບາດຫນ້າທີ່ ທີ່ຕົນເອງໄດ້ຮັບ ເຊິ່ງເຮັດໃຫ້ນ້ອງມີຄວາມພາກພູມໃຈທີ່ສິ່ງທີ່ເຮົານຳໄປແລກປ່ຽນກັບຊຸມຊົນນັ້ນມີຜົນປະໂຫຍດສຳລັບເຂົາເຈົ້າ ພ້ອມທັງໄດ້ປະກອບສ່ວນໃນການສະໜັບສະໜູນທາງບ້ານແກ້ໄຂບັນຫາ. ການເປັນອາສາສະໝັກຄັ້ງນີ້ ຈະເປັນຄວາມຊົງຈຳທີ່ດີສຳລັບນ້ອງ ແລະ ກໍ່ຈະເປັນບົດ ຮຽນທີ່ສາມາດນຳໄປຕໍ່ຍອດການເຮັດວຽກເພື່ອສັງຄົມໃນອະນາຄົດ."

**ພອນທິບ ສີສົມບຸນ, ນັກສຶກສາພາກວິຊາ ກົດໝາຍແພ່ງ, ຄນລ, ອາສາສະໝັກໂຄງການໄລຟ໌ລຸ້ນ 3**

ນອກຈາກທັກສະ ແລະ ຄວາມຮູ້ທາງດ້ານກົດໝາຍທີ່ມີເພີ່ມຂື້ນຂອງອາສາສະໝັກແລ້ວ ໃນການໄດ້ລົງຈັດຕັ້ງປະຕິບັດກິດຈະກຳໃນຂັ້ນບ້ານຂອງອາສະໝັກຍັງເປັນການສານຄວາມຕັ້ງໃຈຂອງອາສາສະໝັກ ໂດຍສະເພາະຜູ້ທີ່ເປັນລູກຫຼານຂອງບ້ານທີ່ໄດ້ລົງຈັດຕັ້ງປະຕິບັດກິດຈະກຳ. ສິ່ງດັ່ງກ່າວໄດ້ສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນຕໍ່ກັບຄວາມຄາດຫວັງທີ່ຢາກຈະສ້າງຄວາມປ່ຽນແປງໃຫ້ທີ່ດີຕໍ່ກັບບ້ານ ແລະ ການທີ່ໄດ້ກັບບ້ານເກີດ ນອກຈາກຈະເປັນການສານຄວາມຕັ້ງໃຈນັ້ນໃຫ້ເກີດເປັນຄວາມຈິງໄດ້ແລ້ວຍັງໄດ້ສ້າງຄວາມພາກພູມໃຈໃຫ້ກັບພໍ່ແມ່ ແລະ ປະຊາຊົນຢູ່ພາຍໃນບ້ານເກີດຂອງເຂົາເຈົ້າດ້ວຍ.

"ການເປັນອາສາສະໝັກໂຄງການໄລຟ໌ ນ້ອງໄດ້ຮຽກຮູ້ຫຼາຍຢ່າງ ທັງຈາກທີມຄູຝຶກ ແລະ ໝູ່ເພື່ອນທີ່ເປັນອາສາສະໝັກດ້ວຍກັນ ເຊັ່ນ ການເປັນຜູ້ອຳນວຍຄວາມສະດວກ, ການເຮັດວຽກເປັນທີມ, ການກ້າສະແດງຄວາມຄິດເຫັນ, ການເວົ້າຕໍ່ໜ້າມວນຊົນ ລວມໄປເຖິງໄດ້ປະສົບການໃນການປະສານງານກັບຂັ້ນບ້ານ ແລະ ເມືອງ. ສິ່ງທີ່ນ້ອງປະທັບໃຈຫຼາຍທີ່ສຸດກໍ່ຄື ການໄດ້ມີໂອກາດນຳເອົາກິດຈະກຳມາດຳເນີນຢູ່ບ້ານເກີດຂອງນ້ອງ ເຖິງ 3 ຄັ້ງ ໂດຍສະເພາະ ການຕອບສະໜອງຄວາມຂໍ້ສະເໜີຂອງບ້ານນ້ອງໃຫ້ເກີດເປັນຈິງກໍ່ຄື ການສ້າງວັງສະຫງວນນັ້ນເອງ."



**ບຸນມີ ປ່າແຈ້ງຢ່າງ, ນັກສຶກສາພາກວິຊາ ກົດໝາຍອາຍາ, ຄນລ, ອາສາສະໝັກໂຄງການໄລຟ໌ລຸ້ນ 3**

ສິ່ງທີ່ໄດ້ກ່າວມານັ້ນເປັນໝາກຜົນສຳເລັດຕາມເປົ້າໝາຍຂອງໂຄງການ ທີ່ສາມາດສ້າງການປ່ຽນແປງໃຫ້ກັບໄວໜຸ່ມໃຫ້ສາມາດກາຍເປັນຕົວແທນຂອງການສ້າງການປ່ຽນແປງໃນຊຸມຊົນ. ພ້ອມນັ້ນຍັງເປັນການສ້າງປະສົບການ ແລະ ສະສົມຄວາມຮູ້ ແລະທັກສະທີ່ສຳຄັນໃຫ້ແກ່ໄວໜຸ່ມທີ່ເປັນອາສາສະໝັກ ເພື່ອວ່າທັງໃນປັດຈຸບັນ ແລະ ໃນອະນາຄົດຂ້າງໜ້າ ເຂົາເຈົ້າຈະສາມາດ ນຳເອົາໄປຕໍ່ຍອດໄດ້ທັງໃນສາຍຂອງການຮຽນ ແລະ ການເຮັດວຽກ.

## 5.2. ຜົນໄດ້ຮັບທີ່ດີຕໍ່ກັບຂັ້ນບ້ານ ຈາກການສ້າງຕັ້ງວັງສະຫງວນ

ຕາມທີ່ໄດ້ກ່າວໃນເບື້ອງຕົ້ນ ການເຮັດວັງສະຫງວນແມ່ນເກີດມາຈາກການສະເໜີຂອງປະຊາຊົນພາຍໃນບ້ານ ເຊິ່ງມີເປົ້າໝາຍໃນການຟື້ນຟູສະພາບແຫຼ່ງນໍ້າ ແລະ ຮັກສາແນວພັນປາບໍ່ໃຫ້ສູນພັນໄປ. ຈາກການຈັດຕັ້ງປະຕິບັດກິດຈະກຳຮ່ວມກັນກັບຂັ້ນບ້ານເຫັນໄດ້ເຖິງການໃຫ້ຄວາມສຳຄັນຂອງປະຊາຊົນ ໂດຍສະເພາະຄະນະບ້ານ ທີ່ຢາກຈະປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດລະບຽບກົດໝາຍ ທີ່ກ່ຽວຂ້ອງກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນການຄຸ້ມຄອງແຫຼ່ງນໍ້າ. ໃນການຮ່ວມກັບບ້ານສ້າງລະບຽບຄຸ້ມຄອງວັງສະຫງວນໃນຄັ້ງນີ້ ສາມາດສະຫຼຸບຜົນໄດ້ຮັບທີ່ດີຕໍ່ກັບຂັ້ນບ້ານໄດ້ດັ່ງນີ້:

### ການສົ່ງເສີມຄວາມເຂັ້ມແຂງທາງດ້ານສິດ ແລະ ການປະຕິບັດລະບຽບກົດໝາຍທີ່ຕິດພັນກັບຊັບພະຍາກອນທຳມະຊາດ

ສືບເນື່ອງມາຈາກກິດຈະກຳ ການເຜີຍແຜ່ຂໍ້ມູນທາງດ້ານກົດໝາຍ ຈົນກ້າວມາສູ່ ການສ້າງລະບຽບຄຸ້ມຄອງວັງສະຫງວນຂັ້ນບ້ານ ເຫັນໄດ້ເຖິງຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບກົດໝາຍຂອງປະຊາຊົນໄດ້ຫຼາຍຂຶ້ນ. ປະຊາຊົນໃຫ້ຮູ້ວ່າ ຂະບວນການສ້າລະບຽບຄຸ້ມຄອງວັງສະຫງວນຄັ້ງນີ້ ເປັນຮູບແບບໃໝ່ສຳລັບເຂົາເຈົ້າ ໂດຍສະເພາະການໃຫ້ຄວາມສຳຄັນໃນການປຶກສາຫາລື ແລະ ການເຫັນດີຂອງຊາວບ້ານທັງໝົດ ກ່ອນທີ່ຈະມີການຕັດສິນໃຈ. ສິ່ງທີ່ພົ້ນເດັ່ນທີ່ສາມາດອະທິບາຍໃນຂໍ້ນີ້ໄດ້ຄື ລະບຽບຄຸ້ມຄອງວັງສະຫງວນ ທີ່ເຖິງແມ່ນວ່າຈະເປັນການຮ່າງຈາກຂັ້ນເມືອງ ແລະ ໂຄງການ ແຕ່ໃນລະບຽບທຸກໆຂໍ້ແມ່ນໄດ້ມີການນຳມາອະທິບາຍຢ່າງລະອຽດໃຫ້ແກ່ປະຊາຊົນ ໄດ້ມີສ່ວນຮ່ວມໃນການປະກອບຄຳຄິດເຫັນວ່າເຫັນດີ ຫຼື ບໍ່ເຫັນດີ ແລະ ຖ້າບໍ່ເຫັນດີກໍ່ສາມາດສະເໜີໃຫ້ມີການປ່ຽນແປງ ຫຼື ປັບປຸງຕາມຄວາມເໝາະສົມຂອງບ້ານ. ຮອງນາຍບ້ານ ບ້ານສົມສະໜຸກກ່າວວ່າ ***ການສ້າງວັງສະຫງວນແມ່ນອີງໃສ່ລະບຽບຮ່ວມກັນຂອງປະຊາຊົນໃນບ້ານ ໂດຍບໍ່ໃຫ້ມີການຫຼີກເວັ້ນຜູ້ໃດຜູ້ໜຶ່ງ ຕ້ອງປະຕິບັດເປັນເອກະສັນໄປທິດທາງດຽວກັນເພື່ອຄວາມຍືນຍົງ.*** ພ້ອມດຽວກັນນັ້ນຍັງໄດ້ເຫັນເຖິງຄວາມມຸ້ງຫວັງ ທີ່ຢາກຈະເຮັດໃຫ້ການຄຸ້ມຄອງວັງສະຫງວນນີ້ເປັນຈິງ ແລະ ມີປະສິດທິ ພາບຢູ່ໃນຂັ້ນບ້ານ ໂດຍອີງໃສ່ລະບຽບຄຸ້ມຄອງວັງສະຫງວນທີ່ສ້າງຮ່ວມກັນເປັນບ່ອນອີງ. ຫົວໜ້າແນວໂຮມບ້ານນໍ້າອ້ອນກ່າວວ່າ ***ເມື່ອເຮົາຕົກລົງເປັນເອກະພາບກັນແລ້ວ ກໍ່ຕ້ອງປະຕິບັດຕາມຫຼັກການທີ່ເຮົາໄດ້ວາງໄວ້ຮ່ວມກັນ. ທາງບ້ານເຮົາກໍ່ຈະມີການຕິດຕາມກວດກາ, ມີການປັບໄໝຕາມແຕ່ກໍລະນີ ຫາກມີການກະທຳຜິດ; ລະບຽບຫາກວາງແຜນໄວ້ແລ້ວ ແຕ່ຄົນບໍ່ປະຕິບັດ ກໍ່ຈະບໍ່ສາມາດບັນລຸ ແລະ ຍືນຍົງໄດ້.***

### ການຟື້ນຟູ ແລະ ອະນຸລັກແນວພັນປາເພື່ອການເພີ່ມຂະຫຍາຍແນວພັນ

ໂດຍລວມ ຈຸດປະສົງຫຼັກໆຂອງການສ້າງວັງສະຫງວນຂອງທັງສອງບ້ານແມ່ນ ເພື່ອເປັນການອະນຸລັກແນວພັນປາບໍ່ໃຫ້ສູນພັນ ແລະ ເພື່ອໃຫ້ປະຊາ ຊົນຍັງສາມາດຫາປາໄດ້ຍ່າງຍາວນານ. ປະຊາຊົນທັງສອງບ້ານກ່າວວ່າ ຖ້າຕອນນີ້ບໍ່ສ້າງວັງສະຫງວນໄວ້ ໃນອະນາຄົດຢູ່ຫ້ວຍນໍ້າທີ່ໄຫຼຜ່ານບ້ານເຂົາເຈົ້າກໍ່ອາດຈະບໍ່ມີປາເລີຍ. ການສ້າງວັງສະຫງວນ ແມ່ນຈະຊ່ວຍສ້າງບ່ອນ ຢູ່ທີ່ປອດໄພ ແກ່ປາ ຫຼື ສັດນໍ້າອື່ນໆ ໂດຍສະເພາະໃນລະດູວາງໄຂ່ ເພາະຈະເຮັດໃຫ້ປາສາມາດຈະເຕີບໂຕ ແລະ ຂະຫຍາຍຫຼາຍຂຶ້ນໃນແຫຼ່ງນໍ້າ. ປະຊາຊົນບ້ານສົມສະໜຸກຍັງຄາດຫວັງວ່າ ***ເມື່ອເຮົາສ້າງວັງສະຫງວນຂຶ້ນມາແລ້ວ ຄິດວ່າປາທີ່ຫາຍໄປກໍ່ອາດຈະຫວນກັບມາ ເຊິ່ງທຸກພາກສ່ວນຕ້ອງພ້ອມກັນເບິ່ງແຍງປົກປັກຮັກສາຮ່ວມກັນຈຶ່ງຈະສາມາດຮັກສາໄດ້.*** ເຊັ່ນດຽວກັນກັບບ້ານ ນໍ້າອ້ອນ ທີ່ປະຊາຊົນຫຼາຍຄົນກໍ່ຄາດຫວັງວ່າການສ້າງວັງສະຫງວນີ້ຈະຊ່ວຍປົກປ້ອງແນວພັນປາທີ່ມີຢູ່ໜ້ອຍຢູ່ແລ້ວ ບໍ່ໃຫ້ສູນພັນຫາຍໄປ ດັ່ງປະຊາຊົນທ່ານໜຶ່ງກ່າວວ່າ ***ໃນເມື່ອເຮົາສ້າງເປັນວັງສະຫງວນແລ້ວກໍ່ໝາຍຄວາມວ່າພວກເຮົາຈະຕ້ອງມີການປົກປັກຮັກສາຕາມກົດລະບຽບ ທີ່ພວກເຮົາໄດ້ຕົກລົງເປັນເອກະພາບນຳກັນ. ເຊິ່ງຂ້າພະເຈົ້າກໍ່ຫວັງວ່າ ວັງສະຫງວນນີ້ຈະເປັນບ່ອນເພາະພັນປາ ແລະ ສັດນໍ້າອື່ນໆ ແລະ ກໍ່ຈະເຮັດໃຫ້ບໍ່ມີການລະເມີດ ເພາະເຮົາມີລະບຽບແລ້ວ ເມື່ອເຮົາສາມາດປະຕິບັດ ກໍ່ຈະເຮັດໃຫ້ບ້ານເຮົາສາມາດມີວັງສະຫງວນທີ່ອຸດົມສົມບູນຄືກັນກັບບ້ານອື່ນ.***

### ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໂດຍສະເພາະແຫຼ່ງອາຫານ ແລະ ໂອກາດ

ຄວາມຄາດຫວັງທີ່ສຳຄັນທີ່ຢາກຈະສ້າງວັງສະຫງວນຂຶ້ນຢູ່ພາຍໃນບ້ານກໍ່ເພື່ອແກ້ໄຂບັນຫາຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ. ປະຊາຊົນທັງສອງບ້ານຕ່າງບອກວ່າ ໃນອະນາຄົດຫາກເຂົາເຈົ້າສາມາດຄຸ້ມຄອງວັງສະຫງວນທີ່ສ້າງຂຶ້ນມານີ້ໄດ້ ນອກຈາກຈະເຮັດໃຫ້ແນວພັນປາໄດ້ຮັບການປົກປ້ອງແລ້ວ ກໍ່ຍັງເປັນການເຮັດໃຫ້ປະຊາຊົນຍັງສາມາດທຳມາຫາກິນ ໂດຍສະເພາະຫາປາຢູ່ຫ້ວຍນ້ຳໄດ້ຢ່າງຍາວນານໄດ້. ພ້ອມນັ້ນຍັງເປັນການເປີດສ້າງລາຍຮັບໃຫ້ກັບປະຊາຊົນພາຍໃນບ້ານອີກດ້ວຍ. ເຊັ່ນໃນກໍລະນີຂອງບ້ານ ສົມສະໜຸກ ຈະມີການເປີດວັງໃຫ້ປາຫາໄດ້ເມື່ອປິດວັງຄົບສາມປີ ແລະ ໃນການເປີດວັງນີ້ແມ່ນເປັນການອະນຸຍາດໃຫ້ເຂົ້າມາຫາປາໄດ້ ແລະ ຕ້ອງປະຕິບັດລະບຽບຄຸ້ມຄອງວັງສະຫງວນຂອງບ້ານ ໂດຍສະເພາະການນຳອຸປະກອນການຫາປາທີ່ຖືກຕ້ອງຕາມກົດໝາຍເທົ່ານັ້ນ ຕາມໄລຍະເວລາທີ່ໄດ້ກຳນົດໄວ້ໃນລະບຽບ. ໃນກໍລະນີຂອງບ້ານນ້ຳອ້ອນ ຫາກມີຄວາມຈຳເປັນທີ່ຈະຕ້ອງເປີດວັງ ຫຼື ການອະນຸຍາດໃຫ້ມີການຫາປາໃນວັງສະຫງວນ ແມ່ນສະເພາະແຕ່ເພື່ອປະໂຫຍດສ່ວນຮ່ວມຂອງບ້ານເທົ່ານັ້ນເຊັ່ນ: ການຫາປາສຳລັບຈັດງານບຸນປະເພນີ, ເທດສະການ ຫຼື ວັນງານທີ່ສຳຄັນຂອງບ້ານ ຫຼື ເມືອງ ແຕ່ຕ້ອງແຈ້ງ ຫຼື ຂໍອະນຸຍາດ ຈາກຄະນະບ້ານ, ຄະນະຄຸ້ມຄອງວັງສະຫງວນບ້ານ ແລະ ຂັ້ນເມືອງ ເພື່ອພິຈາລະນາຕາມແຕ່ລະກໍລະນີ; ພ້ອມນັ້ນໃນອະນາຍົດກໍ່ຄາດຫວັງ ຢາກສ້າງເປັນແຫຼ່ງທ່ອງທ່ຽວຊົມທຳມະຊາດ.

### ການເສີມສ້າງຄວາມເຂັ້ມແຂງ ແລະ ຄວາມເຊື່ອໝັ້ນໃຫ້ກັບຄະນະບ້ານ

ແຮງຜັກດັນທີ່ສຳຄັນ ໃນການອຳນວຍຄວາມສະດວກ ຕໍ່ກັບທຸກຂະບວນການຂອງການສ້າງລະບຽບຄຸ້ມຄອງວັງສະຫງວນ ກໍ່ຄື ຄະນະບ້ານ. ເຂົາເຈົ້າເປັນໜ່ວຍງານທີ່ສຳຄັນ ທີ່ຈະນຳພາຊາວບ້ານໃນການຈັດຕັ້ງປະຕິບັດລະບຽບຄຸ້ມຄອງວັງສະຫງວນທີ່ຮ່ວມສ້າງ ຕັ້ງຂຶ້ນມາພ້ອມກັນ. ສະມາຊິກຂອງຄະນະບ້ານນ້ຳອ້ອນກ່າວວ່າ ການສະໜັບສະໜູນໃນການສ້າງວັງສະຫງວນຄັ້ງນີ້ຂອງອາສາສະໝັກ ແລະ ໂຄງການໄດ້ມີສ່ວນຊ່ວຍທາງບ້ານຫຼາຍ ໂດຍສະເພາະຕໍ່ກັບຄະນະບ້ານ ເພາະເປັນອີກກະບອກສຽງໜຶ່ງທີ່ຜັກດັນໃຫ້ຄະນະບ້ານ ມີຄວາມໝັ້ນໃຈຫຼາຍຂຶ້ນໃນການເນັ້ນຍ້ຳເຖິງຄວາມສຳຄັນຕໍ່ກັບການຄຸ້ມຄອງວັງສະຫງວນ ໂດຍສະເພາະໃນການປະຕິບັດຕາມລະບຽບທີ່ວາງອອກ. ພ້ອມກັນນັ້ນກໍ່ຍັງໄດ້ຍ້ຳຕື່ມວ່າ ການສ້າງຕັ້ງຄະນະຄຸ້ມຄອງວັງສະຫງວນເປັນສິ່ງທີ່ສຳຄັນທີ່ສຸດ ເພາະເຂົາເຈົ້າຈະເປັນຕົວແທນໃນການຕິດຕາມ ແລະ ກວດກາ ການຄຸ້ມຄອງວັງສະຫງວນ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ແລະ ເພື່ອລາຍງານສະພາບການຕ່າງໆໃຫ້ແກ່ຄະນະບ້ານໄດ້ຮັບຮູ້.

## 5.3. ສົ່ງເສີມການເຮັດວຽກຮ່ວມກັນລະຫວ່າງຂັ້ນເມືອງ ແລະ ໂຄງການ

ການຈັດຕັ້ງປະຕິບັດນັບຕັ້ງແຕ່ກິດຈະກຳຄັ້ງທຳອິດ ຈົນເຖິງກິດຈະກຳລ່າສຸດກໍ່ຄືການສ້າງວັງສະຫງວນຂັ້ນບ້ານ ທີ່ໄດ້ຈັດຕັ້ງປະຕິບັດສຳເລັດຕາມແຜນທີ່ເຮົາວາງໄວ້ ແມ່ນມາຈາກການສະໜັບສະໜູນເປັນຢ່າງດີຂອງບັນດາຫ້ອງການທີ່ກ່ຽວຂ້ອງທາງຂັ້ນເມືອງເຊັ່ນ: ຫ້ອງການກະສິກຳ ແລະ ປ່າໄມ້, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມ, ຫ້ອງການຍຸຕິທຳ ແລະ ຫ້ອງວ່າການເມືອງ. ທາງຂັ້ນເມືອງຍັງມີບົດບາດສຳຄັນໃນການປະສານງານ ແລະ ການຮັບປະກັນວ່າ ການຈັດຕັ້ງປະຕິ ບັດກິດຈະກຳຂອງເຮົາ ສາມາດດຳເນີນໄດ້ຕາມແຜນທີ່ວາງໄວ້ ພ້ອມທັງມີສ່ວນທີ່ສຳຄັນໃນການສະໜັບສະໜູນທີມງານເຮົາທາງດ້ານວິຊາການສະເພາະດ້ານ ໂດຍສະເພາະໃນການດຳເນີນກິດຈະກຳຄັ້ງທີ 3 ກໍ່ຄືການສ້າງລະບຽບຄຸ້ມຄອງວັງສະຫງວນ.

ຈາກການເຮັດວຽກຮອມກັບຂັ້ນເມືອງທີ່ຜ່ານມາ ພວກເຮົາມີການສະໜັບສະໜູນກັນເປັນຢ່າງດີ ທັງດ້ານການປະສານງານ ແລະ ວິຊາການ ເນື່ອງຈາກການ ການສ້າງວັງສະຫງວນ ແມ່ນເຮົາໄດ້ອາໄສທີມງານຂັ້ນເມືອງເປັນຫຼັກໃນການນຳພາໃນທຸກຂັ້ນຕອນເຊັ່ນ: ການອະທິບາຍຈຸດປະສົງ ແລະ ການເຕົ້າໂຮມບ້ານໃຫ້ເຮັດວຽກຮ່ວມກັນ, ການສຳຫຼວດພື້ນທີ່, ການຮ່າງລະບຽບຄຸ້ມຄອງວັງສະຫງວນ ຕະຫຼອດເຖິງການດຳເນີນເອກະສານຕ່າງໆທີ່ກ່ຽວຂ້ອງກັບລະບຽບຄຸ້ມຄອງວັງສະຫງວນທີ່ສ້າງຂຶ້ນຮ່ວມກັບບ້ານ ໄດ້ຮັບການເຫັນດີ ແລະ ຮັບຮູ້ຈາກຂັ້ນເມືອງ ໂດຍສະເພາະການລົງລາຍເຊັນຂອງທ່ານເຈົ້າເມືອງ.

ການດຳເນີນກິດຈະກຳຄັ້ງນີ້ຂອງໂຄງການເຮົາ ກໍ່ຄືອາສາສະໝັກ ແມ່ນໄດ້ຮັບການສະໜັບສະໜູນຈາກຫຼາຍ ໜ່ວຍງານທີ່ກ່ຽວຂ້ອງຂອງຂັ້ນເມືອງ ແລະ ເຫັນວ່າມີຄວາມສອດຄ້ອງກັບແນວທາງພັດທະນາທີ່ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການຈັດຕັ້ງປະຕິບັດທີ່ສອດຄ້ອງກັບກົດໝາຍຕາມແຜນຂອງຂັ້ນເມືອງດ້ວຍ.



“ກິດຈະກຳຂອງອາສາສະໝັກໂຄງການໄລຟ໌ ແມ່ນໄດ້ຮັບຜົນດີ ເພາະໄດ້ມີການນຳເອົາກິດຈະກຳນັ້ນມາຈັດຕັ້ງປະຕິບັດຕົວຈິງເຊິ່ງກໍ່ເຫັນວ່າ ສອດຄ້ອງກັບແຜນວຽກຂອງຫ້ອງການເຮົາ ໃນການຊີ້ແຈງ ແລະ ສ້າງຄວາມເຂົ້າໃຈໃຫ້ກັບໃຫ້ປະ ຊາຊົນໃຫ້ມີຄວາມກະຈ່າງແຈ້ງຫຼາຍຂຶ້ນ ກ່ຽວກັບບັນດາກິດຈະກຳບັນດານິຕິກຳຕ່າງໆທີ່ໄດ້ມີການເຜີຍແຜ່ ໂດຍສະເພາະການສ້າງລະບຽບຄຸ້ມຄອງວັງສະຫງວນ ເພື່ອເປັນກົນໄກໜຶ່ງໃນການປົກປັກຮັກສາຊີວະນາໆພັນທີ່ຢູ່ວັງສະຫງວນເພື່ອໃຫ້ມີຄວາມຍືນຍົງ.”

ທ່ານ ກະລຸນາ ວົງວໍລະເດດ, ຫົວໜ້າ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງມະຫາໄຊ, ແຂວງຄຳມ່ວນ

ເພື່ອເປັນການສະໜັບສະໜູນຂັ້ນບ້ານ ໃນການນຳເອົາລະບຽບຄຸ້ມຄອງວັງສະຫງວນໄປຈັດຕັ້ງປະຕິບັດ ທາງເມືອງເອງກໍ່ມີບົດບາດສຳຄັນໃນການສະໜັບສະໜູນຂັ້ນບ້ານ ເຊິ່ງຄະນະບ້ານເອງກໍ່ມີຄວາມຄາດຫວັງເຊັ່ນຕໍ່ກັບການສະໜູນຢ່າງໃກ້ ຊິດຂອງຂັ້ນເມືອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດລະບຽບໃຫ້ມີປະສິດທິພາບ ແລະ ຮັບຜົນແທ້. ພະນັກງານຫ້ອງ ການຍຸຕິທຳເມືອງໄຊຈຳພອນກ່າວວ່າ *ທາງເມືອງເຮົາກໍ່ຈະຊຸກຍູ້ທາງຂັ້ນບ້ານໃນການໂຄສະນາເຜີຍແຜ່ຂໍ້ມູນຕື່ມ ເພື່ອໃຫ້ມີຄວາມທົ່ວເຖິງ ແລະ ຕ້ອງໄດ້ຢ້ຳຄືນຕະຫຼອດກ່ຽວກັບກົດລະບຽບ; ພ້ອມນັ້ນ ພວກເຮົາກໍ່ຈະມີການຖອດຖອນບົດຮຽນ ແລະ ປະເມີນຄືນເພື່ອໃຫ້ກົດລະບຽບມີຄວາມຮັດກຸມກວ່າເກົ່າ ແລະ ໃຫ້ໄດ້ຮັບຜົນຕາມເປົ້າໝາຍ.*

## 5.4. ການສະໜັບສະໜູນທີ່ດີຂອງ ຄະນະນິຕິສາດ ແລະ ລັດຖະສາດ

ນັບຕັ້ງແຕ່ລິເລີ່ມໂຄງການຈົນກ້າວສູ່ການດຳເນີນກິດຈະກຳ ການສ້າງຕັ້ງວັງສະຫງວນ ທາງຄະນະນິຕິສາດ ແລະ ລັດຖະສາດ (ຄນລ) ແມ່ນໄດ້ໃຫ້ການສະໜັບສະໜູນເປັນຢ່າງດີ ໃນການດຳເນີນເອກະສານກໍ່ຄືໜັງສືສະເໜີ ນັບຕັ້ງແຕ່ຂັ້ນສູນກາງ ຈົນເຖິງ ຂັ້ນທ້ອງຖິ່ນ. ພ້ອມນັ້ນການລົງຕິດຕາມກິດຈະກຳຢູ່ພາກສະໜາມຮ່ວມກັບໂຄງການ ແລະ ອາສາສະໝັກ ກໍ່ສາມາດສະໜັບສະໜູນກັນໄດ້ດີ ໂດຍສະເພາະສ້າງຄວາມເຊື່ອໝັ້ນໃຫ້ກັບຂັ້ນເມືອງ ແລະ ຄະນະບ້ານໃນຂອດຂອງດຳເນີນເອກະສານຕ່າງໆ ທີ່ສຳຄັນຕໍ່ກັບການດຳເນີນກິດຈະກຳຂອງອາສາສະໝັກໃນຂັ້ນບ້ານ. ພ້ອມນັ້ນຍັງເຮັດບົດບາດສະໜັບສະໜູນໃນການອະທິບາຍກ່ຽວກັບຈຸດປະສົງກ່ຽວກັບກິດຈະກຳຕໍ່ກັບຂັ້ນເມືອງ ແລະ ບ້ານ ເພື່ອໃຫ້ມີຄວາມເຂົ້າໃຈເຖິງທີ່ມາຂອງໂຄງການ ແລະ ການເຂົ້າຮ່ວມກິດຈະກຳຂອງນັກສຶກສາໃນການເປັນອາສາສະໝັກໂຄງ ການໄລຟ໌.

“ຈາກປະສົບການໃນການຮ່ວມກິດຈະກຳຕ່າງໆ ຂອງນັກສຶກສາຢູ່ຂັ້ນບ້ານ ໂດຍສະເພາະການສ້າງຕັ້ງວັງສະຫງວນ ອາຈານເຫັນວ່າມີຄວາມສຳຄັນຫຼາຍທີ່ຈະນຳເອົາໄປເຜີຍແຜ່ຕໍ່ໃນສະຖາບັນການສຶກສາກໍ່ຄື ຄະນະນິຕິສາດ ແລະ ລັດຖະ ສາດ ຂອງພວກເຮົາ ເພື່ອນຳເອົາມາເປັນບົດຮຽນໃນການສິດສອນແກ່ນັກສຶກສາຜູ້ອື່ນໆ ໂດຍສະເພາະເປັນການນຳເອົາບົດຮຽນຈາກຄັ້ງນີ້ເຊື່ອມເຂົ້າກັບບົດສອນຂອງອາຈານ ເພື່ອເປັນການສ້າງແຮງຈູງໃຈ ແລະ ຄວາມກະຕືລືລົ້ນໃຫ້ແກ່ຂອງນັກສຶກສາຕໍ່ກັບການມີສ່ວນຮ່ວມ ໃນການອະນຸລັກຊັບພະຍາກອນທຳມະຊາດ ເຊັ່ນປ່າໄມ້, ແຫຼ່ງນ້ຳ ໃຫ້ມີຄວາມຍືນຍົງ ແລະ ເພື່ອໃຫ້ເຂົາເຈົ້າຮູ້ເຖິງບົດບາດສຳຄັນ ໃນການສ້າງສະພາບແວດລ້ອມຂອງຊັບພະຍາກອນທຳມະຊາດຂອງບ້ານເກີດເຂົາເຈົ້າເອງໃຫ້ດີຂຶ້ນໃນອະນາຄົດ ເຊິ່ງກໍ່ເປັນການປະກອບສ່ວນໃນການພັດທະນາດ້ວຍ.”

ອາຈານ ຂຸນທອງ ຈັນທະລັງສີ, ອາຈານປະຈຳພາກວິຊາພົວພັນສາກົນ, ຄະນະນິຕິສາດ ແລະ ລັດຖະສາດ, ມຊ

ຕໍ່ກັບການສະໜັບສະໜູນດັ່ງກ່າວເຫັນວ່າມີຄວາມສຳຄັນຫຼາຍ ໂດຍສະເພາະການສະໜັບສະໜູນເຊິ່ງກັນ ແລະ ກັນລະຫວ່າງອາຈານ ແລະ ທີມງານໂຄງການເພື່ອເຮັດໜ້າທີ່ຮ່ວມກັນໃນການສະໜັບສະໜູນອາສາສະໝັກໃຫ້ເຂົາເຈົ້າສາມາດດຳເນີນກິດຈະກຳໄດ້ຕາມເປົ້າໝາຍ ເພື່ອວ່າອາສາສະໝັກຈະໄດ້ຮຽນຮູ້ຈາກປະສົບການຕົວຈິງໃຫ້ໄດ້ຫຼາຍທີ່ສຸດ ເຊິ່ງມີຄວາມສຳຄັນໃນການສ້າງຄວາມເຂັ້ມແຂງໃຫ້ກັບນັກສຶກສາໃນການກາຍເປັນຊັບພະຍາກອນມະນຸດທີ່ດີ ແລະ ສາມາດປະກອບສ່ວນທັງຕໍ່ກັບສະຖາບັນສຶກສາ ແລະ ສາທາລະນະ.

## 5.5. ການສະໜັບສະໜູນທາງດ້ານຂໍ້ມູນຈາກຄູ່ຮ່ວມງານ ພາກລັດ ແລະ ອົງການຈັດຕັ້ງສາກົນ

ໃນການຈັດຕັ້ງປະຕິບັດຄັ້ງກິດຈະກຳ ການສ້າງຕັ້ງວັງສະຫງວນເປັນຄັ້ງທຳອິດຂອງໂຄງການເຮົາ ສະນັ້ນພວກເຮົາຈຶ່ງໄດ້ມີການສຶກສາຂໍ້ມູນ ໂດຍມີການແລກປ່ຽນບົດຮຽນ ທັງກັບພາກລັດ ແລະ ອົງການຈັດຕັ້ງສາກົນ. ສຳລັບພາກລັດ ແມ່ນພວກເຮົາ ໄດ້ມີການປະສານງານກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ກ່ຽວກັບລະບຽບຄຸ້ມຄອງວັງສະຫງວນທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ ເພື່ອເປັນບ່ອນອີງ ແລະ ສຶກສາຂໍ້ມູນ ລວມເຖິງແຫຼ່ງຂໍ້ມູນເວັບໄຊ້ຂອງກະຊວງກະສິກຳ ແລະ ປ່າໄມ້ດ້ວຍ. ສຳລັບຄູ່ຮ່ວມງານຂອງອົງການຈັດຕັ້ງສາກົນ ພວກເຮົາກໍ່ໄດ້ຮັບການສະໜັບສະໜູນເປັນຢ່າງດີຈາກອົງການ WWF Laos, JVC ແລະ ເວັບໄຊ້ພາເຂົ້າລາວທີ່ສະໜອງແຫຼ່ງຂໍ້ສຳຄັນໃຫ້ແກ່ພວກເຮົາໄດ້ນຳມາເປັນບ່ອນອີງສຳລັບສື່ໂຄສະນາເຊັ່ນ: ໂພສເຕີ, ວີດີໂອ, ບົດຄວາມ ແລະ ບົດຮຽນທີ່ມີການຈັດຕັ້ງປະຕິບັດການສ້າງວັງສະຫງວນທີ່ຜ່ານມາຂອງອົງການດັ່ງກ່າວ.




ຮູບທີ12:
ທີມງານເມືອງ, ອາສາສະໝັກ
ແລະ ຊາວບ້ານ ສຳຫຼວດພື້ນທີ່
ຈະກຳນົດເປັນເຂດວັງສະຫງວນ
ຂອງບ້ານສົມສະໜຸກ-ບ້ານດ້າງ



ຮູບທີ13:
ທີມງານເມືອງ, ອາສາສະໝັກ
ແລະ ຊາວບ້ານ ສຳຫຼວດພື້ນທີ່
ຈະກຳນົດເປັນເຂດວັງສະຫງວນ
ຂອງບ້ານນໍ້າອ້ອນ

## 6. ຂໍ້ສະເໜີແນະ ແລະ ຄໍາແນະນໍາ

### 6.1. ຕໍ່ກັບອໍານາດການປົກຄອງເມືອງ

ເພື່ອຊ່ວຍໃຫ້ລະບຽບຄຸ້ມຄອງວັງສະຫງວນທີ່ສ້າງຂຶ້ນນັ້ນໄດ້ຮັບການຈັດຕັ້ງຢ່າງເປັນປົກກະຕິ ແລະ ມີປະສິດທິພາບສະນັ້ນ ຈຶ່ງບາງຂໍ້ແນະນໍາຕໍ່ກັບຂັ້ນເມືອງດັ່ງນີ້:

- ສະໜັບສະໜູນຂັ້ນບ້ານໃນການເຜີຍແຜ່ລະບຽບຄຸ້ມຄອງວັງສະຫງວນທີ່ສ້າງຂຶ້ນ ເພື່ອເຮັດໃຫ້ມີຄວາມໝັ້ນໃຈຫຼາຍຂຶ້ນຕໍ່ກັບການຈັດຕັ້ງປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງ ໂດຍສະເພາະແມ່ນລະບຽບຕ່າງໆທີ່ໄດ້ກໍານົດໄວ້ໃນກົດລະບຽບຄຸ້ມຄອງວັງສະຫງວນຂອງບ້ານ.
- ຕິດຕາມການການຈັດຕັ້ງປະຕິບັດລະບຽບ ພ້ອມທັງເສີມເສີມຄວາມເຂັ້ມແຂງໃຫ້ແກ່ຄະນະບ້ານ ໂດຍສະເພາະແມ່ນຄະນະຄຸ້ມຄອງວັງສະຫງວນບ້ານທີ່ສ້າງຕັ້ງຂຶ້ນ ເພື່ອເຮັດໃຫ້ເຂົາເຈົ້າມີຄວາມໝັ້ນໃຈຫຼາຍຂຶ້ນໃນການຈັດຕັ້ງປະຕິບັດໜ້າທີ່.
- ສ້າງພື້ນທີ່ຮຽນຮູ້ ເພື່ອເຮັດໃຫ້ມີການແລກປ່ຽນເຊິ່ງກັນ ແລະ ກັນຂອງບ້ານຕ່າງໆທີ່ສ້າງວັງສະຫງວນ ໂດຍນໍາເອົາຕົວແທນຂອງບ້ານໄປຮຽນຮູ້ກັບບ້ານອື່ນໆ ທີ່ເຫັນວ່າເປັນບ້ານທີ່ສາມາດຄຸ້ມຄອງວັງສະຫງວນໄດ້ດີ ເພື່ອເປັນການສ້າງແຮງຈູງໃຈຂອງເຂົາເຈົ້າໃນການຄຸ້ມຄອງວັງສະຫງວນໃຫ້ມີປະສິດທິພາບຫຼາຍຂຶ້ນ.

### 6.2. ຕໍ່ກັບຂັ້ນບ້ານ

ເພື່ອເຮັດໃຫ້ການຄຸ້ມຄອງວັງສະຫງວນຂັ້ນບ້ານໃຫ້ມີຄວາມຍືນຍົງ ຄວາມເປັນເຈົ້າການຂອງຂັ້ນບ້ານແມ່ນມີຄວາມຈໍາເປັນແລະ ສໍາຄັນ ສະນັ້ນເພື່ອໃຫ້ບັນລຸຕາມເປົ້າໝາຍຂອງບ້ານ ໃນການອະນຸລັກແນວພັນປາ ແລະ ລະ ບົບນິເວດຂອງແຫຼ່ງນໍ້າຕາມທີ່ໄດ້ລະບຸໄວ້ໃນລະບຽບຄຸ້ມຄອງວັງສະຫງວນຂອງບ້ານ ທາງຄະນະບ້ານ ແລະ ປະຊາຊົນພາຍໃນບ້ານຄວນສືບຕໍ່ຈັດຕັ້ງປະຕິບັດຄື:

- ເອົາໃຈໃສ່ໃນການເຜີຍແຜ່ກົດລະບຽບ ຄຸ້ມຄອງວັງສະຫງວນຂອງບ້ານຕາມທີ່ໄດ້ກໍານົດໄວ້ ເຊິ່ງເອກະສານດັ່ງກ່າວເປັນເອກະສານທີ່ຖືກຮັບຮອງຢ່າງເປັນທາງການ ໂດຍມີການລົງລາຍເຊັນເຫັນ ແລະ ຮັບຮູ້ ຈາກເຈົ້າເມືອງ. ການເຜີຍແຜ່ລະບຽບດັ່ງກ່າວແມ່ນອີງໃສ່ແຕ່ລະບ້ານເຊັ່ນ: ໃນທຸກໆກອງປະຊຸມຂອງບ້ານ, ວັນສໍາຄັນທີ່ກ່ຽວ ຂ້ອງກັບການອະນຸລັກພັນປາເປັນຕົ້ນ. ເຊິ່ງກ່ອນທີ່ຈະມີການເຜີຍແຜ່ເອກະສານດັ່ງກ່າວນັ້ນ ຈະຕ້ອງມີການສ້າງຄວາມເຂົ້າໃຈໄປໃນທິດທາງດຽວກັນລະຫວ່າງຄະນະຄຸ້ມຄອງວັງສະຫງວນ ແລະ ຄະນະບ້ານ ເພື່ອຮັບປະກັນ ຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ.
- ໜ່ວຍງານຮັບຜິດຊອບກໍ່ຄື ຄະນະຄຸ້ມຄອງວັງສະຫງວນຂອງບ້ານ ຕ້ອງເປັນຕົວແທນໃນການເຮັດໜ້າທີ່ກວດກາ ແລະ ລາຍງານສະຖານະການຕໍ່ກັບຄະນະບ້ານຢ່າງເປັນປະຈໍາ ຫຼື ໃນເວລາທີ່ພົບເຫັນບັນຫາ ເພື່ອແກ້ໄຂບັນຫາຢ່າງຖ່ວງທັນ ແລະ ມີການນໍາໃຊ້ລະບຽບແທ້ຫາກມີການລະເມີດ ເພື່ອເປັນແບບຢ່າງໃນການຈັດຕັ້ງປະຕິບັດກົດລະບຽບທີ່ຮ່ວມກັນສ້າງຂຶ້ນມາ. ໜ່ວຍງານທີ່ຮັບຜິດຊອບສາມາດນໍາໃຊ້ເຄື່ອງມືສື່ສານໃນການບັນ ທຶກຂໍ້ມູນເມື່ອພົບເຫັນສະພາບຕ່າງໆ ທີ່ເຫັນວ່າຄັດຕໍ່ລະບຽບທີ່ກໍານົດໄວ້ເຊັ່ນ: ການໃຊ້ໂທລະສັບໃນການບັນ ທຶກພາບ ຫຼື ວິດີໂອ ເພື່ອສາມາດນໍາມາເປັນຫຼັກຖານໄດ້.
- ແລກປ່ຽນບົດຮຽນກັບບ້ານອ້ອມຂ້າງ ໂດຍສະເພາະບ້ານທີ່ສາມາດຄຸ້ມຄອງວັງສະຫງວນໄດ້ດີ ໂດຍສະເພາະເລື່ອງຂອງຜົນປະໂຫຍດຂອງການມີວັງສະຫງວນ ເພື່ອເປັນການສ້າງແຮງກະຕຸ້ນໃຫ້ແກ່ປະຊາຊົນພາຍໃນບ້ານໃນການປົກປັກຮັກສາວັງສະຫງວນ.
- ທາງຂັ້ນບ້ານ ແລະ ອາສາສະໝັກ ໂດຍສະເພາະສະມາຊິກທີ່ຢູ່ບ້ານ ຄວນສືບຕໍ່ໃນການຕິດຕໍ່ປະສານງານ ເພື່ອຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດລະບຽບຄຸ້ມຄອງວັງສະຫງວນທີ່ສ້າງຂຶ້ນ ເພື່ອປະເມີນວ່າໃນຂອດການຈັດຕັ້ງປະຕິບັດນັ້ນສາມາດເຮັດໄດ້ໜ້ອຍຫຼາຍພຽງໃດ ເພື່ອນໍາມາຍບົດຮຽນໃຫ້ແກ່ໂຄງການ ຫຼື ການກ່າວໄປສູ່ການເຊື່ອມໂຍງເຂືອຄ່າຍໃນການສືບຕໍ່ສະໜັບສະໜູນຄວາມຕ້ອງການຂອງຊຸມຊົນ.

# ເອກະສານຊ້ອນທ້າຍ

ແຜນທີ່ວັງສະຫງວນ ບ້ານສົມສະໜຸກ-ບ້ານດ້າງ, ເມືອງມະຫາໄຊ, ແຂວງ ຄຳມ່ວນ




| ລ/ດ | ລາຍການ | ເນື້ອທີ່/ຮຕ |
|---|---|---|
| 1 | ເຂດວັງສະຫງວນ | 2.5 |
| ລ/ດ | ລາຍການ | ແມັດ/m |
| 1 | ຄວາມຍາວຂອງວັງສະຫງວນ | 1,570 |

ການເຊັນຮັບຮອງເອົາ ກົດລະບຽບການຄຸ້ມຄອງວັງສະຫງວນບ້ານສົມສະໜຸກ-ບ້ານດ້າງ, ເມືອງມະຫາໄຊ, ແຂວງຄຳມ່ວນ






ແຜນທີ່ ວັງສະຫງວນ ບ້ານນ້ຳອ້ອນ, ເມືອງໄຊຈຳພອນ, ແຂວງ ບໍລິຄຳໄຊ




| ລ/ດ | ລາຍການ | ເນື້ອທີ່/ຮຕ |
|---|---|---|
| 1 | ຂອບເຂດວັງສະຫງວນ | 8 /ຮຕ |
| 2 | ຄວາມຍາວຂອງວັງສະຫງວນ | 1,195 ແມັດ |
| 3 | ຄວາມກວ້າງຂອງວັງສະຫງວນ | 67 ແມັດ |

ການເຊັນຮັບຮອງເອົາ ກົດລະບຽບການຄຸ້ມຄອງວັງສະຫງວນບ້ານນ້ຳອ້ອນ, ເມືອງໄຊຈຳພອນ, ແຂວງບໍລິຄຳໄຊ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງໄຊຈຳພອນ
ບ້ານນ້ຳອ້ອນ

ເລກທີ 01 /ນບ.ນອ
ລົງວັນທີ 18 / 9 /2024

**ກົດລະບຽບ**
**ກ່ຽວກັບການຄຸ້ມຄອງວັງສະຫງວນ**
**ບ້ານ ນ້ຳອ້ອນ ເມືອງ ໄຊຈຳພອນ ແຂວງ ບໍລິຄຳໄຊ**

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ສັດນ້ຳ ແລະ ການປະມົງສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ ນຍ, ລົງວັນທີ15 ຕຸລາ 2021;
- ອີງຕາມ ການສະເໜີຂອງບ້ານນ້ຳອ້ອນ ກ່ຽວກັບການສ້າງວັງສະຫງວນໃນຂອບເຂດບ້ານນ້ຳອ້ອນ;
- ອີງຕາມ ບົດບັນທຶກການປຶກສາຫາລື ແລະ ເຫັນດີເປັນເອກະພາບໃນການສ້າງຕັ້ງວັງສະຫງວນຂອງບ້ານ ສະບັບລົງວັນທີ 29 ສິງຫາ 2024.

**ມາດຕາ 1 ວ່າດ້ວຍຂໍ້ມູນພື້ນຖານຂອງບ້ານ**

ບ້ານນ້ຳອ້ອນ ຕັ້ງຢູ່ເຂດສະບານເມືອງໄຊຈຳພອນ ປະກອບມີເນື້ອທີ່ທັງໝົດ 6,273 ເຮັກຕາ ເຊິ່ງມີຈຳນວນທັງໝົດ 329 ຫຼັງຄາເຮືອນ, ມີຄອບຄົວທັງໝົດ 450 ຄອບຄົວ ປະກອບດ້ວຍ 3 ຊົນເຜົ່າຄື: ຊົນເຜົ່າລາວພວນ, ມົ້ງ ແລະ ຕຸມ. ປະຊາກອນທັງໝົດມີ 1,652 ຄົນ ເຊິ່ງເປັນແມ່ຍິງ 832 ຄົນ (ອີງຕາມຂໍ້ມູນສະຖິຕິຂອງບ້ານນ້ຳອ້ອນ ປີ 2023). ການດຳລົງຊີວິດຂອງປະຊາຊົນບ້ານນ້ຳອ້ອນແມ່ນອາໄສການ ລ້ຽງສັດ ແລະ ປູກປັງເປັນຫຼັກ.

ຂອບເຂດຊາຍແດນຂອງບ້ານນ້ຳອ້ອນມີຄື:

- ທິດເໜືອ ຕິດກັບ ພູຕັງທັງ, ບ້ານສົບຄີ ແລະ ບ້ານໂພນຄຳ
- ທິດຕາເວັນອອກ ຕິດກັບ ບ້ານວັງບານ
- ທິດໃຕ້ ຕິດກັບ ບ້ານໂພນພົ້ນ
- ທິດຕາເວັນຕົກ ຕິດກັບ ບ້ານນ້ຳສັກ

**ມາດຕາ 2 ວ່າດ້ວຍຈຸດປະສົງຂອງການສ້າງວັງສະຫງວນ**

1) ເປັນບ່ອນອາໄສ, ແຜ່ພັນ ແລະ ວາງໄຂ່ຂອງປາທຸກຊະນິດທີ່ມີໃນຫ້ວຍນ້ຳຈາດ
2) ເປັນສະຖານທີ່ອະນຸລັກ, ປົກປັກຮັກສາຊະນິດພັນປາ ແລະ ສັດນ້ຳຊະນິດອື່ນໆໃຫ້ມີຄວາມອຸດົມສົມບູນ ແລະ ຍືນຍົງ.



> ການປັບປຸງຄະນະກຳມະການຄຸ້ມຄອງວັງສະຫງວນ:

ຄະນະກຳມະການຄຸ້ມຄອງວັງສະຫງວນ ທີ່ຖືກແຕ່ງຕັ້ງຂຶ້ນຕາມຂໍ້ຕົກລົງ ແມ່ນຕາງໜ້າມາຈາກຂະແໜງການຕ່າງໆຂອງໂຄງຮ່າງການຈັດຕັ້ງບ້ານ, ສະນັ້ນຖ້າຫາກມີການຄັດເລືອກຄະນະບ້ານຊຸດໃໝ່ອາດຈະເຮັດໃຫ້ມີການປ່ຽນແປງກ່ຽວກັບຜູ້ຮັບຜິດຊອບໃນບາງຂະແໜງການ ຫຼື ທັງໝົດຄະນະ, ໃນກໍລະນີທີ່ມີການປ່ຽນແປງດັ່ງກ່າວແມ່ນໃຫ້ປັບປຸງຜູ້ຮັບຜິດຊອບຄືນໃໝ່ໃນຄະນະກຳມະການຄຸ້ມຄອງວັງສະຫງວນ ຕາມການປັບປ່ຽນຄະນະອຳນາດການປົກຄອງບ້ານຕາມແຕ່ລະຂະແໜງການນັ້ນເລີຍ ແລະ ອົງການປົກຄອງບ້ານຂອງບ້ານຕ້ອງໄດ້ມີການແຈ້ງການປ່ຽນແປງດັ່ງກ່າວໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຮັບຊາບນຳ.

**ມາດຕາ 9 ບົດບັນຍັດສຸດທ້າຍ**

1) ກົດລະບຽບສະບັບນີ້ສ້າງຂຶ້ນໂດຍການຕົກລົງເຫັນດີເປັນເອກະພາບຂອງ ຄະນະກຳມະການຄຸ້ມຄອງວັງສະຫງວນຂັ້ນບ້ານ, ເຊິ່ງຜ່ານການປຶກສາຫາລື, ລົງປະຊາມະຕິ ແລະ ຖືກຮັບຮອງເອົາໂດຍອົງການປົກຄອງ ແລະ ປະຊາຊົນພາຍໃນບ້ານ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ຫ້ອງວ່າການປົກຄອງເມືອງໄຊຈຳພອນ, ຫ້ອງການຍຸຕິທຳເມືອງ ແລະ ທ່ານເຈົ້າເມືອງໄຊຈຳພອນ.
2) ກົດລະບຽບດັ່ງກ່າວນີ້ມີຜົນບັງຄັບໃຊ້ໄດ້ຈົນກວ່າຈະມີການປັບປຸງແກ້ໄຂ ຢ່າງເປັນທາງການຕາມທີ່ລະບຸໄວ້ໃນມາດຕາ 7 ຂ້າງເທິງນີ້.

ກົດລະບຽບສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ນັບແຕ່ມື້ລົງລາຍເຊັນຮັບຮອງເປັນຕົ້ນໄປ.

| | | |
|---|---|---|
| ຫ້ອງການ ຊສ ເມືອງ | ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ | ນາຍບ້ານບ້ານນ້ຳອ້ອນ |
| Khamphou INTHAVONG | | ໂນແພງ ສີໄຊປັນຍາ |
| ເຈົ້າເມືອງ | ຫ້ອງວ່າການເມືອງ | ຫ້ອງການຍຸຕິທຳເມືອງ |
| ໄກສອນ ຈັນສີນາ<br>Kaysone CHANSYNA | ໄຊ ແສງມະນີ | ໄຊຍະກອນ ໄຊນະເວີດ |

6


ຫ້າມຫາປາ
ເຂດວັງສະຫງວນ

ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ ເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ (ໂຄງການໄລຟ໌)

The Land Learning Initiative for Food Security Enhancement (LIFE) project